# ອານາຈັກ ຂຸນເຈືອງ

ອຸດົມ ສັກຕິຍະ
ດວງໄຊ ຫລວງພະສີ



ອຸທິນ ບຸນຍາວົງ

# ອານາຈັກຍຸນເຈືອງ

## ( ພາກທີໜຶ່ງ )

ຂຽນຮີບໂຮມ


ອຸດົມ ຂັດຕິຍະ

ດວງໄຊ ຫລວງພະສີ



ຈັດພິມໂດຍ

ປະທານ ຄະນະກຳມະການສູນກາງແນວລາວສ້າງຊາດ



© ສະຫງວນລິຂະສິດ



1996

✪ ທະບຽນພິມ 30/ພທປ/240596

✪ ພິມທີ່ໂຮງພິມ ຊາວຫນຸ່ມ

✪ ຂະຫນາດ 13 × 19 ຊຕມ

✪ ຈຳນວນ 3.000 ຫົວ

✪ ພິມແລ້ວ 01. 07. 1996

✪ແຕ້ມຮູບຫນ້າປົກ ບຸນມາ ວໍລະບຸດ

# ຄຳນຳ



ເລີ່ມແຕ່ຂ້າພະເຈົ້າອອກບວດ ແລ້ວກໍໄດ້ສຶກສາຄົ້ນຄວ້າເລື່ອງລາວພື້ນແຜ່ນເມືອງພວນ ແຂວງຊຽງຂວາງຫລາຍພໍສົມຄວນ ທັງເກີດມີຄວາມສົນໃຈ ເລື່ອງລາວຂອງຂຸນເຈືອງນີ້ເປັນພິເສດ ແມ່ນມີຄວາມເປັນມາຄືແນວໃດກັນແທ້ ?.

ອີງໃສ່ສະພາບການ ແລະ ວຽກງານຂອງຊາດຮຽກຮ້ອງຕ້ອງການ ຂ້າພະເຈົ້າຈຶ່ງໄດ້ລາສິກຂາບົດເຂົ້າສູ່ຖັນແຖວປະຕິວັດຕໍ່ສູ້ກູ້ຊາດໃນເວລາຕໍ່ມາ.

ໃນຊຸມປີ 1974- 1978 ຂ້າພະເຈົ້າ ເປັນເລຂາພັກແຂວງ ແລະເຈົ້າແຂວງໆຊຽງຂວາງ ໄດ້ແຕ່ງຕັ້ງ **ດວງໄຊ ຫລວງພະສີ** ເປັນເລຂາບຸການ ທັງເປັນຜູ້ຄົ້ນຄວ້າສັງລວມຂອງແຂວງ ຂ້າພະເຈົ້າຈຶ່ງໄດ້ມີທິດທາງໃຫ້ **ດວງໄຊ ຫລວງພະສີ** ຊອກຫາຕຳນານເອກະສານກ່ຽວກັບຂຸນເຈືອງ ແລະ ຄວາມເປັນມາທີ່ແທ້ຈິງຂອງໄທທີບຢູ່ໄລຍະຫນຶ່ງ ວຽກງານຢູ່ທາງສູນກາງທີ່ນະຄອນຫລວງວຽງຈັນຊ້ຳພັດຮຽກຮ້ອງຕ້ອງການ **ດວງໄຊ ຫລວງພະສີ** ຂຶ້ນມາປະຈຳຢູ່ສຳນັກງານນາຍົກລັດຖະມົນຕີ ການສຶກສາຄົ້ນຄວ້າຈຶ່ງຂາດວັກຂາດຕອນໄປ.

ປີ 1985 ຂ້າພະເຈົ້າໄດ້ພົບກັບ **ດວງໄຊ ຫລວງພະສີ**ອີກ ເຖິງວ່າຈະຢູ່ການຈັດຕັ້ງຕ່າງກັນ ແຕ່ພວກຂ້າພະເຈົ້າກໍໄດ້ຄົ້ນຄວ້າກ່ຽວກັບເລື່ອງຂຸນເຈືອງ ແລະ ເລື່ອງໄທທີບເລື້ອຍມາ ເພື່ອຈຸດປະສົງຢາກເຕົ໊າ

ໂຮມເລື່ອງດັ່ງກ່າວຈັດພິມອອກເຜີຍແຜ່ໃຫ້ປະຊາຊົນໄດ້ອ່ານ ແລະ ຄົ້ນຄວ້າ.

ມາຮອດມື້ນີ້ ການເຕົ້າໂຮມເລື່ອງລາວກ່ຽວກັບຂຸນເຈືອງ ແລະ ໄຫຫີນທີ່ໃຊ້ເວລາກວ່າຊາວປີ ຖືວ່າຄົບຖ້ວນດີພໍສົມຄວນ ຄຳທີ່ວ່າ ຄົບຖ້ວນດີພໍສົມຄວນ ກໍເພາະວ່າ ພວກຂ້າພະເຈົ້າໄດ້ຮົບໂຮມຕຳນານ ເອກະສານຕ່າງໆທັງຂອງຄົນລາວຂຽນ ແລະ ທັງຂອງຄົນຕ່າງປະເທດຂຽນ ແລ້ວນຳເອົາຮຽບຮຽງຮົບໂຮມເອົາແຕ່ບ່ອນທີ່ກ່າວເຖິງຂຸນເຈືອງ ແລະ ໄຫຫີນ ເພື່ອໃຫ້ເຂົ້າໃຈຢ່າງແຈ່ມແຈ້ງວ່າ ຂຸນເຈືອງທີ່ມີເລື່ອງລາວກ່າວຂານກັນມາດົນນານນັ້ນຄືແນວໃດກັນແທ້ ?. ໄຫຫີນແມ່ນສ້າງຂຶ້ນສະໄຫມໃດກັນແທ້ ? ເພື່ອໃຫ້ຄົນຊາວຊຽງຂວາງໄດ້ອ່ານ ແລະ ເຂົ້າໃຈ ເພື່ອໃຫ້ຊາວລາວທັງຊາດໄດ້ອ່ານ ແລະ ເຂົ້າໃຈ ແລະ ເພື່ອໃຫ້ຊາວໂລກໄດ້ອ່ານ ແລະ ເຂົ້າໃຈ ເຊິ່ງເປັນການຂຽນຮົບໂຮມໂດຍສະເພາະເຈາະຈົງແຕ່ເລື່ອງຂຸນເຈືອງ ແລະ ການສ້າງໄຫຫີນ ແລະ ເຕົ້າໂຮມເອົາຫລາຍຄວາມຄິດຄວາມເຫັນຈາກນັກປາດອາຈານທີ່ໄດ້ສຶກສາຄົ້ນຄວ້າກ່ຽວກັບເລື່ອງນີ້ມາກ່ອນ ເພື່ອໃຫ້ຜູ້ອ່ານໄດ້ອ່ານ ແລະ ພິນິດພິຈາລະນາເບິ່ງວ່າ ເລື່ອງລາວໄດ້ເປັນມາຄືແນວນັ້ນ ແມ່ນຖືກຫລື ບໍ່ ? ສົມເຫດສົມຜົນຫລືບໍ່ ? ຫລືຜູ້ອ່ານຍັງມີເອກະສານນອກເຫນືອຈາກທີ່ໄດ້ກ່າວມານີ້ ຈະປະກອບຄຳເຫັນຮ່ວມກັບພວກຂ້າພະເຈົ້າກໍຍິ່ງເປັນການດີ ເພື່ອການຈັດພິມເທື່ອຕໍ່ໆໄປຈະເຮັດໃຫ້ຕຳນານອັນນີ້ອຸດົມຮັ່ງມີຂຶ້ນຕື່ມ.

ເລື່ອງຂຸນເຈືອງກ່ອນນີ້ຫລາຍຮ້ອຍປີອາດຈະເປັນເລື່ອງຈິງ ຫລື ນິຍາຍອິງປະຫວັດສາດຄືແນວໃດນັ້ນ ກໍຖືວ່າເປັນວັນນະຄະດີທີ່ມີ

ຄຸນຄ່າຂອງຊາດລາວເຮົາ ສົມຄວນແກ່ການຖະນຸຖະໜອມ ແລະ ປົກປັກຮັກສາ ເພື່ອຮຽນຮູ້ຮ່ອງຮອຍປະຫວັດສາດຂອງປະເທດຊາດບ້ານເມືອງ ເພາະປະຫວັດສາດຂອງຊາດນັ້ນມີຢູ່ທຸກທີ່ທຸກບ່ອນ ມີຢູ່ບ່າແຕ່ລະປະຊາຊົນຄົນລາວ ຈຶ່ງບໍ່ມີໃຜສາມາດຮິບໂຮມເຂົ້າມາໃຫ້ສົມບູນແບບປຶດໜຶ່ງ ຍາມດຽວໄດ້ ຈຶ່ງຕ້ອງອາໄສທຸກຄົນ ແລະ ອາໄສການເກັບກຳແລ້ວຈັດພິມເຜີຍແຜ່ອອກຫລາຍເທື່ອ ແລະ ເຮັດໄປເລື້ອຍໆຢ່າງຕໍ່ເນື່ອງ ເພື່ອໃຫ້ມີຫລາຍຕຳນານເອກະສານຫລາຍຂໍ້ມູນອຸດົມຮັ່ງມີ ແລະ ສິ່ງທີ່ເປັນໜ້າຍ້ອງຍໍສັນລະເສີນຢ່າງຍິ່ງກໍຄືນ້ຳໃຈຂອງນັກປະພັນ **ດວງໄຊ ຫລວງພະສີ** ທີ່ໄດ້ມີຄວາມອົດທົນ ຕັ້ງໃຈຈິງຕໍ່ການສຶກສາຄົ້ນຄວ້າເລື່ອງນີ້ເປັນເວລາຍາວນານ ແລະ ຫລາຍບັ້ນຫລາຍຕອນຮ່ວມກັນມາ ຈຶ່ງໄດ້ເກີດເປັນປຶ້ມຫົວນີ້ອອກມາ.

ຢູ່ໃນປຶ້ມ " ອານາຈັກຂຸນເຈືອງ" ຫລັ້ມນີ້ ຍັງມີຄວາມຮູ້ຮອບຕົວ ແລະ ສິ່ງລະອັນພັນລະນ້ອຍປະກອບເຂົ້າກັບເພີ່ມພູນຄູນປັນຍາໃຫ້ທ່ານຜູ້ອ່ານເປັນຄູ່ມືທີ່ຄວນມີໄວ້ ເພື່ອຊ່ວຍເຫລືອໃນເວລາສຶກສາຄົ້ນຄວ້າ ແລະ ຮຽນຮູ້ປະຫວັດສາດຄວາມເປັນມາຂອງຊາດລາວຂອງເຮົາ

**ວຽງຈັນ, ວັນທີ 01 . 05. 1996**

**ປະທານຄະນະປະຈຳສູນກາງແນວລາວສ້າງຊາດ**

**ທ່ານ ອຸດົມ ຂັດຕິຍະ**



**ທ່ານ ອຸດົມ ຂັດຕິຍະ** (1) ກຳລັງປຶກສາຄົ້ນຄວ້າ ຂຽນຮິບໂຮມເລື່ອງລາວອານາຈັກຂຸນເຈືອງຮ່ວມກັບນັກປະພັນ **ດວງໄຊ ຫລວງພະສີ** ເປັນເທື່ອສຸດທ້າຍ ກ່ອນຈະເອົາຈັດພິມອອກເຜີຍແຜ່.

---

(1) ທ່ານອຸດົມຂັດຕິຍະ ກຳມະການກົມການເມືອງສູນກາງພັກ ປະທານຄະນະກຳມະການສູນກາງແນວລາວສ້າງຊາດ ຜູ້ຊີ້ນຳວຽກງານການຈັດຕັ້ງມະຫາຊົນ ຂັ້ນສູນກາງ.

# ຜູ້ຂຽນຮີບໂຮມ



ກໍ່ໄດ້ວ່າ... ເປັນການຂຽນຮີບໂຮມປຶ້ມທີ່ໃຊ້ເວລາຍາວນານກວ່າສອງທົດສະວັດ ແລະ ການຂຽນກໍ່ບໍ່ໄດ້ຕໍ່ເນື່ອງ ແຕ່ກໍ່ພະຍາຍາມບໍ່ທໍ້ຖອຍ ເພື່ອເຮັດໃຫ້ປຶ້ມ " **ອານາຈັກຂຸນເຈືອງ** " ອອກສູ່ສາຍຕາມວນຊົນປະຊາຊົນຄົນລາວໄດ້ຊົມໃຊ້.

ສິ່ງທີ່ທີ່ຂ້າພະເຈົ້າມີກຳລັງໃຈ ແລະ ພູມໃຈຢ່າງລົ້ນເຫລືອກໍ່ແມ່ນຄວາມເອົາໃຈໃສ່ທີ່ສົນອົກສົນໃຈ ໃກ້ຊິດຕິດແທດຂອງ**ທ່ານອຸດົມ ຂັດຕິຍະ** ທ່ານໄດ້ໃຫ້ທັດສະນະທີ່ເປັນຕັກກະວິທະຍາ ເພື່ອພ້ອມກັບຮີບໂຮມເລື່ອງລາວອັນເປັນປະຫວັດສາດຂອງຊາດນີ້ໃຫ້ເປັນສະບັບທີ່ສົມບູນແບບເທົ່າທີ່ຈະເຮັດໄດ້.

ຈຶ່ງຂໍຝາກປຶ້ມອານຸສອນທາງປະຫວັດສາດຫົວນີ້ໄວ້ກັບແຜ່ນດິນເມືອງພວນຊຽງຂວາງ ເຊິ່ງຄັ້ງໜຶ່ງ ການເວລາຍາວນານເກືອບ 2 ທົດສະວັດທີ່ ໄດ້ຫລໍ່ລ້ຽງໃຫ້ເຕີບໃຫຍ່ ແລະ ຮຽນຮູ້ " **ປັດຊະຍາຊີວິດ** " ຢູ່ດິນແດນຕອນນີ້ ຢ່າງໜ້າພາກພູມ.

ຈຶ່ງຫວັງວ່າ ປຶ້ມ " **ອານາຈັກຂຸນເຈືອງ** " ຈະເປັນປະໂຫຍດໃຫຍ່ຫລວງໃຫ້ແກ່ການສຶກສາຄົ້ນຄວ້າ ເພີ່ມພູນຄູນສ້າງປັນຍາຄວາມຮູ້ໃຫ້ແກ່ທຸກທ່ານທີ່ໄດ້ຊົມໃຊ້...

● **ດວງໄຊ ຫລວງພະສີ**

# ສາລະບານ

## ຕອນທີໜຶ່ງ

- ຄວາມເປັນມາຂອງໂລກ ໜ້າທີ ...... 1
- ຄວາມເປັນມາຂອງມະນຸດ 1
- ມະນຸດທີ່ອາໄສຢູ່ສຸວັນນະພູມປະເທດ 2
- ຊາດທີ່ອາໄສຢູ່ອິນດູຈີນກ່ອນ 3
- ອານາຈັກຊາດຂອມ 4
- ການເດີນທາງຂອງເຜົ່າຄົນລາວ 5
- ພວກອ້າຍລາວ 6
- ເຜົ່າລາວທີ່ອານາຈັກໜານອງແສ 9
- ຄຳທີ່ວ່າ " ລາວ " 10
- ຄຳທີ່ວ່າ " ອ້າຍລາວ " 11
- ຄຳທີ່ວ່າ " ໄທ " ຫລື " ໄທ້ " 12
- ຄຳທີ່ວ່າ " ມົງ ຫລື ມຸງ ຫລື ເມືອງ " 13
- ລາວກັບລະວ້າ ຫລື ລົວະ 14
- ປະເພດຂອງ " ເຜົ່າລາວ " 14
- ພວກ " ໄທ " ຕ່າງໆ ... 16

## ຕອນທີສອງ

### ອານາຈັກຂຸນເຈືອງ

- ເລື່ອງທ້າວຮຸ່ງ ຫລື ທ້າວຢີ່ 21

- ວິງກະສັດທີ່ປົກຄອງເມືອງພະເຢົາ ຫນ້າທີ ...... 34
- ວິງກະສັດປົກຄອງເມືອງເງິນຍາງ 36

## ຕອນທີສາມ

### ຕໍານານຕ່າງໆ ... ທີ່ກ່າວເຖິງຂຸນເຈືອງ

- ຕາຕະລາງ (1) ອານາຈັກຫນອງແສ 41
- ຕາຕະລາງ (2) ຣາຊະວົງລາວຈົກ 42
- ຂໍ້ມູນທີ່ກ່າວເຖິງຂຸນເຈືອງ 43
( ປຶ້ມພົງສາວະດານລາວພິມປີ 1973 )
- ປຶ້ມພາສາວັນນະຄະດີ ແລະ ວັດທະນະທໍາຕາເວັນອອກ 46
- ພົງສາວະດານລາວພິມປີ 1957 49
- ປຶ້ມເລົ່າເລື່ອງລາວໄທພິມປີ 1967 50
- ລໍາດັບສະໄຫມເມືອງທີລັບເງິນຍາງ 51
- ລໍາດັບສະໄຫມຊຽງແສນຫລືທີລັບເງິນຍາງ 52
- ດໍາລັດສະໄຫມນະຄອນຊຽງໃຫມ່ຣາຊະທານີ 53

## ຕອນທີສີ່

### ໄທທີນ ຫລື ໄທເຫລົ້າເຈືອງ

- ອ້າງອີງເຖິງຄໍາເວົ້າຂອງນັກວິທະຍາສາດ 56
- ເລື່ອງໄທເຫລົ້າເຈືອງ (ບົດຄົ້ນຄວ້າ ໆ... 57

- ຢູ່ປື້ມປະຫວັດສິລະປະ ແລະ ສະຖາປັດ ຕະຍະກຳສິບລາວ    ໜ້າທີ ...... 61
- ຂຸນເຈືອງໂດຍສະຫລຸບ 63
- ຜີຂຸນເຈືອງ 68
- ເລົ່າສູ່ກັບຟັງເລື່ອງການສ້າງໄຫຫີນ 70

## ຕອນທີສາ

## ໄຫຫີນ ຫລື ໄຫເຫລົ້າເຈືອງ

- ວິເຄາະກ່ຽວກັບເລື່ອງຂຸນເຈືອງ 72
- ວິເຄາະກ່ຽວກັບໄຫຫີນ 75
- ລຳດັບເຊື້ອເຈົ້າວົງກະສັດ ໆ ... 77

# ຄວາມເປັນມາຂອງໂລກ

ໜ່ວຍ ໂລກທີ່ເຮົາອາໄສຢູ່ນີ້ ແມ່ນກ້ອນຫີນກ້ອນໜຶ່ງທີ່ຟົ້ງອອກມາຈາກດວງຕາເວັນກ່ອນນີ້ປະມານ 4.600 ລ້ານປີ ແລະ ຜ່ານຂະບວນວິວັດທະນາການ ເຊິ່ງເປັນໄປຕາມກົດເກນທຳມະຊາດອັນດົນນານນັ້ນ ກ້ອນຫີນກ້ອນນີ້ຈຶ່ງໄດ້ກາຍເປັນໜ່ວຍໂລກທີ່ຈົບງາມ ມີດິນ ມີນ້ຳ ມີລົມ ມີອາກາດ ມີກົກໄມ້ ໃບຫຍ້າ ມີສັດ ແລະ ມະນຸດອາໄສຢູ່.

ຕາມການສຶກສາຄົ້ນຄວ້າຂອງນັກວິທະຍາສາດໂລກຊາວຕາເວັນຕົກ ແລະ ຊາວຕາເວັນອອກໄດ້ໃຫ້ຂໍ້ສະຫລຸບເປັນເອກະສັນນຳກັນວ່າ " ໂລກທີ່ຄົນເຮົາອາໄສຢູ່ນີ້ມີອາຍຸມາໄດ້ປະມານ 4.600 ລ້ານປີ ເປັນດາວພະເຄາະດວງໜຶ່ງດວງດຽວທີ່ມີສິ່ງທີ່ມີຊີວິດອາໄສຢູ່ ແລະ ໝູນອ້ອມດວງຕາເວັນ ຫລື ຈະເອີ້ນອີກວ່າ " ລູກພິພົບ " ກໍໄດ້.

ດວງພະເຄາະ ຫລື ລູກພິພົບທີ່ໝູນອ້ອມດວງຕາເວັນທີ່ນັກວິທະຍາສາດຄົ້ນພົບ ນອກຈາກໜ່ວຍໂລກນີ້ແລ້ວ ຍັງມີ ດາວພຸດ ( **MERCURY** ) ດາວສຸກ ( **VENUS** ) ດາວອັງຄານ ( **MARS** ) ດາວພະຫັດ ( **JUPITER** ) ດາວເສົາ ( **SATURN** ) ດາວມັດຈຸຣາດ ( **URANNUS** ) ດາວເນບຈູນ ( **NEPTUNE** ) ແລະ ດາວພູໂຕ ( **PLUTO** ) ທັງໝົດນີ້ນັກວິທະຍາສາດຄົ້ນພົບເມື່ອປີ ຄ.ສ 1930.

## ຄວາມເປັນມາຂອງມະນຸດ

ມະນຸດໄດ້ປາກົດເປັນມະນຸດຢ່າງສົມບູນແບບແທ້ນັ້ນ ໄດ້ມີມາລະຫວ່າງ

35.000 ປີມານີ້ເທົ່ານັ້ນ.

ທົ່ວທັງໂລກມີມະນຸດຢູ່ຫລາຍຮ້ອຍເຜົ່າພັນ ແລະ ຫລາຍພັນກຸ່ມ ທີ່ອາໄສຢູ່ຕາມປ່າດົງພົງໄພ ແລະ ພູຜາ ຖໍ້າເຫວ ເຊິ່ງຜ່ານວິກິດການແຫ່ງວິວັດທະນາການທີ່ເປັນໄປ ແລະ ເປັນມາຕາມທຳມະຊາດຂອງໂລກ ແຕ່ລະຍຸກແຕ່ສະໄໝ ເຊັ່ນ ຍຸກປາ ຍຸກຖານຫີນ ຍຸກກຳເນີດກໍຫຍ້າຕົ້ນໄມ້ ຍຸກກຳເນີດພວກແມງໄມ້ ຍຸກຫີນກາງ ( ຍຸກຂອງສັດເລືອຄານ ) ຍຸກຈຳພວກນົກ ແລະ ສັດລ້ຽງລູກດ້ວຍນໍ້ານົມເທື່ອທຳອິດ ຍຸກສັດລ້ຽງລູກດ້ວຍນົມ ຍຸກລີງໂທນ ແລະ ຄົນ ຍຸກຄົນດຶກດຳບັນ ແລະ ຄົນໂຣເດຊຽນ ຍຸກແນວຄິດຂອງມະນຸດດຶກດຳບັນ ຍຸກປະດິດຕົວໜັງສືມະນຸດ ຍຸກມະນຸດພະເນຈອນ ຍຸກມະນຸດຮູ້ໃຊ້ເຮືອເດີນທະເລ ຍຸກມະນຸດມີຊີວິດໃນສັງຄົມ ຈົນມາເຖິງຍຸກມະນຸດມີລັດທິ ແລະ ສາສະໜາ... ເຊິ່ງມະນຸດໄດ້ວິວັດທະນາການຕົນເອງເລື້ອຍໆມາເປັນພັນໆປີ ເພື່ອຄວາມຢູ່ລອດແລະ ຕໍ່ສູ້ກັບທຳມະຊາດ.

## ມະນຸດ
## ທີ່ອາໄສຢູ່ສຸວັນນະພູມປະເທດ

***ແຜ່ນ*** ດິນອັນກວ້າງໃຫຍ່ໄພສານ ( ປັດຈຸບັນແມ່ນປະເທດຈີນ ເນປານ ມຽນມາ ໄທ ລາວ ຫວຽດນາມ ແລະ ກຳປູເຈຍ ) ເປັນແຜ່ນດິນທີ່ກວ້າງໃຫຍ່ ແລະ ເປັນປ່າຮົກດົງໜາ ມີມະນຸດອາໄສຢູ່ແບບຍົງຍາຍຕາມປ່າດົງ ຕາມພູຜາ ຕາມຖໍ້າຕາມເຫວເປັນກຸ່ມ ເປັນກ້ອນ ເປັນເຜົ່າໃຜເຜົ່າລາວ ມະນຸດບໍ່ທັນຮູ້ຈັກສ້າງບ້ານແປງເມືອງ ຮູ້ຈັກແຕ່ທຳມາຫາກິນລ້ຽງຊີບຕາມທຳມະຊາດ ແລະ ຕໍ່ສູ້ຂັບໄລ່ເຜົ່າອື່ນອອກໄປຈາກເຜົ່າຂອງຕົນ ເມື່ອເຫັນເຜົ່າອື່ນລ່ວງລໍ້າເຂົ້າມາເຖິງເຂດເຜົ່າຂອງຕົນ ຕໍ່ມາກໍຍາດບ່ອນ

ທຳມາຫາກິນຂອງກັນແລະກັນ ຍາດຊີງເຂດແດນກັນ.

ມະນຸດຈຶ່ງຮູ້ຈັກປ້ອງກັນຕົວ ດ້ວຍການລວມກັນເຂົ້າເປັນປຶກແຜ່ນ ຕັ້ງກຳແພງຮັກສາເຂດເມືອງ ແລ້ວກໍກາຍເປັນເມືອງໃຜເມືອງລາວ ເຊິ່ງຈາກກ້ອນເປັນກຸ່ມ ຈາກກຸ່ມເປັນເມືອງ ແລະ ຈາກເມືອງເປັນນະຄອນ ແລະອານາຈັກເພື່ອເຕົ້າໂຮມ ແລະ ປົກຄອງກຸ່ມຄົນເຜົ່າພັນຂອງຕົນເອງ.

# ຊົນຊາດທີ່ອາໄສຢູ່ອິນດູຈີນກ່ອນ

ບະ ທີ່ແຜ່ນດິນສອງຟາກຝັ່ງແມ່ນ້ຳຂອງ ( ປັດຈຸບັນແມ່ນປະເທດ ລາວໄທ ແລະ ກຳປູເຈຍ ) ໄດ້ມີຄົນພວກໜຶ່ງອາໄສຢູ່ກ່ອນແລ້ວ ຄົນພວກນີ້ແມ່ນຊົນຊາດຂອມ ຫລື ຂະມຸ ທີ່ມີຖິ່ນກຳເນີດແຕ່ງບັນພະບຸຣຸດ ຢູ່ທີ່ປະເທດອິນເດຍໂບຮານແຖບຊາຍແດນ.

ກົກປາຍສາຍເຫດທີ່ຊົນເຜົ່າຂອມໄດ້ອົບພະຍົບລົງມາຢູ່ແຫລມອິນດູຈີນກ່ອນເຜົ່າໃດທັງໝົດ ກໍເພາະ ລະຫວ່າງຊຸມປີ ພ.ສ 218-227 ພະເຈົ້າແຜ່ນດິນແຫ່ງອິນເດຍຊື່ງພະນາມວ່າ ພະເຈົ້າອະໂສກະມະຫາຣາດ ( ໂອຣົດຂອງພະເຈົ້າຈັນທະຣະຄູບຕະ ) ໄດ້ປົກຄອງອິນເດຍ ແລະ ທຳເສິກສົງຄາມອ້າຟັນລັບແທງກັນຢູ່ຕະຫລອດເວລາ ໂດຍສະເພາະ ຕອນພະອົງຍົກທັບໃຫຍ່ໄປຕີເອົາແຄວ້ນກະລິງຄະ ( **KALINGA** )ໃນແຖບຝັ່ງທະເລຕາເວັນອອກຂອງອິນເດຍ ໃນການສົງຄາມຄັ້ງນັ້ນ ເປັນສົງຄາມໃຫຍ່ເພື່ອເຕົ້າໂຮມແຜ່ນດິນ ແລະ ປະເທດອິນເດຍໃຫ້ເປັນປຶກແຜ່ນ ຜູ້ຄົນຈຶ່ງລົ້ມຕາຍຢ່າງຫລວງຫລາຍ.

ພໍເຂົ້າຄອບຄອງແຄ້ນ " ກາລິງຄະ " ໄດ້ແລ້ວ ພະອົງເກີດມີຄວາມເບື່ອໜ່າຍໃນການທຳສົງຄາມ ສົງຄາມທີ່ເອົາຊະນະຄົນດ້ວຍອາວຸດຍຸດທະ

ພົນ ແຕ່ເອົາຊະນະຈິດໃຈຄົນບໍ່ໄດ້.

ພະອົງຈຶ່ງຫັນມາເຫລື້ອມໃສໃນປັຣຊະຍາແຫ່ງພຸທທະສາສະໜາ ແລະ ຍອມຖວາຍຕົວເປັນພຸດທະສາວົກ ຍົກພຸດທະສາສະໜາເປັນສາສະໜາປະຈຳຊາດ ປະກາດໃຫ້ຄົນອິນເດຍທົ່ວປະເທດນັບຖືສາສະໜາພຸດ ເພື່ອພະອົງຈະໄດ້ເອົາຊະນະຈິດໃຈຄົນດ້ວຍທັມ ( ເພາະສາສະໜາພຸດຖືກຫລົງລືມໄປໄລຍະໜຶ່ງແລ້ວ) ທັງໄດ້ສົ່ງທັມມະທູດນຳເອົາສາສະໜາພຸດໄປເຜີຍແຜ່ໃນປະເທດທີ່ຢູ່ໃກ້ຄຽງ.

ດັ່ງນັ້ນ ຄົນອິນເດຍທີ່ອາໄສຢູ່ຕາມຊາຍແດນສ່ວນຫລາຍທີ່ນັບຖືສາສະໜາອື່ນຢູ່ກ່ອນແລ້ວ ຈຶ່ງບໍ່ຍອມຮັບເອົາສາສະໜາພຸດ ແລ້ວກໍພາກັນແຕກໜີມາຢູ່ແຜ່ນດິນອິນດູຈີນ ຫລື ແຜ່ນດິນແຫລມທອງແຕ່ບັດນັ້ນ.

# ອານາຈັກຂອມ

**ຂອມ** ຫລື ອິນເດຍໂບຮານໄດ້ມາຕັ້ງຖິ່ນຖານ ແລະ ສ້າງປະເທດແຫລມທອງ ຫລື ອິນດູຈີນຈະເລີນຮຸ່ງເຮືອງ ແລະ ເກີດເປັນ 2 ອານາຈັກໃຫຍ່ຄື :

**1. <u>ອານາຈັກທະວາຣາວະດີ ຫລື ອານາຈັກສີວິໄຊ</u> :**

ອານາຈັກນີ້ຕັ້ງຢູ່ທາງທິດຕາເວັນຕົກ ນັບຕັ້ງແຕ່ເຂດແດນເມືອງນະຄອນປະຖົມ ( ໃນປະເທດໄທປັດຈຸບັນ ) ໄປເຖິງປະເທດມອນ (ພະມ້າ ) ທາງທິດຕາເວັນອອກ ຕະຫລອດເຖິງປະເທດມາລາຢູ.

**2. <u>ອານາຈັກສີໂຄດຕະປູຣະ ຫລື ໂຄດຕະບູນ</u> :**

ອານາຈັກນີ້ຕັ້ງຢູ່ທາງທິດຕາເວັນອອກ ໃນພື້ນທີ່ດິນຕອນໃຕ້ ອັນເປັນເຂດແຂວງຄຳມ່ວນປັດຈຸບັນ ລົງໄປຈົນເຖິງປະເທດຂະເມນ ( ປະເທດກຳປູ

(ຈຍ) ເລື່ອງລາວກ່ຽວກັບອານາຈັກສີໂຄດຕະບູນ ຈຶ່ງເກີດເປັນຕຳນານກ່າວ ຂານສືບທອດຕໍ່ກັນມາຢ່າງເປັນເລື່ອງລາວຫລາຍສິ່ງຫລາຍຢ່າງ ທີ່ນັກປະດິດຄິດແຕ່ງ ນັກປາດອາຈານໄດ້ຜູກຮ້ອຍເລື່ອງລາວເປັນນິທານປະຣຳປະຣາໃຫ້ສົມຈິງ ທັງນຳເອົາຄວາມສັກສິດຂອງພະພຸດທະເຈົ້າເຂົ້າມາກ່ຽວຂ້ອງຈົນກາຍເປັນຄວາມເຊື່ອຈົນແຍກແຍະບໍ່ອອກໄດ້ວ່າ ອັນໃດຄືຄວາມຈິງ ? ອັນໃດຄືນິທານປະຣຳປະຣາ ແລະ ອັນໃດຄືຕຳນານທີ່ແທ້ຈິງ ? ຈຶ່ງມີຄວາມຈຳເປັນຈະຕ້ອງລົງເລິກສຶກສາຄົ້ນຄວ້າ ເພື່ອແຍກແຍະຄວາມຈິງໃຫ້ເກີດປະໂຫຍດສູງສຸດ ແກ່ປະຫວັດສາດຂອງຊາດ.

# ການເດີນທາງຂອງເຜົ່າຄົນລາວ

**ກ່ອນ**ນີ້ຫລາຍພັນປີ ໄດ້ເກີດມີຊົນເຜົ່າໜຶ່ງຢູ່ຮ່ວມກັນເປັນກຸ່ມກ້ອນອາໄສທຳມາຫາກິນຢູ່ບໍລິເວນຕີນພູເຂົາອັນໄຕ ຫລື ພູເຂົາແອນໄຕທາງເບື້ອງທິດເໜືອ ( ປັດຈຸບັນແມ່ນປະເທດມົງໂກເລຍ ).

ແລ້ວພວກຄົນຊົນເຜົ່າດັ່ງກ່າວກໍພາກັນອົບພະຍົບລົງມາທາງທິດໃຕ້ເລື້ອຍໆ... ດ້ວຍຈຸດປະສົງຊອກຫາບ່ອນທຳມາຫາກິນທີ່ດີກວ່າ.

ຄົນຊົນເຜົ່າພວກນີ້ ໄດ້ມາຕັ້ງຮາກຖານສ້າງບ້ານແປງເມືອງຢູ່ເລາະຕາມແມ່ນ້ຳຮວງໂຫ ແລະ ແມ່ນ້ຳແຍງຊີຈຽງ ( ດິນແດນຈີນໃນປັດຈຸບັນ ) ມີເມືອງຊື່ວ່າ " ເມືອງລຸງ " ແລະ " ເມືອງປາ " ( ເມືອງລຸງຢູ່ທາງເໜືອຕາມແມ່ນ້ຳຮວງໂຫ ສ່ວນເມືອງປາຢູ່ທາງໃຕ້ເລາະຕາມແມ່ນ້ຳແຍງຊີຈຽງ ).

ຄົນເຜົ່າຈີນທີ່ອາໄສຢູ່ທາງທິດຕາເວັນອອກໄດ້ເດີນທາງຜ່ານໄປຜ່ານມາແວ່ເຊົາພວກເຜົ່າຊົນຊຸມນີ້ ເຫັນວ່າພວກເຜົ່າຊົນຊຸມນີ້ຢູ່ຮ່ວມກັນ


ການອົບພະຍົບ
ຂອງຄົນເຜົ່າລາວ
ມອງໂກເລຍ
ນະຄອນລຸງ
ນະຄອນປາ
ອານາຈັກໜອງແສ
ອາສົມ
ແຖນ
ເກົາຈີ
ສຽງແສນ
ສຽງໃໝ່
ສຸໂຂໄທ
ແປ
ບາງກອກ
ບ່ອນກຳເນີດເຊື້ອຊາດລາວ
ເສັ້ນທາງອົບພະຍົບ

ເປັນປຶກແຜ່ນ ມີຄວາມສະໜານສາມັກຄີກັນດີ ແລະ ຢູ່ຮ່ວມກັນຢ່າງມີຄວາມສຸກ ຈຶ່ງເອີ້ນຜົ່າຄົນພວກນີ້ວ່າ " ພວກດາວ " ອັນໝາຍເຖິງຜົ່າຄົນທີ່ມີວັດທະນະທຳສູງສົ່ງເໝືອນດັ່ງດາວຢູ່ເທິງຟ້າ ບາງຜົ່າຂອງຈີນກໍເອີ້ນວ່າ " ພວກມຸງ " ບາງຜົ່າຂອງຈີນກໍເອີ້ນວ່າ " ພວກລາວ " ຕາມສຳນຽງສຽງເວົ້າພ້ຽນໄປຕາມພາສາຄຳເວົ້າຂອງແຕ່ລະຜົ່າ.

# ພວກອ້າຍລາວ

ຕໍ່ມາ ພວກຈີນກັບພວກຕາກ ຫລື ພວກຕາດ ຫລື ພວກຕາຕ່າຣົບເຣືອກັນ ມີອັນເດືອດຮ້ອນມາເຖິງພວກຄົນດາວ ຫລື ພວກຄົນລາວ ພວກຄົນລາວຈຶ່ງສ້າງເມືອງຢູ່ທາງທິດຕາເວັນຂຶ້ນອີກເມືອງໜຶ່ງຊື່ວ່າ " ເມືອງຊຽງອານ ".

ສົງຄາມບໍ່ໄດ້ຢຸດຢູ່ທີ່ນັ້ນ ພວກຄົນລາວພອຍຮັບເອົາຊາຕາກັມໄປດ້ວຍ ເຊິ່ງບໍ່ພຽງແຕ່ພວກຈີນຣົບກັບພວກຕາກ ຈີນຍັງຣົບກັບພວກຄົນລາວຕື່ມ ພວກຄົນລາວຈຶ່ງອົບພະຍົບລົງສູ່ໃຕ ແລະ ໄປທາງທິດຕາເວັນຕົກ ເພື່ອສ້າງເມືອງຂຶ້ນໃໝ່ຂຶ້ນຄື: ເມືອງເສສອນ ເມືອງງຽວ ແລະ ເມືອງເພງາຍ.

ສົງຄາມຍັງບໍ່ໄດ້ລົດລະ ເມື່ອພວກຈີນຍັງເຮັດເສິກກັບພວກຄົນລາວຢູ່ ພວກຄົນລາວຈຶ່ງອົບພະຍົບລົງທາງໃຕ້ອີກ ແລ້ວສ້າງເມືອງນະຄອນແຖນຂຶ້ນເປັນອານາຈັກ [1] ມີເມືອງປາກອ້າຍ ເປັນເມືອງຫລວງ ເມື່ອປີ ພ.ສ

---

(1) ຊື່ເມືອງ ຊື່ນະຄອນ ແລະ ຊື່ອານາຈັກທີ່ປະຫວັດສາດ ຫລືພົງສາວະດານກ່າວເອົາໄວ້ແຕ່ລະສະບັບບໍ່ຄືກັນ ຈຶ່ງຈຳເປັນຕ້ອງອ່ານຫລາຍຫລືບຫລາຍເທ່າດ້ວຍການພິນິດພິຈາລະນາຄັກແນ່ ຈຶ່ງຈະແຍກແຍະ ແລະ ເຂົ້າໃຈໄດ້.

289 ກໍຍັງບໍ່ມີມຈາກການຮາວີຈາກພວກຈີນຢູ່ອີກ ເມື່ອປີ ພ.ສ 456.

ພວກຄົນລາວທີ່ອານາຈັກແຖນ ຈຶ່ງຍົບລົງມາຢູ່ທາງໃຕ້ບໍລິເວນທົ່ງນານ້ອຍອ້ອຍໜູ ແລະ ຕັ້ງຊື່ເມືອງວ່າ " ອານາຈັກໜອງແສ " ເປັນການໂຮມເຜົ່າພັນພວກຄົນລາວທັງມວນ ແລ້ວເອີ້ນຕົວເອງວ່າ " ພວກອ້າຍລາວ " ຄຳທີ່ວ່າ " ອ້າຍລາວ " ຈຶ່ງມີມາແຕ່ບັດນັ້ນ ເຊິ່ງມີຄວາມໝາຍວ່າ " ລາວໄດ້ປະກາດ ເປັນເອກະລາດ " ນະເມື່ອນັ້ນ ແລະ ໄດ້ເອົາເມືອງຮຸ່ງ ຫລືເມືອງກາຫລົງ [1] ເປັນນະຄອນຫລວງ ແລະ ສ້າງຕັ້ງເມືອງຂຶ້ນອີກ 6 ເມືອງ ມີຄວາມເປັນເອກະລາດ ແລະ ມີຄວາມເຂັ້ມແຂງປົກປ້ອງຕົນເອງມາເຖິງສະໄໝຂຸນບໍຣົມຣາຊາທິຣາດ ເມື່ອປີ ພ.ສ 733 ( ປີ ຄ.ສ 190 ).

ອານາຈັກແຖນ ຫລື ອານາຈັກໜອງແສຮຸ່ງເຮືອງສຸດຂີດໃນສະໄໝຂຸນບໍຣົມຣາຊາທິຣາດ ພະອົງມີໂອຣົດ 7 ພະອົງ ທີ່ປະສູດຈາກມະເຫສີ 2 ພະອົງຄື: ເອກອັກຄະມະເຫສີ ພະນາງຍົມພາລາ ແລະ ພະນາງເອັດແຄງ " ເທວີຊາຍ ".

ຂຸນບໍຣົມຣາຊາທິຣາດ ຈຶ່ງສົ່ງລູກທັງ 7 ໄປປົກຄອງເມືອງ ທັງ 7 ( ອັນທີ່ຈິງແລ້ວແມ່ນໄປຕໍ່ສູ້ເອົາເມືອງທັງ 7 ເພື່ອໃຫ້ພົ້ນກັບ ແລະ ປົກຄອງ) ຢູ່ໃນພົງສາວະດານທັງ 4 ສະບັບໄດ້ກ່າວຊື່ເມືອງທັງ 7 ທີ່ໂອຣົດຂອງຂຸນບໍຣົມທັງ 7 ໄປປົກຄອງນັ້ນໄວ້ບໍ່ຄືກັນ ດັ່ງນີ້ :

## I . <u>ພົງສາວະດານລ້ານຊ້າງ</u> :

1. ຂຸນລໍ ໄປຄອງເມືອງ ຊວາ ( ຫລວງພະບາງ )

---

(1) ເປັນເມືອງກາຫລົງທຳອິດ ສ່ວນເມືອງກາຫລົງທີສອງຢູ່ເມືອງແຖນ ຫລືເມືອງແຖງເວລາຕໍ່ມາ.

2. ຜາລ້ານ ໄປຄອງເມືອງ ຫໍແຕ ຫລື ຕ້າຫໍ
3. ທ້າວ ຈຸສິງ " ໂກດແທ້ແທ່ນບົວ
( ຫົວເມືອງທັງຫົກ )
4. ທ້າວ ຄຳຜົງ " ຊຽງໃໝ່
5. ທ້າວອິນ " ອະໂຍທະຍາ
6. ທ້າວກົມ " ມອນ
7. ທ້າວເຈືອງ " ຊຽງຂວາງ

## II . <u>ປະຊຸມພົງສາວະດານພາກ</u> II :

1. ຂຸນລໍ ໄປຄອງເມືອງ ຊວາ ( ຫລວງພະບາງ )
2. ຜາລ້ານ " ປະຄົງ
3. ທ້າວຈຸສິງ " ບົວຊຸມ
4. ທ້າວຄຳຜົງ " ຫົງສາ
5. ທ້າວອິນ " ສີອະຍຸທະຍາ
6. ທ້າວກົມ " ອິນທະຣະປັດ
7. ທ້າວເຈືອງ " ພວນຊຽງຂວາງ

## III. <u>ພົງສາວະດານຂອງ ປ.ບູລັງເຍ</u> :

1. ຂຸນລໍ ໄປຄອງເມືອງ ຊວາ ( ຫລວງພະບາງ )
2. ຜາລ້ານ " ສິບສອງປັນນາ
3. ທ້າວສິງ " ປະຄັນ ( ເຫນືອຕັງເກຍ )

| | | |
|---|---|---|
| 4. ທ້າວ ຄຳຜົງ | ໄປຄອງເມືອງ | ລ້ານນາ |
| 5. ທ້າວອິນ | " | ລະໂວ້ |
| 6. ທ້າວກົມ | " | ຫົງສາ |
| 7. ທ້າວເຈືອງ | " | ພວນ |

## IV. <u>ພົງສາວະດານລາວພິມປີ 1957</u> :

| | | |
|---|---|---|
| 1. ຂຸນລໍ | ໄປຄອງເມືອງ | ລ້ານຊ້າງ |
| 2. ຜາລ້ານ | " | ຕາຫໍ່ ຫລື ຫໍ່ແຕ |
| 3. ທ້າວຈຸສົງ | " | ຈຸລະນີ ຫລື ເມືອງແກວ |
| 4. ທ້າວຄຳຜົງ | " | ໂຍນົກ ຫລື ລານນາ |
| 5. ທ້າວອິນ | " | ລ້ານເພັຍຫຼືອະຍຸທະຍາ |
| 6. ທ້າວກົມ | " | ຫລ້າຄຳມ່ວນ |
| 7. ທ້າວເຈືອງ | " | ປະກັນຊຽງຂວາງ |

ຂະນະທີ່ອານາຈັກໜອງແສຈະເລີນຮຸ່ງເຮືອງສຸດຂີດນັ້ນ ຢູ່ທາງໃຕ້ດິນແດນແຫລມທອງກໍມີອານາຈັກ ທະວາຣະວະດີ ຫລື " ອານາຈັກສີວິໄຊ ແລະ ອານາຈັກ ສີໂຄຕະບູຣະ" ຫລື " ອານາຈັກໂຄຕະບູນ" ແຫ່ງຂອມຈະເລີນສຸດຂີດເຊັ່ນດຽວກັນ.

# ເຜົ່າລາວອານາຈັກໜອງແສ ໄດ້ອົບພະຍົບໃຫຍ່ໄປ 3 ທິດທາງ

ມາ ເຖິງປີ ພ.ສ 768 ( ຄ.ສ 225 )ປະເທດຈີນເກີດມີເສິກ 3 ກົກ

ສູ້ຣົບຕົບຕີ ຍາດຊີງກັນໄປທົ່ວແຜ່ນດິນ ແລ້ວຈີນກໍອາໄສເວລານັ້ນຕີຍຶດເອົາອານາຈັກໜອງແສເປັນຂອງຈີນເລີຍ.

ພວກອ້າຍລາວເກືອບທັງໝົດຢູ່ອານາຈັກໜອງແສຈຶ່ງອົບພະຍົບຫລົບໄພໄປ 3 ທິດທາງຄື: ພວກທີໜຶ່ງ ລົງຊື່ສູ່ໃຕ້ ເບື້ອງຂວາແມ່ນ້ຳຂອງມາຕັ້ງຖິ່ນຖານຂຶ້ນໃໝ່ ຊື່ວ່າ " ເມືອງທີຣັນເງີນຍາງ " ຈາກສະກຸນລາວຈົກເທວະຣາດ " ກາຍເປັນຕຳນານໂຍນົກມາຕາບທຸກວັນນີ້ ພວກທີສອງກໍລົງສູ່ໃຕ້ເຊັ່ນດຽວກັນ ແຕ່ແຍກໄປທາງທິດຕາເວັນອອກ ຄື " ທາງຝັ່ງຊ້າຍແມ່ນ້ຳຂອງ " ໄປຕັ້ງຖິ່ນຖານເປັນປຶກແຜ່ນໃຫຍ່ຢູ່ເມືອງຊວາ ( ຫລວງພະບາງ ) ກ່ອນຈະທະຍອຍລົງສູ່ໃຕ້ເລື້ອຍໆ... ພວກທີສາມອົບພະຍົບອອກຈາກອານາຈັກໜອງແສໄປທາງທິດຕາເວັນຕົກສຽງເໜືອ ໄປຕັ້ງເມືອງອາສົມຂຶ້ນ( ຢູ່ແຖບດິນແດນອິນເດຍປັດຈຸບັນ ).

ນີ້ຄືຕົ້ນກຳເນີດ ຫລື ຕົ້ນສະກູນຂອງພວກອ້າຍລາວທີ່ອົບພະຍົບອອກຈາກອານາຈັກໜອງແສລົງສູ່ໃຕ້ ແລະ ກໍເປັນຄົນລາວຄືທຸກວັນນີ້.

# ຄຳທີ່ວ່າ " ລາວ "

**ຕາມ** ປະຫວັດສາດກ່າວເອົາໄວ້ວ່າ " **ລາວ** " ໝາຍເຖິງດາວອັນແມ່ນພວກຄົນທີ່ມີເຊື້ອຊາດເດີນທາງລົງມາຈາກທີ່ສູງ ເຊັ່ນມີຖິ່ນກຳເນີດມາຈາກທິດເໜືອ ມາຈາກພູສູງ ຫລື ມາຈາກສະຫວັນຊັ້ນຟ້າ.

" **ພວກດາວ** " ຫລື " **ຊາດດາວ** " ໃນສະໄໝນັ້ນ ຊົນຊາດທັງຫລາຍບໍ່ມີຊື່ຊາດເອີ້ນຂານກັນ ລົງຈະເອີ້ນຕາມຊື່ເມືອງທີ່ຢູ່ອາໄສປະການໜຶ່ງ ແລະ ເອີ້ນຕາມຊື່ເຊື້ອສາຍກຳເນີດສະກຸນທີ່ສືບກັນມາປະການໜຶ່ງ.

ພວກອ້າຍລາວຖືວ່າ ເປັນພວກທີ່ມີເຊື້ອສາຍມາຈາກ " **ດາວ** " ແລ້ວກໍ

ຖືເອົາຄຳນີ້ເອີ້ນຂານຊື່ພວກຂອງຕົນເລື້ອຍມາ.

ຕໍ່ມາ ພວກຈີນໄດ້ທຽວໄປມາຢູ່ຕາມແມ່ນ້ຳຮວງໂຫຫລືແມ່ນ້ຳເຫຼືອງ ກໍພົບກັບພວກເຜົ່າ " ດາວ " ຄືຊາດລາວ ຫລື ອ້າຍລາວເປັນພວກທີ່ຈະເລີນຮຸ່ງເຮືອງ ມີການທຳມາຫາກິນເປັນປຶກແຜ່ນ ມີວັດທະນະທຳສູງ ມີຈິດໃຈເມດຕາເອື້ອເຟື້ອເຜື່ອແຜ່ ບໍ່ໄດ້ຂີດຈຳກັດທາງຮ້າຍໃນການທີ່ຈະຊ່ວຍເຫລືອໃຫ້ປັນແກ່ພວກຈີນເຊິ່ງບາງພວກກໍຜ່ານໄປມາ ແລະ ບາງພວກກໍອົບພະຍົບຈາກທີ່ອື່ນມາ.

ດ້ວຍຄວາມດີອັນນີ້ ພວກເຈັກຫລືຈີນຈຶ່ງໃຫ້ກຽດເຄົາຣົບນັບຖືພວກ " ດາວ ຫຼື ຊາດດາວ " ແລະ ເອີ້ນວ່າ " ອ້າຍດາວ " ແຕ່ເວົ້າສຽງຕົວ " ດ " ບໍ່ເປັນ ບໍ່ຊັດແຈ້ງ ຈຶ່ງພ້ຽນຈາກສຽງຕົວ " ດ " ມາເປັນສຽງຕົວ " ລ " ຄື " ອ້າຍລາວ " ຄຳວ່າ " ອ້າຍລາວ " ຈຶ່ງມີຊື່ເອີ້ນຂານມາແຕ່ບັດນັ້ນເປັນຕົ້ນມາ

# ຄຳທີ່ວ່າ " ອ້າຍລາວ "

**ຄຳ**ວ່າ " ອ້າຍ " ເປັນພາສາເກົ່າແກ່ຂອງລາວ ເຊິ່ງປັດຈຸບັນນີ້ກໍຍັງມີຄວາມໝາຍທີ່ເຂົ້າໃຈນຳກັນວ່າ : ຜູ້ເກີດກ່ອນ ຜູ້ທີໜຶ່ງ ຜູ້ເປັນພີ່ ຜູ້ເປັນອ້າຍ ຜູ້ເປັນລູກກົກ ຫລື ຖ້າເວົ້າເຖິງເດືອນກໍແມ່ນເດືອນອ້າຍ ( ເດືອນໜຶ່ງ ຫລື ເດືອນຈຽງ ) ສະຫລຸບແລ້ວກໍແມ່ນ ຄຳທີ່ວ່າ " ອ້າຍ " ໝາຍເຖິງຜູ້ທີ່ເກີດກ່ອນ ຫລືທຳອິດ.

ຄຳວ່າ " ດາວ " ເປັນຊື່ຂອງຊາດລາວແຕ່ປາງໂບຮານ ຈີນເອີ້ນ " ອ້າຍດາວ " ພ້ຽນສຽງໄປຈຶ່ງເປັນ " ອ້າຍລາວ " ກໍໝາຍຄວາມວ່າຊາດທີໜຶ່ງ ຊາດທີ່ເກີດກ່ອນ ຊາດທີ່ມາຢູ່ກ່ອນ ຫລື ຊາດທີ່ເປັນອ້າຍ ແລະ ຊາດລາວມາຢູ່ດິນແດນຈີນຕອນນີ້ກ່ອນພວກເຈັກ.



ສະໄໝນັ້ນບໍ່ທັນມີປະເທດໃດເທື່ອ
ພຽງແຕ່ແຕ້ມເປັນຮູບຮ່າງພໍໃຫ້ເຂົ້າໃຈ
" ປີ ຄ.ສ 740 ພ.ສ 1283 "
ມ.ປາກອ້າຍ
ອານາຈັກໜອງແສ
ທິເບດ
ທົ່ງນານ້ອຍອ້ອຍໜູ
ຊຽງຮຸ້ງ
ສິບສອງພັນນາ
ເມືອງໄລ ສິບສອງຈຸໄທ
ບົວຊຸມ
ຫລືຈຸລະນີ
ຊຽງທອງ
ຊຽງຂວັນ
ໂຍນົກ
ຫລືລານນາ
ອະຍຸທະຍາ
(ລ້ານເພຍ)

ຢູ່ໃນຈົດໝາຍເຫດຂອງຊາດຈີນ ໃນຕົ້ນສະໄໝພຸທະກາລ ຫລືຕົ້ນ ພຸທະສາສະໜາ ຄຳວ່າ " ລາວ " ໃນປັດຈຸບັນຈຶ່ງມີຄວາມໝາຍວ່າ " ຊາດໃຫຍ່ " ຫລື " ຊາດທີ່ເປັນອ້າຍ ".

ຄຳວ່າ " ພູເຂົາອ້າຍລາວ " ພາສາຈີນເວົ້າວ່າ " ເກົາຫລົງ " ໝາຍຄວາມວ່າ " ພູເຂົາຫລວງ " ຫລື " ພູເຂົາທີ່ໃຫຍ່ໂຕ " ນັ້ນເອງ.

# ຄຳທີ່ວ່າ " ໄທ ຫລື ໄທ້ "

" **ພວກ**ດາວ " ຫລື " ອ້າຍລາວ " ເປັນຊາດທີ່ຖືວ່າກຳເນີດ ມາຈາກ " ດາວ " ດາວທີ່ຢູ່ເທິງຟ້າເທິງສະຫວັນ ຈຶ່ງໄດ້ເອົາຄຳວ່າ " ໄທ້ " ເຊິ່ງເປັນຄຳຈຳພວກດຽວກັນກັບຄຳທີ່ວ່າ " ດາວ " ນັ້ນ ມາເປັນຄຳກາງສຳລັບໃຊ້ເອີ້ນຂານກັນ ໃຊ້ເອີ້ນໂຕເອງ ໃຊ້ເວົ້າຈາໄຖ່ຖາມກັນ ໃຊ້ເປັນຄຳແທນຊື່ເອີ້ນກັນຂອງຄົນພວກດາວ ຫລື ພວກລາວ ເພາະພວກດາວຖືຕົນເອງວ່າເປັນພວກທີ່ມາຈາກສະຫວັນ ຈຶ່ງຖືເອົາຄຳທີ່ວ່າ " ໄທ້ " ເປັນຄຳນາມ ສຳລັບເອີ້ນກັນທົ່ວໄປ ( Common Noun ) ໃນໝູ່ຊົນພວກດາວ ແຕ່ຊື່ຊາດ (Proper Noun) ນັ້ນ ຈີນເອີ້ນວ່າ " ອ້າຍລາວ ".

ຄຳວ່າ " ໄທ້ " ເປັນນາມທົ່ວໄປທີ່ລາວເຮົາໃຊ້ເອີ້ນໂຕເອງ ໃຊ້ໄຕ່ຖາມເອີ້ນກັນໃນໝູ່ຊົນຊາດລາວ ແລະ ໄດ້ເລີ່ມໃຊ້ແຕ່ສະໄໝຄົນລາວລົງມາສ້າງເມືອງລຸງ ເມືອງປາ ແລະ ຕໍ່ໆມາ . . .

ເຊັ່ນໃນຈົດໝາຍເຫດຂອງຊາດຈີນ ໃນສະໄໝສະຕະວັດທີ 12 ( ພ.ສ 1200 ) ວ່າ : ເຈົ້າສະກຸນໄທເມືອງ ( ໄທໜົງ ) ໄດ້ເປັນໃຫຍ່ທາງທິດໃຕ້ຂອງຈີນ ຈີນເອີ້ນວ່າ " ເຈົ້າແຫ່ງຍູນານ " ຄືລາວສະໄໝຕັ້ງອານາຈັກໜອງແສຈະເລີນຮຸ່ງເຮືອງນັ້ນເອງ.

ຄໍາທີ່ວ່າ " ໄທ້ " ຈີນເອີ້ນບໍ່ຂອດ ຈຶ່ງກາຍໄປເປັນ ໄຕ ຫລື ໄຕ້ ຫລື ໄຕ່ ຫລື ໄຖ່ ແລະ ຫລື ໄທ ເພາະຈີນມີຫລາຍເຜົ່າຊົນ ແລະ ຫລາຍພາສາ ແຕ່ສໍານຽງຈີນແຄະຍັງອອກເປັນສຽງ " ໄທ້ " ຫລື " ໄຖ່ " ມີຕົວຫນັງສືຈີນຂຽນດັ່ງນີ້ ( 大 ) ຄໍາວ່າ " ໄທ້ " ຕໍ່ໆມາຈຶ່ງຜັຽນເປັນ " ໄທ " ຈົນຮອດທຸກວັນນີ້ ເຊັ່ນຄົນລາວເຮົາເຂີ້ະຖາມກັນວ່າ " ເຈົ້າເປັນຄົນໄທໃສນໍ ? " ຕອບວ່າ " ຂ້ອຍເປັນຄົນໄທວຽງຈັນ ... ໄທຫລວງພະບາງ ... " ແລະ ອື່ນໆ ...

ຄໍາວ່າ " ໄທ " ຫລື " ໄທ້ " ໄທທາງເຫນືອ ແລະ ໃນດິນແດນຕອນໃຕ້ ອອກສຽງເປັນ " ໄຕ " ຫລື " ໄຕ້ " ຢູ່.

ສະນັ້ນ ຄໍາວ່າ" ໄທ້ ທຽນ ແຖນ " ຈຶ່ງແປວ່າ ຟ້າສະຫວ່າງ ຫລື ຂາວ ຫລືແປອອກເປັນຮູບຄໍາສັບກໍຄື ໄທ້ = ມະຫາ ຫລື ຍິ່ງໃຫຍ່ ຫລື ມາກຫລາຍ ຫລື ໃຫຍ່ຫລາຍ ກົງກັບພາສາອັງກິດຄື " The Great " .

# ຄໍາທີ່ວ່າ " ມົງ ຫລື ມຸງ ຫລື ເມືອງ "

**ຕາມ** ຫລັກຖານທາງປະຫວັດສາດ ແລະ ຄໍາສັນນິດຖານຫລືການວິໄຈຂອງນັກການສຶກສາ ແລະ ນັກການປະຫວັດສາດທັງຫລາຍແລ້ວ ເຫັນວ່າຄໍາວ່າ ມົງ ມຸງ ຫລື ເມືອງ ມາຈາກຄໍາທີ່ວ່າ " ມົງໂກນ " ຫລື " ມົງກອນ " ເພາະຕາມປະຫວັດສາດຂອງມະນຸດຊາດນັ້ນວ່າ " ໄທລາວ " ຫລື " ອ້າຍລາວ " ເປັນຊົນຊາດເຜົ່າມົງໂກນ ຫລື ມົງກອນ.

ຕໍ່ມາ ພວກນັກປາດຫລືນັກວິທະຍາສາດຈຶ່ງເອີ້ນແຕບາງພະຍາງທໍາອິດ ຄືຄໍາວ່າ " ມົງ " ຫລືຜັຽນໄປເປັນຊື່ຂອງ " ມົ່ງ " ເຜົ່າລາວສູງໂດຍຈໍາເພາະ.

# " ລາວ ຫລື ລະວ້າ ຫລື ລົວະ "

ນັກການຂຽນປະຫວັດສາດລາວ ຫລື ພົງສາວະດານລາວບາງຕໍາ ນານ ເຂົ້າໃຈວ່າ ລາວ ກັບລະວ້າ ຫລື ລົວະ ຫລື ລາວຸ ແມ່ນຊົນຊາດດຽວກັນ

ອັນໃນຄວາມເປັນຈິງແລ້ວ ລາວກັບລະວ້າ ຫລື ລົວະ ບໍ່ແມ່ນຄົນເຊື້ອ ຊາດ [1] ດຽວກັນ.

ພາສາຂອງພວກລະວ້າ ຫລື ລົວະ ກັບພາສາລາວເປັນຄົນລະພາສາ ເປັນຄົນລະຊົນຊາດຊົນເຜົ່າ.

ພວກລະວ້າ ຫລື ພວກລົວະ ເປັນຄົນເຈົ້າຂອງຖິ່ນເດີມ ຈຶ່ງສັນນິຖານ ວ່າ ເປັນພວກ " ລົວະ " ຫລື " ລາວຸ " ເຊິ່ງອົບພະຍົບມາຈາກອິນເດຍ ສະໄຫມກ່ອນ ພວກຄົນລາວເຮົາເອີ້ນເຜົ່ານີ້ວ່າເປັນພວກ " ຍັກ " ແລະ ກໍອີງໃສ່ ຫນ້າຕາຮູບຮ່າງຂອງພວກນີ້ ພວກຄົນລາວຈຶ່ງຈິນຕະນາການແຕ້ມຮູບຮ່າງ ຍັກຂຶ້ນມາ.

ຕາມພົງສາວະດານລ້ານຊ້າງວ່າ : ຊົນເຜົ່າ ລະວ້າ ຫລື ລົວະ ຫລື ລາວຸ ນີ້ມາຈາກເມືອງລັງກາ ເຂົ້າມາຕັ້ງຖິ່ນຖານຢູ່ດິນແຫລມທອງ ຫລື ສຸວັນ ນະພູມປະເທດກ່ອນເຜົ່າຊົນອື່ນໃດຈະມາເຖິງ.

## ປະເພດຂອງເຜົ່າ " ລາວ "

ຕາມການສຶກສາຄົ້ນຄວ້າ ແລະ ແຍກແຍະເຜົ່າຄົນລາວແລ້ວ ແບ່ງ ອອກເປັນ 12 ປະເພດເຜົ່າລາວ ຄື :

---

(1) ຂໍໃຫ້ເຂົ້າໃຈຄໍາທີ່ວ່າ " ເຊື້ອຊາດ " ດຽວກັນດີໆ.

1. **ລາວຈົກ :** ໄດ້ແກ່ພວກອົບພະຍົບມາຈາກແຄ້ວນຈົກໃນດິນແດນຈີນລົງມາທາງໃຕ້ ລົງມາຕັ້ງອານາຈັກລ້ານນາໃນປີ ພ.ສ 1181 ( ຄ.ສ 538 ) ເຊິ່ງບໍ່ຍອມປະຖິ້ມຊື່ເກົ່າແກ່ຂອງບັນພະບຸຣຸດອັນເປັນຕົ້ນສະກຸນລາວຈົກ ຫລື ລາວຈັກກະຣາດ ( ສະກຸນລາວພຸງດຳ ) ຕໍ່ມາເອີ້ນວ່າ " ອານາຈັກລ້ານນາ " ຫລື " ລານນາ " ອັນມີນະຄອນຊຽງແສນ ນະຄອນຊຽງຣາຍ ແລະ ນະຄອນຊຽງໃໝ່ເປັນຣາຊະທານີ.

2. **ລາວພຸງດຳ :** ການທີ່ເອີ້ນວ່າ " ລາວພຸງດຳ " ກໍເພາະລາວພວກນີ້ ສັກນຶກສີດຳແຕ່ທົ່ວເອົ້າຂຶ້ນໄປຮອດແອວ ( ຂາລາຍແລ້ວ ແອວບໍ່ລາຍມັນບໍ່ຄອງ ຄັນແມ່ນສັກນຶກນ້ອຍງອຍແກ້ມຜັດແຫ່ງຄື ) ຈຶ່ງໄດ້ຖືກເອີ້ນຊື່ວ່າ " ລາວພຸງດຳ " ກໍແມ່ນພວກຄົນລາວທີ່ຢູ່ອານາຈັກລ້ານນາ ແຕ່ສ່ວນໃຫຍ່ຈະຢູ່ຊຽງແສນ ຊຽງໃໝ່ ຊຽງຣາຍ ລຳພູນ ແລະ ລຳປາງໆ ...

3. **ລາວພຸງຂາວ :** ກໍເພາະລາວພວກນີ້ສັກນຶກດຳແຕ່ທົ່ວເອົ້າຂຶ້ນຮອດກົກຂາເທົ່ານັ້ນ ບໍ່ນິຍົມສັກໄສ່ແອວສັກໃສ່ທ້ອງ ຈຶ່ງຖືກເອີ້ນວ່າ " ລາວພຸງຂາວ " ໄດ້ແກ່ພວກຄົນລາວຫລວງພະບາງ ແລະ ວຽງຈັນ.

4. **ລາວພວນ :** ໄດ້ແກ່ພວກຄົນລາວທີ່ອົບພະຍົບມາຈາກແຄ້ວນພວນ ແລະ ກໍແມ່ນພວກດຽວກັນກັບລາວພຸງຂາວ.

5. **ລາວກາວ :** ໄດ້ແກ່ພວກລາວພຸງຂາວທີ່ອົບພະຍົບເຂົ້າມາຢູ່ທາງຝັ່ງຂວາແມ່ນ້ຳຂອງ ( ປີ 1891 ສະໄໝດິນລາວເປັນຫົວເມືອງຂຶ້ນຂອງໄທສະຍາມ ໄທສະຍາມຈຶ່ງໄດ້ແບ່ງດິນລາວອອກເປັນ 4 ເຂດເພື່ອງ່າຍແກ່ການປົກຄອງ ແລະ ໄດ້ເອີ້ນຊື່ພວກຄົນລາວດັ່ງກ່າວ ).

6. **ລາວໂຊ່ງ :** ຄືພວກລາວພຸງຂາວ ທີ່ຜູ້ຊາຍນຸ່ງໂສ້ງ ຜູ້ຍິງນຸ່ງສິ້ນມີລາຍດຳຂາວ ເອີ້ນວ່າ " ລາວໂຊ່ງ "

7. **ລາວທຽນຫລືລາວແຖນ :** ຄືຊົນຊາດອ້າຍລາວທີ່ຕັ້ງອານາຈັກ

ແຖນຫລືທຽນ ໃນດິນແດນຈີນສະໄຫມນະຄອນເພງາຍເປັນຣາຊະທານີ ປີ ພ. ສ 420-620.

8. **ລາວແຊນຫລືລາວຊານ :** ຄືລາວທີ່ຕົກຄ້າງຢູ່ດິນແດນຈີນຕອນໃຕ້ ທາງມິນທິນຢູນານ.

9. **ລາວລຽວ :** ຄືຊົນຊາດລາວທີ່ຕົກຄ້າງຢູ່ໃນດິນແດນຈີນຕອນໃຕ້ ເອີ້ນຊື່ຜຽນໄປຈາກລາວ ເປັນ " ລຽວ "

10. **ລາວລີ້ :** ຄືຊົນຊາດລາວທີ່ຕົກຄ້າງຢູ່ດິນແດນຈີນຕອນໃຕ້ ເອີ້ນຊື່ຜຽນໄປຈາກລາວ ເປັນ " ລີ້ "

11. **ລາວຊຽງຫລືລາວສຽງ :** ໄດ້ແກ່ພວກຄົນລາວທາງຊຽງແສນ ຊຽງໃຫມ່ ຊຽງຮາຍ ຈຶ່ງເອີ້ນວ່າ " ລາວຊຽງ "

12. **ລາວວຽງ :** ໄດ້ແກ່ພວກຄົນລາວວຽງຈັນ ເປັນຊົນຊາດອ້າຍລາວເກົ່າແກ່ລົງມາສ້າງອານາຈັກອິດສະຫລະຂຶ້ນໃນແຫລມອິນດູຈີນ.

# ພວກໄທຕ່າງໆ...

" ໄທ " ເປັນຄຳກາງ ສຳລັບໃຊ້ເວົ້າຈາດອມຂານນຳກັນຂອງຊົນຊາດອ້າຍລາວ ໃຊ້ເອີ້ນກັນ ໃຊ້ຖາມກັນ ເພື່ອສະແດງວ່າ ຕົນຫລືພວກຂອງຕົນແມ່ນຊົນຊາດທີ່ສືບສາຍມາຈາກ " ໄທແຖນ " ຈຶ່ງມີການແຍກ ແລະ ນຳໃຊ້ຄຳທີ່ວ່າ " ໄທ " ນີ້ເຖິງ 40 ໄທ ດັ່ງນີ້ :

1. **" ໄທ "** ອັນມີຄວາມໝາຍວ່າ " ຄົນ " ຫລື " ມະນຸດ " ພວກທີ່ສືບສາຍສະກຸນມາແຕ່ໄທແຕ່ແຖນ.

2. **" ໄທສະຍາມ "** ຫລື **" ໄທບາງກອກ "** ຄືຄົນທີ່ຢູ່ໃນອານາຈັກສະຍາມ ( ປະເທດໄທ ) ຫລື ຢູ່ເມືອງບາງກອກ ( ປະເທດໄທ ) ເຊັ່ນດຽວກັນ

3. " **ໄທລາວ** " ກໍໝາຍຄວາມວ່າຄົນລາວ ຄົນລາວຫລືຄົນຊາດລາວ ເຊິ່ງຢູ່ໃນປະເທດລາວ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວປັດຈຸບັນນີ້.

4. " **ໄທອາຫົມ** " ຄືຊົນຊາດອ້າຍລາວເກົ່າແກ່ ແລະ ດັ້ງເດີມ ທີ່ອົບພະຍົບລົງໄປໃນແຄ້ວນອາຫົມຂອງອິນເດຍ

5. " **ໄທລື້** " ຄືຄົນລາວເກົ່າແກ່ທີ່ຍັງຕົກຄ້າງຢູ່ທາງຕອນໃຕ້ຂອງຈີນ ມີຊື່ເອີ້ນພ້ຽນໄປຈາກຄຳທີ່ວ່າ " ລາວ " ໄປເປັນ " ລື້ " ຫລື " ໄທອິດສະຫລະ " .

6. " **ໄທເຂີນ** " ຄືຊົນຊາດອ້າຍລາວ ທີ່ອົບພະຍົບລົງໄປຢູ່ແຄ້ວນລ້ານນາປະສົມເຂົ້າກັບພວມຂອມ ກໍເລີຍເອີ້ນວ່າ " ໄທເຂີນ " ຫລືຈະເປັນດ້ອຍວ່າ ຄົນພວກນີ້ ນຸ່ງແຕ່ເຂີນ ນຸ່ງສິ້ນເຂີນ ( ສິ້ນສັ້ນ ) ກໍເລີຍເອີ້ນຊື່ຕາມການນຸ່ງຖື.

7. " **ໄທຊານ** " ຄືພວກອ້າຍລາວທີ່ອົບພະຍົບລົງມາຢູ່ທາງເໜືອຂອງພະມ້າ ( ມຽນມາ ) ພວກຝຣັ່ງເອີ້ນວ່າ " ພວກຊານ " ຫລື " ຊານງ້ຽວ " ຫລື " ໄທຊານ " .

8. " **ໄທງ້ຽວ** " ແມ່ນພວກອ້າຍລາວຈຸ້ມເຈື້ອເຊື້ອສາຍເມືອງງ້ຽວທີ່ຫລົງເຫລືອຢູ່.

9. " **ໄທລາຍ** " ຄືຊົນຊາດອ້າຍລາວທີ່ມັກນຸ່ງຖືແຕ່ງຕົວດ້ວຍຜ້າສີລາຍ.

10. " **ໄທດຳ** " ຄືຊົນຊາດອ້າຍລາວທີ່ມັກນຸ່ງຖືຜ້າແພໂສ້ງເສື້ອສີດຳ ຫລືພວກທີ່ອົບພະຍົບໄປຕາມຮູແມ່ນ້ຳດຳ ໃນແຄ້ວນຕັງເກັ໋ຍ.

11. " **ໄທຂາວ** " ຄືຊົນຊາດອ້າຍລາວ ທີ່ມັກນຸ່ງຖືເສື້ອຜ້າແພ່ນແພຂາວ.

12. " **ໄທຫ້ອຍ** " **ຫລື** " **ໄທຍ້ອຍ** " ຄືຊົນຊາດອ້າຍລາວ ທີ່ມັກແຕ່ງຕົວດ້ວຍເຄື່ອງເອ້ຫ້ອຍຕາມເສື້ອຜ້າ ຫລື ໝວກ.

13. " **ໄທຈຸງເຈັຍ** " ຄືພວກຊົນຊາດອ້າຍລາວ ທີ່ຍັງຕົກຄ້າງຢູ່ໃນດິນແດນຈີນຕອນໃຕ້ ຍັງເອີ້ນຕົວເອງວ່າ " ໄທ ຫລື ໄຕ " ຢູ່ ແລະ ຄຳທີ່ວ່າ " ຈຸງເຈຍ " ຄົງຈະເປັນຊື່ທີ່ມີຄວາມໝາຍສຳຄັນກັບຊົນຊາດຂອງຕົນ ຈຶ່ງເອີ້ນວ່າ " ໄທຈຸງເຈຍ ".

14. " **ໄທນ້ອຍ** " ຄືຊົນຊາດອ້າຍລາວ ທີ່ອົບພະຍົບລົງມາຕາມຮູນ້ຳຂອງ ລົງສູ່ແຄ້ວນສຸວັນນະພູມ ແລະ ມີຈຳນວນນ້ອຍ ຈຶ່ງເອີ້ນໄທຂອງຕົນຕາມຈຳນວນຄົນທີ່ມີນ້ອຍ.

15. " **ໄທໃຫຍ່** " ຄືພວກຊົນຊາດລາວທີ່ອົບພະຍົບໄປທາງພາກເໜືອຂອງພະມ້າ ລົງມາຕາມແມ່ນ້ຳສາລະວິນ ມີຈຳນວນຫລາຍກວ່ານາຕາມສາຍແມ່ນ້ຳຂອງ ຈຶ່ງເອີ້ນວ່າ " ໄທໃຫຍ່ " ຄຳວ່າ " ໃຫຍ່ " ເປັນຄຳລາວໂບຮານ ເຊິ່ງໝາຍຄວາມວ່າ " ຫລາຍ " ບໍ່ແມ່ນວ່າຄົນມີຕົນຕົວໃຫຍ່ແຕ່ຢ່າງໃດ.

16. " **ໄທໂຕ້** " ຄືຊົນຊາດອ້າຍລາວ ທີ່ຖືກເອີ້ນຄຳວ່າ " ໄທ " ຜັຽນໄປເປັນ " ໂທ ".

17. " **ໄທນ້ຳ** " ຄືຊົນຊາດອ້າຍລາວທີ່ອາໄສຢູ່ຕາມຮິມແມ່ນ້ຳ

18. " **ໄທພູ** " ຫລື " **ພູໄທ** " ຄືຊົນຊາດອ້າຍລາວທີ່ອາໄສຢູ່ຕາມພູເຂົາ.

19. " **ໄທເສົາ** " ຄືຊົນຊາດອ້າຍລາວພວກໜຶ່ງຖືກເອີ້ນວ່າ " ໄທເສົາ " ສັນນິດຖານວ່າ " ເສົາ " ຄົງຈະເປັນຊື່ຂອງຢ່າງໃດຢ່າງໜຶ່ງ ບ່ອນ ທີ່ພວກອ້າຍລາວອາໄສຢູ່.

20. " **ໄທຈີນ** " ຄືຊົນຊາດອ້າຍລາວທີ່ປະສົມກັບຄົນຈີນຈົນກາຍ

ເປັນຈີນໄປແລ້ວ.

21. " **ໄທລຸງ** " ຄືຊົນຊາດອ້າຍລາວຈາກເມືອງລຸງທີ່ຫລົງເຫລືອຢູ່.

22. " **ໄທມຸງ** " ຫລື " **ໄທມົງ** " ຄືຊົນຊາດອ້າຍລາວເກົ່າແກ່ເຊິ່ງຝຣັ່ງເອີ້ນວ່າ " ພວກມົ່ງ " ຕໍ່ມາໄດ້ກາຍເປັນ " ມຸງ "

23. " **ໄທຫລວງ** " ຄືພວກຊົນຊາດອ້າຍລາວຈຳນວນຫລວງຫລາຍມາຈາກເມືອງລຸງ

24. **ໄທເມືອງ** " ຄືພວກອ້າຍລາວທີ່ຖືກເອີ້ນຜຽນໄປເປັນ " ມຸງ " ຫລື " ເມືອງ ".

25. " **ໄທໂມ** " ພວກຄົນທາງເໜືອຂອງພະມ້າອອກສຽງສຳນຽງຄຳທີ່ວ່າ " ເມືອງ " ເປັນ " ໂມ "

26. " **ໄທຄຳທີ່** " ຫລື " **ໄທຂຳທີ** " ຄືພວກອ້າຍລາວທີ່ອົບພະຍົບໄປທາງເໜືອພະມ້າ ຖືກເອີ້ນວ່າໄທຄຳທີ່ " ຄຳທີ່ " ເປັນຄຳທີ່ກົງກັນຂ້າມກັບຄຳທີ່ວ່າ " ແຖນ "

27. " **ໄທຊອງ** " ຄືຊົນຊາດອ້າຍລາວທີ່ຖືກເອີ້ນເປັນຊື່ນີ້.

28. " **ໄທລົງ** " ຄືຊົນຊາດອ້າຍລາວທີ່ອົບພະຍົບໄປທາງຮູແມ່ນ້ຳລົງຄາ.

29. " **ໄທແດງ** " ຄືຊົນຊາດອ້າຍລາວ ທີ່ແຕ່ງຕົວດ້ວຍເສື້ອຜ້າສີແດງ ແລ້ວກໍອົບພະຍົບໄປຕາມແມ່ນ້ຳແດງໃນແຄວ້ນຕັງເກຍ.

30. " **ໄທເມົາ** " ຄືຊົນຊາດອ້າຍລາວທີ່ອົບພະຍົບໄປຕາມແມ່ນ້ຳເມົາ.

31. " **ໄທໄລ** " ຄືຊົນຊາດອ້າຍລາວທີ່ໄປຕັ້ງເມືອງຢູ່ວ່າ " ເມືອງໄລ ".

32. " **ໄທລໍ** " ຄືຊົນຊາດອ້າຍລາວເຊື້ອສາຍຂອງຂຸນລໍ ແລ້ວກໍເອີ້ນຊື່ຕົວເອງຕາມຊື່ຂອງບັນພະບຸຣຸດ

33. " **ໄທລື ໄທລົມ ໄທລາງ ໄທເລີງ** " ປາກົດຢູ່ໃນພົງສາວະດານລ້ານຊ້າງ ເຊິ່ງອົບພະຍົບມາຕາມຮູຊີເປັນ... ໄທລື ໄທລົມອອກມາທາງສິວ ...

34. " **ໄທກາແທລ ໄທເມຍົງ** " ປາກົດໃນພົງສາວະດານພະມ້າໃນໜັງສືຣາຊາທິຣາດເສີກພະເຈົ້າຟຣັ່ງມັງຄ້ອງໄດ້ກ່າວເຖິງ.

35. " **ໄທຫຍໍ້** " ຄືຊົນຊາດອ້າຍລາວທີ່ອົບພະຍົບໄປຈາກແຄ້ວນພວນຊຽງຂວາງ.

36. " **ໄທນຸງ** " ສັນນິຖານວ່າຄຳນີ້ ຈະຜຽນມາຈາກ " ມຸງ " ເລີຍເປັນ " ນຸງ "

37. " **ໄທງາຍລາວ** " ຄືຊົນຊາດອ້າຍລາວທີ່ຖືກເອີ້ນວ່າ "ງາຍລາວ " ຕາມຊື່ເກົ່າແກ່ຂອງເມືອງເພງາຍ ຫລື ເມືອງງາຍລາວ.

38. " **ໄທປາຍີ** " ຄືພວກອ້າຍລາວເມືອງປາຍີ ເປັນນະຄອນທີ່ສອງອານາຈັກໂບຣານ.

39. " **ໄທພວນ** " ຄືພວກຊົນຊາດອ້າຍລາວ ອັນໝາຍເຖິງພວກຄົນທີ່ມີຖິ່ນກຳເນີດຢູ່ເມືອງພວນແຂວງຊຽງຂວາງໂດຍແທ້.

40. " **ໄທລາໝັນ** " ຄືພວກຊົນຊາດ ອ້າຍລາວທີ່ໜີໄປທາງພະມ້າ ປັດຈຸບັນເປັນມອນ ຊົນຊາດພະມ້າ.

ດັ່ງນັ້ນ ຄຳທີ່ວ່າ " ໄທ " ກໍແມ່ນພວກອ້າຍລາວທີ່ມີເລືອດເນື້ອເຊື້ອໄຂມາຈາກລາວໂດຍແທ້ ອັນຈະເອີ້ນຄຳທີ່ບອກເຊື້ອຊາດພຽງວ່າ " ລາວ " ພຽງຄຳດຽວກໍເຂົ້າໃຈໄດ້ຍາກ ຖ້າເວົ້າວ່າ " ຂ້ອຍແມ່ນໄທລາວ ... " ຫລື " ຂ້ອຍແມ່ນໄທວຽງຈັນ ... " ກໍເຂົ້າໃຈໄດ້ທັນທີໂລດ.

ຄຳທີ່ວ່າ " ໄທ " ຫລື " ໄທ້ " ຫລື " ໄຕ " ກໍແມ່ນຄຳເວົ້າບົ່ງບອກເຊື້ອຊາດອັນດຽວ ພຽງແຕ່ສັບສຳນຽງເວົ້າພ້ຽນໄປເທົ່ານັ້ນ.

# ອານາຈັກຂຸນເຈືອງ

## ເລື່ອງທ້າວຮຸ່ງ
## ( ທ້າວເຈືອງ ຫລື ທາວຢີ່ )

ເລື່ອງທ້າວຮຸ່ງທ້າວເຈືອງ ເປັນປະເພດນິຍາຍອິງປະຫວັດສາດ ທີ່ແຕ່ງຂື້ນຕາມປະຫວັດສາດ ແລະ ກ່ຽວຂ້ອງກັບຊາດລາວໃນສະໄໝ 1.200 ປີປາຍມາແລ້ວ ແຕ່ການແຕ່ງເລື່ອງເປັນຄຳກອນ ( ບົດຮ້ອຍແກ້ວ ) ປະກອບນັ້ນ ໄດ້ແຕ່ງຂື້ນໃນສະໄໝດຽວກັນກັບໜັງສືຂຸນບໍຣົມ ນາງຕັນໄຕ ແລະ ພະເວດສັນດອນ [1]

ເລື່ອງທ້າວຮຸ່ງ ທ້າວເຈືອງມີຢູ່ວ່າ :

ກ່ອນນີ້ 774 ປີ ມີນະຄອນຢູ່ເມືອງໜຶ່ງຊື່ວ່າ ນະຄອນສວນຕານ [2] ປົກຄອງໂດຍຂຸນຈອມທັມ ມີມະເຫສີນາມວ່າ ນາງຈອມ.

---

(1) ຕາມການສັນນິຖານຂອງນັກວັນນະຄະດີອະວຸໂສຫລາຍທ່ານ ແລະ ແມ່ນຜູ້ໃດເປັນຜູ້ແຕ່ງ ຍັງບໍ່ທັນຮູ້ ເພາະຍັງບໍ່ເຫັນຫລັກຖານອັນແນ່ນອນເທື່ອ

(2) ນະຄອນສວນຕານ ຫລື ນາຄອງ ( ປັດຈຸບັນແມ່ນຊຽງຣາຍປະເທດໄທ)


ມ.ແຖນ
ຕຸ້ມວາງ
ຊຽງເຄີ່ງ
ຊຽງທອງ
ມ.ບານ
ຄຳວ້າງ
ເງິນຍາງ
ຊຽງຂວັນ
ສວນຕານ
ພຸຣາມ
ນ້ຳຂອງ
ລານນາ
ຫາະຣິພຸນໄຊ
ເຂລາງ
ສຸຂໂທ
ລະໂວ້
ເມື່ອອ່ານຕາມຕຳນານແລ້ວ
ຄາດຄິດວ່າ ສະໄໝນັ້ນ ຄົງຈະເປັນ
ເມືອງຂອງໄພລາວ ແບບນີ້.
( ເປັນການຄາດຄິດ ເພື່ອສຶກສາຄົ້ນຄວ້າ)

ນາງຈອມປະສູດໂອຣົດ 2 ອົງ ອົງທີໜຶ່ງນາມວ່າ ທ້າວເຈືອງ ອົງທີສອງນາມວ່າທ້າວເຈືອງ ແຕ່ຄົນສ່ວນຫລາຍເອີ້ນວ່າ ທ້າວຮຸ່ງ ຫລື ທ້າວ ຍີ່ ດ້ວຍເຫດຜົນທີ່ວ່າ : ທ້າວເຈືອງປະສູດຕອນເຊົ້າຟ້າຮຸ່ງແຈ້ງ ກໍເລີຍເອີ້ນວ່າ ທ້າວຮຸ່ງ ສ່ວນເອີ້ນວ່າທ້າຍຍີ່ ກໍເພາະທ້າວເຈືອງເກີດ ເດືອນຍີ່ [1] (ເດືອນສອງ) ວັນອັງຄານ ນີ້ເພັງ ປີຂານ ( ປີເສືອ) ຣົກກົນ ຫນ່ວຍວິສາຂະກົງກັບປີ ຄ.ສ 1099 ພ.ສ 1642 ຈ.ສ 480.

ທ້າວເຈືອງເປັນເຊື້ອສາຍກະສັດຜູ້ມີອຳນາດ ໄດ້ທ້ອນໂຮມແຜ່ນດິນສິບສອງປັນນາ ສິບສອງເຈົ້າ ( ຈຸ ) ໄທ ຫລວງພະບາງ ຕະຫລອດແຄ້ວນຕັງເກຍໄວ້ໄດ້.

ພໍທ້າວເຈືອງມີອາຍຸໄດ້ 3 ຂວບ ກໍມີຄົນເຜົ່າ " ພາງດຳ " ນຳເອົາດາບ ແລະ ຄ້ອງເງິນຄູ່ໜຶ່ງມາຖວາຍ ຕໍ່ມາ ກໍມີຜູ້ເອົາຊ້າງເຜືອກຕົວໜຶ່ງມາຖວາຍ ຈຶ່ງໄດ້ຕັ້ງຊື່ຊ້າງເຜືອກຕົວນັ້ນວ່າ " ຊ້າງເຜືອກພານຄຳ "

ເວລາຕໍ່ມາ ຂຸນຈອມທັມໄດ້ສະຫວັນນະຄົດ ຂະນະທີ່ທ້າວເຈືອງ ແລະ ທ້າວເຈືອງໃຫຍ່ກ້າຫນ້າບານເປັນບ່າວພໍດີ.

ນາງຈອມເທວີຜູ້ເປັນພະມາດາ ໄດ້ພ້ອມກັບເສນາອາມາດອັງເຊີນໃຫ້ທ້າວເຈືອງຜູ້ເປັນອ້າຍຂຶ້ນຄອງເມືອງແທນພະບິດາ ແລະ ແຕ່ງຕັ້ງໃຫ້ທ້າວຮຸ່ງ ຫລື ທ້າວເຈືອງເປັນຜູ້ຮອງ ຄືເປັນອຸປະຣາດ.

ທ້າວຮຸ່ງໄດ້ເຮັດຫນ້າທີ່ອຸປະຣາດຂອງຕົນເປັນຢ່າງດີ ຄື ເຝິກແອບທະຫານ ເຝິກແອບຊ້າງຣົບ ເພື່ອນຳໃຊ້ເຂົ້າໃນການປ້ອງກັນນະຄອນເມື່ອຍາມຈຳເປັນ.

ມີຢູ່ມື້ໜຶ່ງ ທ້າວຮຸ່ງໄດ້ຂີ່ຊ້າງອອກຈາກນະຄອນເດີນທາງໄກ ແລ້ວກໍ

---

[1] ບາງຕຳນານຂຽນວ່າ ເກີດເດືອນ 5 ປີ ເຖາະ ( ປີກະຕ່າຍ )

ພົບກັບນາງວ້ອມ ເຊິ່ງເປັນພະທິດາຂອງພະນາງເມັງ [1] ແຫ່ງນະຄອນຊຽງເຄືອ ທ້າວຮຸ່ງຕ້ອງເອີ້ນພະນາງເມັງວ່າປ້າ.

ຄວາມມັກຄວາມຮັກໄດ້ເກີດຂື້ນກັບທ້າວຮຸ່ງ ແລະ ນາງວ້ອມ ທ້າວຮຸ່ງຈຶ່ງແຕ່ງເຖົ້າແກ່ໄປສູ່ຂໍ ແຕ່ ພະນາງເມັງຄາດຄ່າດອງແພງຫລາຍ ຄືເອົາ ໄກ ງົວ ຄວາຍ ຢ່າງລະໝື່ນ ຂ້ອຍຊາຍ ແລະ ຂ້ອຍຍິງ ຢ່າງລະສາມພັນ ແລະ ເງິນຄຳຈຳນວນຫລວງຫລາຍ.

ຄ່າດອງຈຶ່ງເປັນອຸປະສັກຕໍ່ຄວາມຮັກ ແຕ່ທ້າວຮຸ່ງກໍບໍ່ລົດລະຄວາມພະຍາຍາມ ຈຶ່ງຂຽນສານໄປຫານາງວ້ອມຢູ່ເປັນປະຈຳ ແລະ ຜົເອົ້າໃຈກັນດີດ້ວຍສານເປັນສື່ທາງໃຈແລ້ວ ທ້າວຮຸ່ງກໍລັກລອບເຂົ້າໄປສົມສູ່ກັບນ້ອງວ້ອມຢູ່ຫ້ອງນອນໂດຍບໍ່ມີໃຜຮູ້ເຫັນ ແລະ ກໍສົມຫວັງໃນຄວາມຮັກ.

ບັດນີ້ມາກ່າວເຖິງທ້າວແອງກາ ເປັນພະຍາເຊື້ອຊາດແກວ ປົກຄອງນະຄອນຄຳວັງ ເຊິ່ງເປັນຫລານຊາຍຂອງທ້າວກວ່າປົກຄອງຢູ່ນະຄອນປະກັນ [2]

ພາຍຫລັງທີ່ພໍ່ຂອງທ້າວແອງກາເຖິງແກ່ກຳແລ້ວ ທ້າວແອງກາກໍຂື້ນປົກຄອງເມືອງຄຳວັງ ແລະມີຄວາມປາດຖະໜາຢ່າງແຮງກ້າ ເພື່ອຈະຊອກຫາສາວງາມມາເປັນມະເຫສີ ເພື່ອໃຫ້ສົມກຽດສົມສັກສີ ແລະ ສືບໜໍ່ແໜນແນວຕໍ່ໄປ.

ທ້າວແອງກາໄດ້ຂ່າວວ່າ ມີສາວງາມຄົນໜຶ່ງຊື່ວ່າ ນາງອົ້ວຄ່າ ຫລືອົ້ວຄ່ຽມ ເປັນລູກສາວຂອງຂຸນຊຶ່ມ [3] ເຈົ້າເມືອງແຫ່ງນະຄອນເງິນ

---

(1) ນາງເມັງ ແມ່ນເອື້ອຍຂອງພະນາງຈອມ (ມາດາຂອງທ້າວຮຸ່ງ)

(2) ປະກັນ ແມ່ນເມືອງຊຽງຂວາງປັດຈຸບັນ ແລະ ແກວປົກຄອງ

(3) ຂຸນຊຶ່ມ ຫລືຂຸນຊຶມ ຫລື ຂຸນຊິນເປັນອ້າຍຂອງຂຸນຈອມທັມ

ຍາງ (1) ຈຶ່ງຈັດແຈງແຕ່ງທູດຊື່ຂຸນແສງໄປສູ່ຂໍເຖິງສອງເທື່ອ ແຕ່ຂຸນຊື່ມບໍ່ຍອມຍົກໃຫ້ ທັງບອກວ່າຈະຍົກລູກສາວໃຫ້ແກ່ທ້າວເຈືອງຜູ້ເປັນຫລານຊາຍ.

ເທື່ອທີສອງ ທ້າວກ່ວາໄດ້ສັ່ງໃຫ້ຂຸນແສງເວົ້າຄຳຂາດວ່າ :

" ຖ້າບໍ່ຍົກໃຫ້ຈະຍົກກອງທັບໄປຕີ... " ຂຸນຊື່ມຄຽດຫລາຍຈຶ່ງກ່າວວ່າ:

ກູຢູ່ສ້າງກົ່ງທ້າວສະເວີຍຣາດ ເງິນຍາງ
ໃຜໄປ່ຈາຄຳຫລອນຖົ່ງສູ ຝູງມ້ອຍ (2)
ໂອມນາງຮູ້ຈາພອນ ຕ້ານເຕີບສົມນີ້
ບໍ່ໃຊ່ເຊື້ອລູກຂ້ອຍຈິງແທ້ ກວ່າຄວນ....
ແລ້ວກໍຂັບໄລ່ຂຸນແສງທັນທີ ....

ຂຸນແສງນຳເອົາຄວາມມາເລົ່າສູ່ທ້າວກ່ວາ ແລະ ທ້າວແອງກາຟັງຈຶ່ງກື້ອໂກດໂກທາ ຟ້າວຫາງຫາຈັດແຈງຂະບວນທັບເປັນກອງທັບໃຫຍ່ເພື່ອໄປບຸກໂຈມຕີນະຄອນເງິນຍາງ ໂດຍມີແມ່ທັບຄົນສຳຄັນ 11 ຄົນຄື:

1. ທຸມບັງ
2. ກວານແກ
3. ອ້າຍກ່ຳ
4. ແມນຟອງ
5. ແກວທອງ
6. ແມນສົມ
7. ງອດປ່ອງ
8. ຊຽງຜາ
9. ທ້າວແດດ
10. ແກວກ່ອງ
11. ອ້າຍທິ່ງ

ເດີນທາງໄປໄດ້ໄລຍະໜຶ່ງ ທ້າວກ່ວາບອກໃຫ້ນາຍມາດໄປສອບຖາມເບິ່ງເສັ້ນທາງນຳຊາວພູທຸ່ມ ແລະ ຂໍໃຫ້ອ້າຍຫາດ ຫົວໜ້າຊາວພາຫຼອດ

---

(1) ເມືອງເງິນຍາງ ແມ່ນເມືອງຊຽງແສນຂອງປະເທດໄທປັດຈຸບັນ.

(2) ມ້ອຍ ນິບາງຕຳນານກ່າວວ່າ " ແກວມ້ອຍ "

ກັບທ້າວສາມມະເຫງ ຫືອໜ້າຊາວພູທຸ່ມ ໃຫ້ນຳທັບຊາວພູທຸ່ມເດີນທາງລ່ວງໜ້າໄປກ່ອນ.

ຂະນະທີ່ນຳທັບເດີນທາງລ່ວງໜ້າໄປກ່ອນຢູ່ນັ້ນ ອ້າຍທາດກັບທ້າວສາມມະເຫງໄດ້ປຶກສາຫາລືນຳກັນວ່າ " ພວກຕົນເປັນຝ່າຍດຽວກັບຂຸນຊຶ່ມ" ດັ່ງນັ້ນ ຈຶ່ງຄວນໄປລາຍງານໃຫ້ຂຸນຊຶ່ມຊາບໃນການເສິກໃຫຍ່ຄັ້ງນີ້.

ພໍແຕ່ຝ່າຍຂຸນຊຶ່ມຊາບຂ່າວ ຈຶ່ງຈັດກຳລັງອອກມາລໍຮັບຢູ່ດ່ານນອກເມືອງ ໂດຍມີແມ່ທັບຄົນສຳຄັນຂອງຂຸນຊຶ່ມ ຄື:

| | |
|---|---|
| 1. ນາຍຈັນ | 2. ງີ່ວອາດ |
| 3. ຄຳຍອງ | 4. ສາມມະຣຽວ |
| 5. ອ້າຍກາດ | 6. ສາມມະເຫງ |

ການສູ້ຣົບກັນໄດ້ເກີດຂຶ້ນຢ່າງດຸເດືອດ ແລະ ສຸດຄວາມສາມາດຂອງທັງສອງຝ່າຍ ແຕ່ ຝ່າຍທະຫານຂຸນຊຶ່ມສູ້ບໍ່ໄຫວ ຈຶ່ງຍົກພົນກັບຄືນເຂົ້າໃນເມືອງ.

ຂຸນຊຶ່ມ ຟ້າວແຕ່ງໃຫ້ນາຍພວງ ລັກລອບອອກຈາກເມືອງ ເພື່ອນຳສານໄປຮ້ອງເຊີນທ້າວຮຸ່ງຜູ້ເປັນຫລານຊາຍມາຊ່ວຍ.

ພໍຊາບຂ່າວ ທ້າວຮຸ່ງດີໃຈຫລາຍ ເມື່ອຜາບແພ້ຂ້າເສິກສັດຕູແລ້ວກໍຈະຂໍເງິນຄຳໄປແຕ່ງເອົານາງງົວມ ແລະ ກໍຈະຖືເອົາໂອກາດນີ້ ຂໍເອົານາງອົວຄຳ ແລະ ນາງອາມຄາຍພ້ອມກັນເສຍເລີຍ.

ທ້າວຮຸ່ງຟ້າວຈັດທັບໃຫຍ່ ໂດຍມີແມ່ທັບຄົນສຳຄັນຄື:

| | | |
|---|---|---|
| 1. ອ້າຍຄວ່າງ | 2. ແອງຄອນ | 3. ເທົ້າພາຍ |

4. ຂຸນຄານ 5. ຄອນຊາຍ 6. ຈ່າຊ້ອນ

ທ້າວຮຸ່ງຍັງໄປຂໍກຳລັງຈາກນາງວ້ອມທີ່ເມືອງຊຽງເຄືອມາຊ່ວຍອີກ ໂດຍມີຊ້າງ 20 ໂຕ ແລະ ມີແມ່ທັບຄົນສຳຄັນຄື :

1. ຂຸນເກື່ອນ 2. ຂຸນເຜິ່ງ 3. ຂຸນເຍ້ຍ
4. ໄຊລື 5. ແອ່ງຜາຍ 6. ອ້າຍຜ່ອງ
7. ຂຸນຄອນ 8. ທ້າວຊອຍ

ທ້າວຮຸ່ງລວມ 2 ທັບໃຫຍ່ເຂົ້າກັນແລ້ວກໍອອກເດີນທາງສູ່ເມືອງເງິນຍາງທັນທີ ແລະ ລະຫວ່າງທາງກໍມີກອງທັບຂ່າພາງດຳທີ່ຕຽມພ້ອມຢູ່ແລ້ວເຂົ້າສົມທົບອີກເປັນ 3 ທັບໃຫຍ່.

ພໍແຕ່ເຖິງເມືອງເງິນຍາງ ເຫັນທັບທ້າວແອງກາກັບທ້າວກວ່າອ້ອມເມືອງຢູ່ ທ້າວຮຸ່ງກໍອອກຄຳສັ່ງໃຫ້ 3 ທັບໃຫຍ່ບຸກໂຈມຕີທັນທີໂລດ.

ການສູ້ຮົບກັນດຸເດືອດຫລາຍ ຄົນຕາຍເດຍລະດາດ ເລືອດອາບແຜ່ນດິນ ເຮັດໃຫ້ທັບທ້າວແອງກາ ແລະ ທ້າວກວ່າແຕກກະຈັດກະຈາຍໄປທົ່ວທິບທົ່ວແດນ ແລ້ວທ້າວຮຸ່ງກໍນຳທັບໃຫຍ່ເຂົ້າສູ່ເມືອງເງິນຍາງຢ່າງຜູ້ມີໄຊ !

ພໍຮຸ່ງເຊົ້າມາ ທ້າວຮຸ່ງຍັງນຳທັບອອກກວາດລ້າງຕໍ່ໄປ ແລະ ຕໍ່ສູ້ກັນຢ່າງດຸເດືອດຕື່ມອີກ ອັນເຮັດໃຫ້ທ້າວກວ່າ ແລະ ແມ່ທັບຄົນສຳຄັນຖືກຂ້າຕາຍໃນສະໜາມຮົບ ແລະ ທະຫານຕື່ມອີກຈຳນວນຫລວງຫລາຍ ທ້າວແອງກາຖືກຈັບເປັນສະເລີຍເສິກ ພ້ອມແມ່ທັບຄົນສຳຄັນຄື : ກວານແກ ແມນຟອງ ທ້າວປີ່ງ ໜູບັງ ແກວທອງ ແມນລາຍ ຊຽງຮັງ ອ້າຍທີ່ງ ແລະ ທະຫານຕື່ມອີກຈຳນວນສາມໝື່ນຄົນ ຊ້າງສາມພັນໂຕ ມ້າສາມຮ້ອຍໂຕ.

ຝ່າຍທ້າວຮຸ່ງ ຫລື ທ້າວເຈືອງ ເສຍກຳລັງໄປຈຳນວນສາມພັນຄົນ.

ຂຸນຊຶ່ມ ແລະ ມະເຫສີ ( ລຸງ ແລະ ປ້າ ) ດີອົກດີໃຈຫລາຍ ໂດຍບໍ່ລໍຖ້າໃຫ້ທ້າວຮຸ່ງເອີ່ຍຄຳ ຝາວຍົກນາງອົ້ວຄຳກັບນາງອາມຄາຍໃຫ້ຫລານຊາຍທັນທີ ເຊິ່ງເປັນທີ່ພໍອົກພໍໃຈຂອງທ້າວຮຸ່ງທີ່ຄິດເອົາໄວ້ຢູ່ແລ້ວ.

ພໍພັກແຮງແລ້ວ ທ້າວຮຸ່ງກໍຍົກທັບອອກຈາກເມືອງເງິນຍາງ ໂດຍສົມທົບກຳລັງທັງ 3 ເມືອງຄື ທັບເມືອງສວນຕານ ທັບເມືອງຊຽງເຄືອ ແລະ ທັບເມືອງເງິນຍາງ ເພື່ອມຸ້ງສູ່ເມືອງປະກັນປາບໃຫ້ລາບຄາບ.

ນາງອົ້ວຄຳ ແລະ ນາງອາມຄາຍອອກມາສົ່ງທ້າວຮຸ່ງຜູ້ເປັນສາມີຮອດນອກເມືອງ ນາງອົ້ວຄຳຊົງຊ້າງຊື່ວ່າ "ພັງເຫີນປະຄົມາດ" ນາງອາມຄາຍຊົງຊ້າງຊື່ວ່າ "ອິນກອງ"

ທ້າວຮຸ່ງຍົກທັບໄປເຖິງທ່າຍອງ ຜາຫລອດ ຢູ່ບ່ອນນີ້ໄດ້ພົບເຫັນຊ້າງມ້າຈຳນວນຫລວງຫລາຍ ຂອງຫມູ່ບັງທີ່ເອົາຕົວຫລົບຫນີໄປກ່ອນແລ້ວ.

ອອກຈາກຜາຫລອດແລ້ວ ທ້າວຮຸ່ງກໍຍົກທັບໄປເຖິງພູທຸ່ມ ອັນເປັນບ່ອນຢູ່ຂອງພວກເຜົ່າພາງດຳ ແລ້ວເດີນທາງຕໍ່ໄປຮອດເຂດເມືອງປະກັນໃນວັນດຽວກັນ.

ກ່ອນຈະເຂົ້າຕີເມືອງປະກັນ ທ້າວຮຸ່ງໄດ້ເຂົ້າຕີເມືອງຊຽງບານບ່ອນທາງຜ່ານ ເຊິ່ງມີພົນລະເມືອງເຖິງ 5 ແສນຄົນ ແລະ ມີຊ້າງ 1.000 ຕົວ.

ເມືອງຊຽງບານມີເຂດແດນຕິດກັບເຂດແດນຂອງສີທົບເຂມ (ຂະເມນ) ຫລື ຂອມ ແລະ ຫໍ້ (ລາວຫນອງແສ ) (1) ແລ້ວທ້າວຮຸ່ງກໍເຂົ້າຕີເອົາຊຽງບານໄດ້ໃນເຊົ້າມື້ນັ້ນເອງ.

---

(1) ສັນນິຖານວ່າ ແມ່ນພວກຄົນລາວທີ່ອົບພະຍົບລົງມາຈາກຫນອງແສ ເພາະສະໄຫມນັ້ນຄົນເຜົ່າລາວອົບພະຍົບຫລົບໄພໄປທົ່ວແຫ່ງຫົນ.

ທ້າວຮຸ່ງຈັບແກວເພີງ ທ້າວແດດ ແລະ ແມນເຮືອງໄດ້ ສ່ວນແກວເຮືອກຟ້າວ ໂຕນລົງຈາກຄໍຊ້າງປົບຕາຍໄປບອກໃຫ້ນາງກ່ວາເມຍຂອງທ້າວກ່ວາຢູ່ເມືອງປະກັນຊາບ.

ນາງກ່ວາຟ້າວລະດົມໄພ່ພົນຈັດທັບອອກສູ້ຮົບຈົນສຸດຄວາມສາມາດກັບທ້າວຮຸ່ງ ແລ້ວນາງກໍຕາຍຢູ່ໃນສະໜາມຮົບ.

ເມື່ອເຫັນນາງກ່ວາຕາຍແລ້ວ ໄພ່ພົນຂອງນາງກ່ວາກໍອ່ອນນ້ອມແລ້ວອັງເຊີນທ້າວຮຸ່ງຂຶ້ນຄອງເມືອງປະກັນ ພ້ອມທັງມອບ 4 ສາວແຫ່ງເມືອງປະກັນໃຫ້ເປັນມະເຫສີເປັນລາງວັນອີກດ້ວຍ ຄື: ນາງເກີດ ນາງວຽນ ນາງພົມ ແລະ ນາງອູ່ [1] ຫລື ອູ່ແກ້ວ.

ຈາກສົງຄາມໃຫຍ່ ແລະ ໄດ້ພາບແພ້ຂ້າເສິກສັດຕູຄືແນວນັ້ນ ຊື່ສຽງຂອງທ້າວຮຸ່ງ ຫລື ທ້າວເຈືອງ ຫລື ຂຸນເຈືອງກໍໄດ້ລືຊາປາກົດໄປທົ່ວແຜ່ນດິນແດນລາ ຈົນເຖິງວໍແຕຊຽງໃຫຍ່ພົມເຝືອ ຫໍ່ທົ່ວແດງ ຈີນ ຈາມ ງຽວ ເຂມຂອມ ມ່ານ ເມັງ ແມນຮຽວ ແມນເອີກປ່ອງ ທຸນບັງ ແລະ ພວກເຜົ່າຄົນຕ່າງໆເຊິ່ງເປັນເມືອງ ເປັນນະຄອນໃກ້ໄກກໍມາຂໍອ່ອນນ້ອມເສຍສ່ວຍໃຫ້ແກ່ທ້າວເຈືອງ ຫລື ຂຸນເຈືອງທັງສິ້ນ ນັກປາດ ຜູ້ມີສະຕິປັນຍາ ຈຶ່ງໄດ້ຂຽນແຕ່ງບົດຄຳຮ້ອຍແກ້ວ ຄຳຮ້ອຍກອງສັນລະເສີນຂຸນເຈືອງ ຈົນກາຍເປັນຕຳນານເລົ່າຂານກັນສືບຕໍ່ມາຕາບທຸກວັນນີ້.

ຂຸນເຈືອງໄດ້ຈັດສັນປັນສ່ວນໃຫ້ເສນາອາມາດ ຜູ້ມີຄຸນງາມຄວາມດີກິນນາ [2] ໃນເຂດເມືອງປະກັນ ຫລື ຊຽງຂວັນ ດັ່ງນີ້ :

---

(1) ນາງອູ່ ເປັນທິດາຂອງທ້າວກ່ວາ ແລະ ນາງກ່ວາ.

(2) ກິນນາ ແມ່ນແບ່ງປັນຜົນປະໂຫຍດ ມອບໜ້າທີ່ຕຳແໜ່ງ ແລະ ໜ້າທີ່ຮັບຜິດຊອບໃຫ້ແກ່ຜູ້ທີ່ມີຄຸນງາມຄວາມດີ.

1. ຂຸນເຍັຍ ກິນນາຂວາງ ກໍາກັບພາກສ່ວນຊ່ວຍຊ່າງ

2. ແອງຄອນ ກິນນາ ຊຽງບານ ບ່ອນນີ້ເກັບສ່ວຍໄດ້ຫລາຍ ເພາະເປັນບ່ອນທີ່ມີຕະຫລາດການຄ້າຫລາຍ.

3. ຄອນຊາຍ ກິນນາໄປ່ກອງທູນ ບ່ອນນີ້ເກັບເອົ້າໄດ້ຫລາຍ.

4. ນາປັດຈີນ ຕິດກັບເຂດແດນຜາຫລອດ ຍົກໃຫ້ນາງເມັງ.

5. ນາຄໍາ ດິນແດນຂອງແກວກໍ່າ ມອບໃຫ້ໄຊສື.

6. ນາພຽງຜາຫານ ມອບໃຫ້ແອງຜາຍ.

7. ນາຂອງແມນເລື່ອນ ຍົກໃຫ້ເປັນນານ້ອຍ.

8. ນາຂອງແມນໄຟ ໃຫ້ຂື້ນກັບເມືອງເວີນຍາງ

9. ນາດີຊຽງຂວັນ ສວນໝາກ ສວນພ້າວ ມອບໃຫ້ນາງອີ່ວຄ່າ

10. ນາດົງຈັນ ມອບໃຫ້ນາງອາມຄາຍ

11. ນາຄໍາວັງ ມອບໃຫ້ອາຍເກື່ອນ

12. ນາແກວເຮືອກ ເບື້ອງຕາເວັນອອກ ເຊິ່ງມີເຂດແດນຕິດກັບຈີນ ຍົກໃຫ້ພົນສ່ວຍ.

13. ນາຮີມທົ່ງບາງບິນ ຍົກໃຫ້ອາວພອງ

14. ນາບຽງພາຍນອກ ຍົກໃຫ້ຈາຊອນ

ແລ້ວຂຸນເຈືອງກໍມອບເມືອງປະກັນໃຫ້ອາຍຄວ່າງ ແລະຂຸນຄອນປົກຄອງໂດຍສັ່ງວ່າ :

ຢ່າກ່າວອ້າງ ຫາທ່ອນຄໍາແດ່ງ
ກິນຮາງວັນ ແຕ່ງເອົາຜູ້ໄຮ
ອັນນັ້ນ ຂອງແພງໄວ້ ໃນເຍຍເອ້ອວດ
ແຄງບໍ່ໄດ້ ຊິນຊ້າງຊ່ວຍເຮົາ ຄວ່າງເອີຍ...

ຂຸນເຈືອງໄດ້ອັງເຊີນພະມາດາ ຄືນາງຈອມໄປນັ່ງເມືອງຊຽງທອງ[1] ເປັນທີ່ຮຽບຮ້ອຍແລ້ວ ຂຸນເຈືອງໄດ້ຂໍເງິນຄຳ ແລະ ຊ້າງມ້າຂ້ອຍຂ້າ ໃຫ້ຄືນຕາມຈຳນວນທີ່ຄາດຄ່າດອງໃນເມື່ອກ່ອນຈາກຂຸນຊຶມຜູ້ເປັນລຸງ ແລ້ວໄປແຕ່ງເອົານາງງ້ອມມາເປັນມະເຫສີ ແລະ ມີໂອຣົດອົງໜຶ່ງຊື່ງພະນາມວ່າ "ທ້າວຄຳຮຸ່ງ" ເພາະທ້າວຄຳຮຸ່ງກໍປະສູດຕອນຮຸ່ງແຈ້ງດັ່ງດຽວກັບຂຸນເຈືອງ ຈື່ງຖະໜອມແພງຮັກດັ່ງແກ້ວຕາດວງໃຈ.

ມີແຂກຕ່າງເມືອງໄດ້ນຳເອົາເຄື່ອງບັນນາການມາຖວາຍຄື:

1. ທ້ຳໃຫຍ່ໜອງແສ
2. ພະຍາຟ້າຮ່ວານ ຢູ່ເມືອງຕຸມວາງ
3. ເມືອງຈີນ
4. ເມືອງພະໂຄ
5. ເມືອງນານ
6. ເມືອງຊວາ
7. ເມືອງຜາບີ່
8. ພວມເຂມ ແລະ ພວກລື້

ມີຢູ່ມື້ໜຶ່ງ ຂຸນເຈືອງອອກໄປລ່າເນື້ອເປັນເວລາຫລາຍເດືອນ ນາງອົ້ວຄ່າກັບນາງງ້ອມເກີດຜິດຖຽງກັນຢ່າງແຮງ ຈົນນາງງ້ອມອົດທົນບໍ່ໄດ້ ຈື່ງຫອບເອົາພະໂອຣົດ ແລະ ພາບ່າວໄພ່ຂອງຕົນກັບຄືນໄປຢູ່ເມືອງຊຽງເຄືອ

---

(1) ມີບາງຕຳນານຂຽນວ່າ: ໃຫ້ນາງຈອມໄປນັ່ງເມືອງຊຽງຂວັນ ເຊິ່ງເປັນເມືອງຕໍ່ແດນກັບເມືອງປະກັນ.

ເມືອງເດີມຂອງຕົນ.

ພໍຂຸນເຈືອງຊາບຂ່າວຈຶ່ງຟ້າວກັບເມືອງ ແລະ ເສຍພະໄທຫລາຍ ບອກໃຫ້ເສນາໄປບອກໃຫ້ນາງອາມຄາຍ ແລະ ພວກເມຍທັງຫລາຍທີ່ໄດ້ມາ ແຕ່ເມືອງປະກັນ ຈຶ່ງພາກັນໄປຕາມເອົານາງງ້ອມກັບຄືນມາ ທັງໄດ້ແຕ່ງຄົນ ໄປອົງເຊີນເອົາພະມາດາ ແລະ ແມ່ທັບອື່ນໆ... ເວັ້ນເສຍແຕ່ອ້າຍຄອ່າງໃຫ ມາຢູ່ແຂວງເມືອງ.

ກ່າວເຖິງທ້າວທິ່ງ ແລະ ຫຸນບັງ ທີ່ຫລົບໜີຍາມສູ້ຣົບໄປໄດ້ກໍໄປ ເພິ່ງພາອາໄສຢູ່ນຳພະຍາຟ້າຣວ່ານ ແລະ ໄດ້ລັກລອບນຳເອົາທະຫານມາ ປຸ້ນສະດົມ ຢູ່ເມືອງປະກັນເປັນປະຈຳ.

ຂຸນເຈືອງອອກປາບ ແລະ ນຳໄປເຖິງບ່ອນເຖິງທີ່ ແລ້ວກໍໄດ້ໄປ ເອົາເມຍຕື່ມອີກຄົນໜຶ່ງຊື່ ນາງແພງມາດ ພະທິດາຂອງເຈົ້າເມືອງຊຽງເຊີຍ

ຂຸນເຈືອງຂໍຮອງພະຍາຟ້າຣວ່ານ ໃຫ້ຈັດສົ່ງຫຸນບັງ ແລະ ທ້າວທິ່ງ ອອກມາໃຫ້ແຕ່ໂດຍດີ ແລ້ວກໍຈະບໍ່ເຮັດຫຍັງໃຫ້ແກ່ເມືອງຕຸມວາງ.

ພະຍາຟ້າຣວ່ານບໍ່ຍອມ ຈຶ່ງແຕ່ງທູດໄປເຊີນແຖນລໍຢູ່ເມືອງກາຫລົງ ໃຫ້ມາຊ່ອຍ.

ແຖນລໍເຫັນໃຈ ແລະ ສົງສານຜູ້ລີ້ໄພສົງຄາມ ຈຶ່ງຈັດແມ່ທັບ ແຖນເລນ" ເປັນປີກຂວາ " ແຖນລີ " ເປັນປີກຊ້າຍ" ໃຫ້ພະຍາຟ້າຣວ່ານຢູ່ ເຄິ່ງກາງ ສ່ວນແຖນລໍເອງຂີ່ກວຽນເຂົ້າຣົບກັບທັບຂຸນເຈືອງ ຢູ່ທີ່ທົ່ງ ກວາງ[1] ສຸດຫູສຸດຕາ.

ການເສິກຄັ້ງນີ້ໃຫຍ່ຫລວງຫນັກ ຜູ້ຄົນລົ້ມຕາຍເດຍລະດາດ ສາຍນ້ຳ ແດງຈານເປັນສາຍເລືອດ.

---

(1) ທົ່ງກວ້າງສຸດຫູສຸດຕາ ສັນນິຖານວ່າ ແມ່ນທົ່ງໄຫຫີນ.

ຂຸນເຈືອງສູ້ແຖນລໍບໍ່ໄດ້ ຈຶ່ງນໍາທັບກັບເຂົ້າໃນເມືອງປະກັນ ແຕ່ງໃຫ້ພິມມະບານ ໄປບອກໃຫ້ຂຸນເຈືອງຜູ້ເປັນອ້າຍຢູ່ເມືອງສວນຕານ ໄປບອກໃຫ້ຂຸນຊື່ນຢູ່ເມືອງຊຽງເຄືອ ນໍາເອົາໄພ່ພົນໂຍທາທັງໝົດມາຊ່ອຍການເສິກໃຫຍ່ຫລວງຄັ້ງນີ້.

ເມື່ອທັບໃຫຍ່ທັງສອງເມືອງມາໜູນຊ່ອຍ ຂຸນເຈືອງນໍາທັບໃຫຍ່ທີ່ບໍ່ເຄີຍມີມາຈັກເທື່ອອອກສູ້ຣົບກັບແຖນລໍ ແລະ ພະຍາຟ້າຣ່ວານຢ່າງສຸດຄວາມສາມາດ.

ໄພ່ພົນເສນາລົ້ມຕາຍເປັນຂອນກາງໄຮ່ຂວາກໄຂວ່ເຕັມເກື່ອນກາດທົ່ວທົ່ງກວ້າງ ແລະ ແລ້ວ... ຂຸນເຈືອງກໍຖືກແຖນລໍກັບພະຍາຟ້າຣ່ວານຟາດຟັນຕາຍ ຢູ່ກາງສະໜາມຣົບເທິງຄໍຊ້າງ ເສນາໂຍທາຂອງຂຸນເຈືອງ ຈຶ່ງແຕກຊະນະໂມ ຈຶ່ງເປັນອັນວ່າ ເປັນການປະລາໄຊດ້ວຍຊີວິດເທື່ອທໍາອິດແລະ ເທື່ອສຸດທ້າຍຂອງຂຸນເຈືອງຜູ້ເຮືອງນາມນະບັດນັ້ນ ເຊິ່ງຂຸນເຈືອງປົກຄອງເມືອງປະກັນດົນນານເຖິງ 17 ປີ ເຕັມກໍອະວະສານດ້ວຍຊີວິດຊົ່ວນິລັນ.

ຕາຕະລາງວົງກະສັດທີ່ປົກຄອງນະຄອນຫີຣັນເງິນຍາງ ຕາມຕໍານານເມືອງພະເຢົາ ຈາກ " ພົງສາວະດານໂຍນົກ " ຂອງພະຍາປຣະຊາກິດກຣະຈັກ " ບຸນນາກ "

| ລໍາດັບ | ພະນາມ | ຈຸນລະສັກກະຣາດ | ໝາຍເຫດ |
|---|---|---|---|
| 1 | ລະວະຈັກຣາດ ( ລາວຈັກ ) | 1 | |
| 2 | ລາວເກົ້າແກ້ວ | 123 | |
| 3 | ລາວເລົາ | 147 | |
| 4 | ລາວຕັນ | 161 | |
| 5 | ລາວກຽນ | 173 | |

| | | | |
|---|---|---|---|
| 6 | ລາວສານ | 182 | |
| 7 | ລາວລົມ | 185 | |
| 8 | ລາວເຫລົາ | 193 | |
| 9 | ລາວຄອບ | 197 | |
| 10 | ລາວເສົາ | 209 | |
| 11 | ລາວຂວາ | 218 | |
| 12 | ລາວກອກ | 224 | ເສຍເມືອງໃຫ້ປະເທດ |
| 13 | ລາວຕົກ | 231 | ລ້ານຊ້າງ |
| 14 | ລາວຈີງ | 239 | |
| 15 | ລາວຕັນ | 243 | |
| 16 | ລາວອ້າຍສານ | 249 | |
| 17 | ລາວອ້າຍຟ້າ | 259 | |
| 18 | ລາວຍີ່ໃໝ່ | 263 | |
| 19 | ຂຸນຫີມ | 267 | |
| 20 | ຂຸນເຫີງ | 272 | |
| 21 | ຂຸນເງີນ | 283 | |
| 22 | ຂຸນເຊີງ | 291 | |
| 23 | ຂຸນຊະນານ | 298 | |
| 24 | ຂຸນເຈືງ | 302 | |
| 25 | ລາວແກ້ວ | 308 | |
| 26 | ລາວກັບ | 315 | |
| 27 | ລາວເກີດ | 321 | |
| 28 | ລາວກຣວ | 333 | |

| | | |
|---|---|---|
| 29 | ລາວຄຽວ | 337 |
| 30 | ລາວທຶງ | 356 |
| 31 | ລາວທຸມ | 368 |
| 32 | ລາວເທີງ | 374 |
| 33 | ລາວຂາ | 384 |
| 34 | ລາວຈົງ | 391 |
| 35 | ລາວຕົນຕໍ່ | 400 |
| 36 | ລາວໂທນ | 407 |
| 37 | ລາວແກ້ວ | 415 |
| 38 | ລາວກອກ | 424 |
| 39 | ລາວຕົກ | 435 |
| 40 | ຂຸນເທີງ | 445 |
| 41 | ຂຸນເງິນ | 455 |

24 / VII

# ວົງກະສັດທີ່ປົກຄອງເມືອງພະເຢົາ

ຫາມຈຳໜ່າຍ

ຂຸນຈອມທັມເປັນໂອຣົດຂອງຂຸນເງິນໄດ້ຕັ້ງເມືອງໃໝ່ ຊື່ເມືອງພູກາ ຫລື ພູການ ຫລື ພູການຍາວ.

| ລຳດັບ | ພະນາມ | ຈຸນລະສັກກະຣາດ | ໝາຍເຫດ |
|---|---|---|---|
| 1 | ຂຸນຈອມທັມ | 458 | ຂອກຈາກນະຄອນໂຍນົກ ( ຊຽງແສນ) |

| | | |
|---|---|---|
| 2 | ຈຸມເຈືອງ | 482 |
| 3 | ຈອມພາເຮືອງ | 488 |
| 4 | ຂຸນແພງ | 502 |
| 5 | ຂຸນຊອງ | 507 |
| 6 | ຂຸນແກ້ວແວ່ນເມືອງ | 529 |
| 7 | ຂຸນຈອມປາສາດ | 557 |
| 8 | ຂຸນເລົ່າ | 561 |
| 9 | ຂຸນພັນ | 569 |
| 10 | ຂຸນເສົ້າ | 583 |
| 11 | ຂຸນມິ່ງເມືອງ | 599 |
| 12 | ຂຸນງຳເມືອງ | 620 |
| 13 | ພະຍາຄຳແດງ | 690 |
| 14 | ພະຍາຄຳຖາ | |
| 15 | ທ້າວພິນ | |
| 16 | ທ້າວເທິງ | |
| 17 | ຂຸນເຊີງ | |
| 18 | ຂຸນແສນເມືອງມາ | |
| 19 | ຂຸນໜາຍນາ | |
| 20 | ຂຸນໄຊສີງຄາມ | |
| 21 | ຂຸນເມືອງຍີ່ | 1019 |

# ວົງກະສັດນະຄອນທີ່ຮັບເງິນຍາງ

## ການຕໍາບານຊຽງໃຫມ່ ຈາກ "ພົງສາວະດານໂຍນົກ"

| ລໍາດັບ | ພະນາມ | ຈຸນລະສັກກະຣາດ | ໝາຍເຫດ |
|---|---|---|---|
| 1 | ລະວະຈັກຣາດ | 1 | ຕັ້ງເມືອງຊຽງລາວ ຊຽງດອຍຕຸງ |
| 2. | ລາວເກົ້າແກ້ວ | 120 | |
| 3 | ລາວເສົາ | 165 | |
| 4 | ລາວຕັງ | 204 | |
| 5 | ລາວກົມ | 203 | |
| 6 | ລາວແຫລວ | 248 | |
| 7 | ລາວກັບ | 264 | |
| 8 | ລາວກິມ | 279 | |
| 9 | ລາວຄຽງ | 296 | |
| 10 | ລາວຄິວ | 322 | |
| 11 | ລາວເທິງ | 342 | |
| 12 | ລາວທຶງ | 357 | |
| 13 | ລາວຕົນ | 377 | |
| 14 | ລາວສົມ | 394 | |
| 15 | ລາວກອກ | 415 | |
| 16 | ບາວກິວ | 442 | |
| 17 | ລາວຈິງ | 457 | |

| | | | |
|---|---|---|---|
| 18 | ຈອມພາເຮືອງ | 473 | ສັນນິຖານວ່າແມ່ນຂຸນຈອມທັມ |
| 19 | ລາວເຈືອງ | 491 | ສັນນິຖານວ່າແມ່ນຂຸນເຈືອງຫລືທ້າວຮຸ່ງ |
| 20 | ລາວເງິນເຮືອງ | 515 | |
| 21 | ລາວຊິນ | 541 | |
| 22 | ລາວມິງ | 552 | |
| 23 | ລາວເມືອງ | 573 | |
| 24 | ລາວເມັງ | 588 | |


# ຕຳນານຕ່າງໆ...

## ( ທີ່ກ່າວເຖິງ ຂຸນເຈືອງ )

ຜ່ານ ຈາກການສຶກສາຄົ້ນຄວ້າຢ່າງເອົາຈິງມາເປັນເວລາ 10 ປີ ( ສິບປີ ) ເຫັນວ່າ ເລື່ອງຂຸນເຈືອງແມ່ນເປັນປະເພດນິຍາຍອີງປະຫວັດສາດ ເຊິ່ງຜູ້ແຕ່ງໄດ້ແຕ່ງຂື້ນຕາມຮ່ອງຮອຍປະຫວັດສາດ ແລະ ໄດ້ກ່ຽວພັນກັບຊາດລາວ ໃນສະໄໝນັ້ນໂດຍສະເພາະ.

ສະໄໝນັ້ນ ແຜ່ນດິນສຸວັນນະພູມປະເທດ ຫລື ແຜ່ນດິນແຫລມທອງ ຫລື ແຜ່ນດິນອິນດູຈີນ ຍັງບໍ່ທັນມີປະເທດໃດກຳເນີດເກີດຂື້ນເທື່ອ ຍັງບໍ່ທັນມີເຜົ່າຊົນໃດສະຖາປະນາສ້າງຕັ້ງປະເທດຂອງຕົນເອງ ຂື້ນເປັນທາງການ

ເທື່ອ ເພາະ ສະໄໝນັ້ນພຽງແຕ່ມະນຸດໄດ້ເຕົ້າໂຮມກັນເຂົ້າຢູ່ເປັນກຸ່ມກ້ອນ ມີເມືອງ ມີນະຄອນຂອງໃຜຂອງລາວຢ່າງມີອິດສະຫລະ ແລະ ບໍ່ຂຶ້ນກັບໃຜ ເຊັ່ນ ຢູ່ເມືອງປະກັນກໍເປັນເມືອງເປັນນະຄອນໜຶ່ງ ຢູ່ເມືອງຊວາ ກໍເປັນເມືອງນະຄອນໜຶ່ງ ບໍ່ທັນລວມກັນເຂົ້າເປັນປະເທດຊາດໜຶ່ງຊາດດຽວໄດ້ເທື່ອ.

ເມື່ອສະໄໝນັ້ນ ໄດ້ມີຄົນຊື່ວ່າທ້າວເຈືອງ ມີຄວາມອົງອາດກ້າຫານສູ້ຮົບຜາບແພ້ຂ້າເສິກສັດຕູໄດ້ ນັກປາດອາຈານນັກປະດິດຄິດແຕ່ງກໍພາກັນຂຽນເລື່ອງລາວກ່ຽວກັບທ້າວຮຸ່ງທ້າວເຈືອງ ຫລື ຂຸນເຈືອງຂຶ້ນ ເພື່ອຍ້ອງຍໍສັນລະເສີນ ເພື່ອເປັນແບບຢ່າງອັນດີໃຫ້ແກ່ຄົນເຄົາຣົບນັບຖື.

ຕາມພົງສາວະດານໂຍນົກ [1] ອັນເປັນປະຫວັດສາດທີ່ " ພະຍາປະຊາກິດກໍຣະຈັກ " ຂຽນຮັບໂຮມມາຈາກຕຳນານເມືອງເໜືອຂອງປະເທດໄທນັ້ນ ເອີ້ນຊື່ທ້າວຮຸ່ງວ່າ " ຂຸນເຈືອງ " ແລະ ຂຽນວ່າເປັນຄົນລານນາ " ລາວຈົກ [2] ທີ່ສືບເຊື້ອສາຍມາຈາກ " ພະເຈົ້າລະວະຈັກກະເທວະຣາດ " ຜູ້ຕັ້ງຕົ້ນວົງນີ້ຂຶ້ນໃນປີ ຄ.ສ 638 ( ພ.ສ 1181 ແລະ ຈ.ສ 1) ຄືໃນປີທີ່ພະຍາອະນຸຣຸດທະຣາຊ ແຫ່ງພະມ້າຕັ້ງ " ຈ.ສ " ຈຸລະສັງກາດນີ້ຂຶ້ນເຊັ່ນດຽວກັນ.

ໃນລະຫວ່າງຕັ້ງແຕ່ປີ ຄ.ສ 657 (ພ.ສ 1200) ພວກຂອມໄດ້ແຜ່ອຳນາດໄປທາງເໜືອ ດັ່ງທີ່ປາກົດຢູ່ໃນໜັງສືເລື່ອງຈາມເທວີວົງ ທີ່ພະໂພ

---

(1) ໂຍນົກ ແມ່ນເມືອງໂຍນົກທີ່ຂຸນບໍຣົມຣາຊາທິຣາດ ໄດ້ສົ່ງລູກຊາຍຄົນທີ 4 ຊື່ " ໃສ່ຜົງ " ໄປປົກຄອງ

(2) ລາວຈົກ ແມ່ນສະໄໝກາງລະຫວ່າງ ລາວໜອງແສ ແລະ ຊຽງລາວ ( ລາຍລະອຽດໃຫ້ເບິ່ງຕາຕະລາງ 1)

ທີ່ລັງສືຂຽນເອົາໄວ້ວ່າ: ເມື່ອປີ ຄ.ສ 661 ( ພ.ສ 1204 ) ພະຍາຂອມ ຜູ້ເປັນເຈົ້າແຜ່ນດິນເມືອງລະໂວ້ [1] ໄດ້ສົ່ງນາງຈາມເທວີວົງໄປເປັນເຈົ້າເມືອງປົກຄອງເມືອງຫະລິພູນໄຊ [2].

ແລ້ວລູກຊາຍຂອງນາງຈາມເທວີວົງ ປົກຄອງເມືອງສືບຕໍ່ມາຈົນເຖິງປີ ຄ.ສ 740 ( ພ.ສ 1283 ).

ສ່ວນນ້ອງຊາຍຂອງທ້າວມະຫັນຕະບົດ ຊື່ວ່າ ອິນທຣະວໍຣະມັນໄດ້ເປັນເຈົ້າເມືອງເຂລາງ [3].

ຢູ່ຕາມເຂດພູດອຍ ອິງເຂດເມືອງພະເຢົາ ທາງການກອງຄົ້ນຄວ້າບູຮານວັດຖຸຂອງໄທ ໄດ້ຄົ້ນພົບເຄື່ອງທີ່ເຮັດດ້ວຍຫີນ ເປັນຕົ້ນ ຄົກຫີນ ສາກຫີນ ລູກຫີນບົດ ເປັນຈຳນວນຫລວງຫລາຍ ເຄື່ອງໃຊ້ເຫລົ່ານີ້ ເປັນສີມືຂອງພວກຂອມທັງນອນ.

ຢູ່ໃນຫນັງສືຄຳກອນພື້ນ ທ້າວຮຸ່ງ ມີຫລາຍບ່ອນບອກແຈ້ງວ່າ ພວກທ້າວຮຸ່ງ ເຊັ່ນເມຍຂອງທ້າວຮຸ່ງເປັນເຊື້ອຊາດຂອມດັ່ງຄຳກອນ ຕອນຊົມຄວາມງາມຂອງນາງງອມວ່າ:

**ຮີດັ່ງ** ປາດແຕ່ຟ້າສະເດັດທ່ອງ ທໍຣະນີ
ໂສມຄານຄວນຄາດເຈືອງ ທຽມທ້າວ
ນັກສະຫນົມເຫນັ້ານາຣີ ຮຽງຮອບ
ກາກ່ອງກ້າວງາມລ້ຳ **ລູກຂອມ**

---

(1) ເມືອງລະໂວ້ ແມ່ນເມືອງລົບບູລີປະເທດໄທ

(2) ຫະລິພູນໄຊ ແມ່ນເມືອງລົບບູລີ ປະເທດໄທ

(3) ເມືອງເຂລາງ ແມ່ນເມືອງລຳປາງປະເທດໄທ.

ໜັງສືພື້ນທ້າວເຈືອງ ຫລື ທ້າວຮຸ່ງ ອັນເປັນສະບັບອັກສອນທັມຂອງລາວບອກວ່າ ໄດ້ມາຈາກເລື່ອງ " ນິຄລະປະຫະອະລັນຊະນະ " ແປວ່າເລື່ອງ " ຄົນເກີດຈາກຮອຍເປື້ອ " ອັນເປັນເລື່ອງດຽວກັນກັບເລື່ອງ " ນາງຈາມເທວີວົງ " ທີ່ພະໂພທິຣັງສີ ຊາວເມືອງຊຽງໃໝ່ ເປັນຜູ້ແຕ່ງຂຶ້ນເປັນພາສາປາລີ.

ພະໂພທິລັງສີ ບອກວ່າ ແຕ່ງຈາກເລື່ອງມະຫາຈາລິກ ຫລື ມະຫາກາບ ອັນເປັນພາສາພື້ນເມືອງ ໃຫ້ເປັນພາສາປາລີ.

ດັ່ງນັ້ນ ຈຶ່ງສັນນິຖານວ່າ: ເລື່ອງນາງຈາມເທວີວົງ ກັບເລື່ອງທ້າວຮຸ່ງ ອາດເປັນເລື່ອງດຽວກັນ ເພາະໃນໜັງສືນັ້ນບອກວ່າ ນາງຈາມເທວີວົງເປັນລູກສາວພະຍາຂອມແຫ່ງເມືອງລະໂວ້ ຂື້ນມາເປັນເຈົ້າເມືອງລຳພູນ ແລະ ນາງຈາມເທວີວົງເປັນແມ່ໝ້າຍ ມີລູກຊາຍສອງຄົນ ຄື: ທ້າວມະຫັນຕະບົດ ແລະ ທ້າວອິນທະຣະວະຣະມັນ ຜູ້ເປັນນ້ອງມີບົດບາດສຳຄັນ ໄດ້ຣົບເຣືອກັບພວກເຈົ້າຖິ່ນເດີມ ຄືພວກລົວະ ...

ສ່ວນເລື່ອງທ້າວຮຸ່ງ ທ້າວເຈືອງກໍຂຽນວ່າ ມີແມ່ຊື່ຈອມ ແລະ ເປັນໝ້າຍ ມີລູກຊາຍສອງຄົນ ເຊັ່ນດຽວກັນ.

ຄຳວ່າ ຈອມກັບ ຈາມ ກໍຄືງແມ່ນຄຳດຽວກັນ ຈຶ່ງບໍ່ເປັນເລື່ອງແປກປະຫລາດຫຍັງໃດ ເມື່ອຄົນຜູ້ໜຶ່ງມີຊື່ສຽງດີ ໃຜໆກໍຢາກຍົກຍໍສັນລະເສີນ ແລະ ຮັບເອົາມາເປັນເຜົ່າຂອງຕົນ ຫລື ການປະດິດຄິດແຕ່ງອາດຈະປ່ຽນຊື່ຕົວລະຄອນ ແລະ ປັ້ນແປງເນື້ອເລື່ອງໄປແດ່ ໃຫ້ດີຂຶ້ນຕື່ມແດ່ ຖືວ່າເປັນເລື່ອງທຳມະດາຢູ່ໃນວົງການປະດິດຄິດແຕ່ງທີ່ມີເລື່ອງລາວຂວາກໄຂວ່ກັນໄປມາ...



ເປັນຮູບຮ່າງແຜ່ນດິນຂອງໄທລາວແລ້ວ
( ຢູ່ລາວສະໄໝເຈົ້າຟ້າງຸ່ມຫາຍແຜ່ນດິນ)
ປີ ຄ.ສ 1354 ພ.ສ 1897
ຈີນ
ອານາຈັກລ້ານນາ
ເມືອງລ້ານນາ
ອານາຈັກອ້າຍລາວ
ອານາຈັກອະຍຸທະຍາ
ບາງກອກ
ຮ້ອຍເອດ
ໂຄລາດ
ນ້ຳຂອງ
ເມືອງລ່ຳປາ
ຮູ່ງຂວັນ
ຮາໂນ່ຍ

# ຕາຕະລາງທີ 1
## ເວົ້າເຖິງອານາຈັກໜອງແສ ຫລື ນ່ານເຈົ້າ
## ທີ່ມີການເຄື່ອນໄຫວລົງສູ່ທິດໃຕ້

ອ້າຍລາວ
ນ່ານເຈົ້າ
ໜອງແສ

ປູ່ເຈົ້າລາວຈົກ ( ແຖນ )

ຊຽງລາວ ດອຍຕຸງ

ລາວຈົກເທວະບຸດ
↓
(ເບິ່ງຕໍ່ຕາຕະລາງ 2)
ໃນຣາຊວົງລາວຈົກ

ນາ້ອຍອ້ອຍໜູ (ສິບສອງຈຸໄຕ-ດຽນບຽນຟູ)
↓
ຂຸນບໍຣົມຣາຊາທິຣາດ
↓
ລູກຊາຍທັງ 7
↓

ລ້ານຊ້າງ (ຂຸນລໍ) | ຫໍແຕ (ທໍ່) (ຍີ່ຜາລານ) | ອານາມ (ຈຸສົງ) | ໂຍນົກ (ໄສພົງ) | ອະຍຸທະຍາ (ງົວອິນ) | ຊຽງຄົມ (ລົກກົມ) | ຄໍາເກີດ (ເຈືອງ)

↓
ສິງຫະນະວັດ ມາຈາກເມືອງກາຫລົງ(ອ້າຍລາວ) ຫລານປູ່ຂອງຂຸນບໍຣົມ ເພາະ ເມື່ອໄສພົງສະຫວັນນະຄົດ ແລວ ໂຍນົກຂາດຣາຊະທາຍາດ ແຖນຈຶ່ງໃຫ້ສິງຫະນະວັດມາແທນ...

# ຕາຕະລາງທີ 2
## ເວົ້າເຖິງຣາຊະວົງລາວຈົກ ທີ່ມາຈາກອ້າຍລາວ ແລະ ຕັ້ງຖິ່ນຖານຂຶ້ນໃໝ່ ໃນຊຽງລາວ

ລາວຈົກເທວະຣາດ

ມີຜູ້ສືບມາຈົນຮອດສະໄໝຂຸນເງິນ

ນະຄອນເງິນຍາງ

ເງິນຍາງ ຂຸນເງິນ ພະເຢົາ

ຂຸນຊິນ ຂຸນຈອມທັມ

ຂຸນຊອງ

ຂຸນເຈືອງ

ລາວເງິນເຮືອງ

| | | | |
|---|---|---|---|
| ໂອຣົດຂຸນເຈືອງ ຈາກອົ້ວຄຳ ຫລື ອົ້ວຄຳຄອນ (5 ຊົ່ວຣາຊະການ | ເມືອງປະກັນ ອ້າຍຜາເຮືອງ | ລານຊ້າງ ຍີ່ຄຳຫາວ | ນ່ານ ສາມຂຸນແສງ |

ລາວເມັງ ຊຽງໃໝ່

ພະຍາເມັງຣາຍ(ໂອຣົດຂອງລາວເມັງ)

ເຈົ້າເຊດຖາທິຣາດຈາກລານຊ້າງ

# ຂໍ້ມູນ
# ທີ່ກ່າວເຖິງຂຸນເຈືອງ

**ເພື່ອ**ເປັນຂໍ້ມູນໃຫ້ແກ່ການສຶກສາຄົ້ນຄວ້າຕໍ່ໆໄປ ພວກຂ້າພະເຈົ້າ ຈຶ່ງໄດ້ເຕົ້າໂຮມເອົາຕອນທີ່ກ່າວເຖິງຂຸນເຈືອງຈາກປຶ້ມຕຳນານຕ່າງໆ... ມາຮຽບຮຽງຂຽນໄວ້ຕໍ່ໄປນີ້ ເພື່ອໃຫ້ມີອັນສົມທຽບຂອກຫາເຫດ ແລະ ຜົນ.

### ຢູ່ປຶ້ມພົງສາວະດານລາວ
### ລິດຈະນາໂດຍມະຫາ ສີລາ ວິຣະວົງ
### ຈັດພິມໂດຍ : ກົມມັດທະຍົມ ສຶກສາ
### ກະຊວງສຶກສາທິການ ປີ 1973

ບົດທີ 5 ໜ້າທີ 22 ຫົວຂໍ້ເວົ້າວ່າ "ອານາຈັກລ້ານຊ້າງ ເຈົ້າຂຸນລໍ ປະຖົມກະສັດແຫ່ງອານາຈັກລ້ານຊ້າງ ໄດ້ຂຽນວ່າ :

ຂຸນເຈືອງຝ່າທັມມະຣາດ ຫລື ຂຸນຮຸ່ງ[1] ໄທໃຕ ແລະ ຂະເມນເອີ້ນວ່າ "ພະຮ່ວງ" ສະເວີຍຣາດຊະສົມບັດຢູ່ນະຄອນເງິນຍາງຄືເມືອງ ຊຽງແສນ

---

(1) ຂຸນເຈືອງນີ້ ໃນໜັງສືພົງສາວະດານໂຍນົກກ່າວໄວ້ວ່າ ທ້າວເຈືອງເກີດປີຈຸນລະສັກກະຣາດ 461 ເມື່ອອາຍຸໄດ້ 35 ປີ ໄດ້ຍົກທັບໄປຕີເມືອງແກວປະກັນ ໃນຈຸນລະສັກກະຣາດ 496 ແລະ ອາຍຸໄດ້ 77 ປີ ໄດ້ຍົກທັບໄປຕີເມືອງແມນຕາທອບຂອບຟ້າຕາຍືນ ແລ້ວຖືກພວກແມນຂ້າຕາຍກັບຄໍຊ້າງ ຂຸນເຈືອງແມ່ນຊາດຂອມ ແລະ ເປັນພວກເມັງມອນ ຂອມເປັນພວກດຽວກັນ ຂຸນເຈືອງໄປລົບລູ່ພວກແມນ ແມ່ນລົບລູ່ກັບພວກຊາວລາວໜອງແສນັ້ນ ເອງ ດັ່ງມີຄຳກອນກ່າວວ່າ " ບ່າວຍີ່ໄດ້ແມນປີກຕັດຄໍ ຊາວໜອງແສປີກໜີວາງດາງ" .

ຂຸນເຈືອງໄດ້ທຳສົງຄາມກັບພວກແກວ ແລະ ຕີເອົາເມືອງປະກັນ ( ຊຽງຂວາງ) ຂອງແກວໄດ້ ເຈົ້າແອງກາ ເຈົ້າຄອງນະຄອນເມືອງປະກັນ ຕາຍໃນສະໜາມຮົບ.

ຂຸນເຈືອງໄດ້ເມືອງປະກັນແລ້ວ ຈຶ່ງທຳການສະຫລອງໄຊເຖິງ 7 ເດືອນ ແລະ ຈັດໃຫ້ທຳເຫລົ້າໄຫລ້ຽງໄພ່ພົນທີ່ມີຈຳນວນເປັນອັນມາກ ໄຫຫີນ ແຂວງຊຽງຂວາງ ຈຶ່ງຖືກັນວ່າ ເປັນໄຫເຫລົ້າເຈືອງຕໍ່ມາຈົນເທົ່າທຸກວັນນີ້.

ຄັນສະຫລອງໄຊສຳເລັດແລ້ວ ຂຸນເຈືອງຈຶ່ງໄດ້ຕັ້ງໃຫ້ຂຸນຄວງຢູ່ຮັກສາເມືອງ ສ່ວນຂຸນເຈືອງໄດ້ກັບຄືນໄປຄອງນະຄອນຊຽງແສນ [1].

ໃນເວລານັ້ນ ມີແມ່ທັບແກວຄົນໜຶ່ງຊື່ ທຸນບັງ ໄດ້ຍົກທັບມາຕີນະຄອນປະກັນ.

ຂຸນເຈືອງຊາບ ຈຶ່ງຍົກທັບມາປາບທຸນບັງ ທຸນບັງສູ້ບໍ່ໄດ້ຈຶ່ງໜີໄປເພິ່ງທາວຟ້າຮ່ວານ [2] ທີ່ເມືອງຕຸມວາງ.

ຂຸນເຈືອງຍົກທັບໄປເຖິງເມືອງຕຸມວາງ ໄດ້ຕໍ່ສູ້ກັນເປັນສາມາດ ເຈົ້າຟ້າຮ່ວານເຫັນວ່າຈະປ້ອງກັນເມືອງໄວ້ບໍ່ໄດ້ ຈຶ່ງແຕ່ງທູດຂຶ້ນໄປເຊີນເຈົ້າຂຸນລໍທີ່ນະຄອນກາຫລົງໃຫ້ລົງມາຊ່ອຍ.

ເມື່ອເຈົ້າຂຸນລໍໄດ້ຮັບສານແລ້ວ ຈຶ່ງພິຈາລະນາວ່າ ເວລານີ້ການສົງຄາມທາງເມືອງຈີນ ຍັງສະຫງົບຢູ່ ຄວນຈະຂະຫຍາຍອຳນາດລົງໄປທາງໃຕ້ ຈຶ່ງຮັບຄຳເຊີນຂອງເຈົ້າຟ້າຮ່ວານ ແລ້ວກໍຍົກຣິພົນໂຍທາຫານລົງມາປາບຂຸນເຈືອງທີ່ເມືອງຕຸມວາງ.

---

(1) ມີບາງຕຳນານວ່າ ຂຸນເຈືອງຄອງເມືອງປະກັນ 17 ປີ.

(2) ທາວຟ້າຮ່ວານແມ່ນລາວ ເມືອງຕຸມວາງເປັນຫົວເມືອງຂຶ້ນກັບນະຄອນກາຫຼົງ ໃນຕຳນານບອກວ່າ ຄາວທາງຫ່າງຈາກຕຸມວາງເຖິງກາຫຼົງ15 ວັນ.

ຂຸນລໍໄດ້ເອົາຊົນຊ້າງຟາດຟັນກັບຂຸນເຈືອງ ຈົນຂຸນເຈືອງຄໍຂາດຕາຍຢູ່ເທິງຄໍຊ້າງ ກອງທັບຂອມເລີຍແຕກ.

ຂຸນລໍນຳໄລ່ທັບຂອມຂອງຂຸນເຈືອງລົງມາເຖິງເມືອງຊວາ [1] (ເມືອງຫລວງພະບາງ) ມີເຈົ້າເມືອງປົກຄອງຊື່ ຂຸນກັນຮາງ ແລະ ຕີເມືອງຊວາໄດ້ ແລ້ວພະອົງຈຶ່ງຈັດຕັ້ງເມືອງຊວາຂຶ້ນເປັນຣາຊະທານີແຫ່ງປະເທດລາວລ້ານຊ້າງເປັນເທື່ອທຳອິດໃນປີ ພ.ສ 1300 ( ຄ.ສ 757) ແລ້ວປ່ຽນນາມເມືອງໃໝ່ວ່າ " ເມືອງຊຽງທອງ".

ຕັ້ງແຕ່ນັ້ນມາ ຊົນຊາດລາວຈຶ່ງໄດ້ລັ່ງໄຫລລົງມາຕັ້ງບ້ານເມືອງຢູ່ດິນແດນລ້ານຊ້າງ ແລະ ແຜ່ອຳນາດອອກໄປຢ່າງກວ້າງຂວາງ ແຕ່ຍັງພວກຂອມໃຫ້ຖອຍໄປທາງເມືອງນ່ານ ແລະ ອີກພວກໜຶ່ງຖອຍລົງມາທາງວຽງຈັນ.

ພວກຂອມທີ່ເປັນຊາວບ້ານປ່າຂາດອນ ອົບພະຍົບໜີບໍ່ທັນ ຈຶ່ງເຫລືອຄ້າງຢູ່ເປັນຊາວພູດອຍ ເຊິ່ງທຸກວັນນີ້ພວກເຮົາເອີ້ນວ່າ: ລາວເທິງ ນັ້ນເອງ.

--------------------

(1) ເມືອງຊວາ ເອີ້ນຕາມນາມຊົນຊາດຂອງຜູ້ເປັນເຈົ້າຂອງເດີມຄືພວກຂອມຊະວາ ຫລື ຊວາ ແລະ ທຸກວັນນີ້ໄດ້ກາຍເປັນພວກແຂກຊວາຢູ່ທາງປະ ເທດອິນດູເນເຊຍສ່ວນໜຶ່ງ.

# ຢູ່ປື້ມພາສາ ວັນນະຄະດີ
## ແລະ ວັດທະນະທຳຕາເວັນອອກ
## (LANGUE LITTERATURE CULTURE ORIENTALE)
## ລິດຈະນາໂດຍ ສ. ເດຊວົງສາ ພິມປີ 1974

ມີຫລາຍຕອນໄດ້ຖອດໃສ່ໃນປື້ມນີ້ແລ້ວ ແລະ ເພື່ອບໍ່ໃຫ້ຫລ້ຳຄືນ ຈຶ່ງຂໍຖອດບົດຄຳກອນ ບັ້ນທ້າວຮຸ່ງໃຫ້ໂອກາດແກ່ທ້າວຄອງ ທີ່ຖືກແຕ່ງຕັ້ງໃຫ້ຄອງເມືອງປະກັນ ຫລັງຈາກຕີເມືອງປະກັນໄດ້ແລ້ວ.

*ອັນໜຶ່ງ ຢ່າແຂງຂ້ຽວ ຕຳເຕີບເຕັງຂຸນ*<br>
*ໃຫ້ຄ່ອຍຫອມແພງເປືອງ ຢູ່ແຂງຂະນົງຂຸ້ນ*<br>
*ພູກໍ່ ແຄນໃຈດັ້ງ ທຳຄຸນລຸນພໍ່ ເຮອນີ້*<br>
*ເຮົາພ່ຳພ້ຽງ ຄະນິງແຈ້ງຈຶ່ງບານ*<br>
*ອັນໜຶ່ງ ຢ່າທໍ້ອ້າງ ເຫັນປ່ອງຄຳແດງ*<br>
*ຄ່ວາງເອີຍ*

*ເສຍຄົນຫານ ກໍເພື່ອເອົາສິນຈ້າງ*<br>
*ຝຸງນັ້ນ ຂອງແພງໄວ້ ໃນເຍຍເອົາອາດ*<br>
*ແຄນບໍ່ ໄດ້ຄຽດຄ້ອຍ ຊິນຊ້າງຊ່ອຍເຮົາ*<br>
*ຄ່ວາງເອີຍ*

*ຢ່າລອນຖີບໄພ່ໃຫ້ ເປັນທາດທາສາ*<br>
*ຢຽວວ່າເມືອງມົວເອົາ ປີ່ນແພນພິກຄ້າງ*

ຄວນທີ່ ກູບາໃຫ້ ເຫັນຄຸນຜາຍໂພດ
ດັ່ງນັ້ນ ເຄົ້າໃຫຍ່ກ້ວາງ ຈຳຈາກຣີໜີ
ມ້ຽນໂທດຮ້າຍ ເຮົາສວ່າຍເສຍຕົກ
ນີຄົນຂານ ຂອບຄຸນຍໍຍ້ອງ
ອັນໜຶ່ງ ໃຜທຸກໄຮ້ ເຮືອນຄອງມາເພິ່ງ
ຄວນເລືອກລ້ຽງ ປຸນປ້ອງຊ່ອຍແຮງ
ສັບສິ່ງພ້ຽງ ປຸນເກິ່ງກຸນສະໂຣ
ເຂົາຈັກ ສະແວງສິ່ງຄາມ ຊ່ອຍແຮງຮຸມຂ້າ
ຄົນໃດ ໂຍໂສລົ້ນ ມະທູທາຫວານປາກ
ຕ້ານຕໍ່ໜ້າ ດີຮ້າຍເມື່ອຫລັງ
ຄວນທີ່ ປະໄປ່ໄວ້ ເຍື້ອນຍາກສາມປີ
ຍັງເລົ້າ ເສຍໃຈຫລັງ ເມື່ອລຸນຈຶ່ງເອົາລ້ຽງ
ອັນໜຶ່ງ ຢ່າມົວດັ້ງ ນາງເມຍເໜົ້າໜຸ່ມ
ຄວາງເອີຍ

ຂີຄູ່ພ້ຽງ ກິນງ້ວານເວົ່າຕາຍ
ເມື່ອປາກຕ້ານ ກ່ອນກ່າວຄຳຮັກ
ສອງເລົ່າເປັນໄມຕຣີ ສືບສານເຝືອຝັ້ນ
ເຖິງເມື່ອກັມເວນຮ້າຍ ແຮງໂພຍພິດແຜກ
ຍັງຍິ່ງ ແສງດາບນັ້ນ ດັບຊີບມິ່ງມອນ
ຊັກແທບທ້າວ ຜູ້ຜ່ານການທາ

ພູກໍ  ເອົາໃຈສອນ  ຊູ່ຄືນຈຳແຈ້ງ
ເພາະເພື່ອຣາມມາຮ້າຍ  ເມຍມານບັດເຜດ
ໄຈຊຸ່ນຂ້ອງ  ຈິ່ງແຈ້ງຈອດໂຈນ
ກັບເຜດພ້ຽງ  ທວຍຍື່ນໄຊສີ
ພາໂລເລີຍ  ເກີບກຸມກຳດ້ຳ
ກອຍແທງທ້າວ  ຜູ້ມີມ້ຽນຄາບ
ອິນຢູ່ລ້ຳ  ເມືອງຟ້າສ່ອງຍາມ
ຜາຍເປົ່ງນ້ຳ  ອິບອາບສິງສີ
ຕົນຄານເນົາ  ນັ່ງເມືອງອໍຣະອ້ອນ
ອັນວ່າ  ນາງມານນັ້ນ  ຣາວິເມັດຊາດ
ໂຈນບໍ່ຝັນ  ເນົາງ້ອນງ່ອງດາຍ
ເລີຍເລົ່ານໍຣະບາດມ້ຽນ  ເມືອສູ່ອະເວຈີ
ແສນປາຍກັບ  ຢູ່ນານໃນໜໍ້
ພໍເມື່ອ  ປາປັ້ງຖວນ  ກັມມິມາຄອບ
ເລີຍເກີດເປັນແມ່ເນື້ອ  ແນວຮ້າຍຮ່າງຊະນີ
ເວນຕອບຕ້ອງ  ໃຈລ່າຍໂລພາ
ພົນປີແຂວນ  ຈ່ອງໄຣເຣ້ຣອງ
ອັນນີ້  ຍະຖາແທ້  ສອນສູ່ຢ່າປະໜາດ
ພົບໄພ່ພ້ອງ  ທັ້ງຄ້າຍຄ່ອງຄືງ ແດ່ເນີ ໆ...

# ຢູ່ປື້ມພົງສາວະດານລາວ
## ລຶດຈະນາໂດຍ ມະຫາສີລາ ວີຣະວົງ
## ຈັດພິມໂດຍກະຊວງສຶກສາທິການ ປີ 1957
## ( ພິມເທື່ອທີ 1 )

ຢູ່ໜ້າ 52 ມີຫົວຂໍ້ຂຽນວ່າ: " ເຈົ້າເມືອງພວນຂໍ່ອ່ອນນ້ອມ " ວ່າ ຝ່າຍພະຍາເຈັດເຈືອງ ຜູ້ເປັນເຈົ້າເມືອງພວນຊຽງຂວາງ ຄັນໄດ້ຊາບຂ່າວ ວ່າ ກອງທັບຂອງສົມເດັດພະຍາຟ້າງຸ່ມຕີເມືອງພະນໍ້າຮຸ່ງໄດ້ແລ້ວ ກໍເກີດມີ ຄວາມຢ້ານກົວພະເດຊານຸພາບເປັນອັນມາກ.

ຈຶ່ງແຕ່ງໃຫ້ໝື່ນຫລວງພານ ກັບ ໝື່ນຄໍາ [1] ເປັນທູດຖືພະຣາຊະ ສານລົງມາຂໍ່ອ່ອນນ້ອມ ໃຈຄວາມຢູ່ໃນພະຣາຊະສານຂຽນວ່າ: " ຜູ້ຂ້ານີ້ ຫາກເປັນຫລານເປັນເຫລັນ ເຊື້ອແນວຂຸນບໍຣົມຣາຊາທິຣາດເຈົ້າ ທັງຂຸນລໍ ມາແຕ່ບູຮານດຶກດໍາບັນ ເທື່ອນີ້ພະຍາຟ້າຈັກໄປພາບບ້ານພາບເມືອງໃດກໍດີ ຂ້າຈັກແຕ່ງຣີພົນໄປຊ່ອຍເຕີມຊູແຫ່ງຊູທີ່ແລ... "

ສົມເດັດພະເຈົ້າຟ້າງຸ່ມຊາບດັ່ງນັ້ນ ກໍມີພະໂສມະນັດ ຈຶ່ງມີພະຣາຊະ ອາຍາຕອບຄືນໄປວ່າ: " ພີ່ນ້ອງເຮົາຍັງຄຶດເຖິງເຮົາ ດັ່ງນັ້ນ ກໍຊອບດີແລ ບ້ານເມືອງຂອງຫລານເຮົາກັບນ້ອງເຮົາ ແຕ່ກ່ອນທີ່ໃດກໍດີ ໃຫ້ໄວ້ແກ່ນ້ອງ ເຮົາຖີ້ມເຄື່ອງເສິກເຄື່ອງວຽກ ເຄື່ອງເຫລັກອັນໃດກໍດີ ເຮົາຫາກຈັບມາເອົາ ດອມ ອັນໜຶ່ງບ້ານເມືອງທີ່ເຮົາພາບໄດ້ ແຕ່ເມືອງຊານເມືອງມ່ອນ ກໍໃຫ້ມາ

---

(1) ສອງຄົນນີ້ ເຂົ້າໃຈວ່າແມ່ນພະຍາເພົາກັບທາວທຽມຄໍາຍໍ ທີ່ພົງສາວະ ດານຂຽນເອົາໄວ້ວ່າ: ທໍາມິດສາຈານກັບເມຍພໍ່ ແລ້ວໜີມາເພິ່ງເຈົ້າຟ້າງຸ່ມ

ໄຫ້ວມານົບແກ່ນອງເຮົາ...

ຄັນທ້ງນິພະຣາຊະອາດຍາໄປດັ່ງນັ້ນແລ້ວ ກໍຕັດສັ່ງໃຫ້ເຈົ້າເມືອງພອນເກນກອງທັບເຂົ້າສົມທົບ ຍົກໄປຕີຫົວເມືອງເຂດແດນປະເທດແກວໄດ້ 3 ເມືອງ ໃນປີ ຄ.ສ 1351 ( ພ.ສ 1894 ).

ຝ່າຍເຈົ້າແຜ່ນດິນປະເທດແກວ ຄັນຊາບດັ່ງນັ້ນ ກໍມີຄວາມຢ້ານກົວອານຸພາບຂອງພະເຈົ້າຟ້າງຸ່ມ ຈຶ່ງແຕ່ງຣາຊະບັນນາການມາຖວາຍ ພ້ອມກັບສົ່ງທູດມາເຈລະຈາແບ່ງປັນເຂດແດນ ແລະ ພົນລະເມືອງດັ່ງນີ້ :

1. ພົນລະເມືອງທີ່ຢູ່ເຮືອນມີຮານກວ້ານມີເສົາ ( ຄືເຮືອນຍົກພື້ນ ) ໃຫ້ເປັນພົນລະເມືອງລາວ.

2. ເຂດແດນປະເທດລາວນັ້ນ ໃຫ້ນັບແຕ່ຕົ້ນສານສາມງ່າໄປເຖິງນ້ຳນ້ານາສາມແຄວ ຫລື ຫີນສາມເສົ້າ ໄປເຖິງນ້ຳເຕົ້າສາມແຄວ.

3. ຫລັກການແບ່ງເຂດແດນນັ້ນ ໃຫ້ຖືເອົາຕາມສັນພູນ້ຳແບ່ງ ຄືຝົນຕົກນ້ຳໄຫລລົງມາສູ່ປະເທດລາວແຕ່ບ່ອນໃດ ໃຫ້ຖືເອົາບ່ອນນັ້ນເປັນເຂດແດນ ຖ້າໄຫລລົງໄປທາງເມືອງແກວ ກໍໃຫ້ເປັນດິນຂອງແກວ.

## ຢູ່ປຶ້ມເລົ່າເລື່ອງ ລາວ-ໄທ
## ລິດຈະນາໂດຍອູຄຳ ພົມວົງສາ
## ຈັດພິມໂດຍ ເຍົາວະພຸດທິກະສະມາຄົມປີ 1967

ຢູ່ໜ້າ 201 ມີຫົວຂໍ້ຂຽນວ່າ: ອ້າຍລາວ ( ໄທລາວ) ຕັ້ງອານາຈັກ ລ້ານນາ ສະໄໝນະຄອນຊຽງລາວ ນະຄອນຊຽງແສນ ແລະ ນະຄອນຊຽງໃໝ່.

ຊົນຊາດອ້າຍລາວທີ່ອົບພະຍົບລົງມາທາງໃຕ້ນັ້ນ ພວກໜຶ່ງຕັ້ງອາ ນາຈັກໜອງແສຂື້ນ ແລະ ພວກໜຶ່ງ ຄືພວກລາວຈົກ ເຊິ່ງບໍ່ຍອມປະຖິ້ມ ຄຳທີ່ວ່າ " ລາວ " ໄດ້ອົບພະຍົບລົງມາຢູ່ແດນດິນຕອນເໜືອປະເທດລາວ ແລະ ປະເທດໄທປັດຈຸບັນ ກ່ອນພວກອື່ນໆ... ແລ້ວພາກັນຕັ້ງອານາຈັກອິດ ສະຫລະຂື້ນ ເຊິ່ງມີເມືອງທີ່ຣັນພະນະຄອນເງີນຍັງ ຫລື ເງີນຍາງ ຫລື ຊຽງ ລາວ ເປັນອານາຈັກທຳອິດທຳອໍ່ ໂດຍສ້າງນະຄອນຊຽງແສນເປັນນະຄອນ ຫລວງ ແລະ ນະຄອນຊຽງໃໝ່ເປັນນະຄອນຫລວງ ( ມີສອງນະຄອນໃຫຍ່ຄູ່ ກັນ ).

ອານາຈັກລານນາໄດ້ມີກະສັດປົກຄອງສືບຕໍ່ກັນມາເປັນລຳດັບ ແລະ ບໍຣິມກະສັດຕົ້ນຕະກຸນທີ່ມາສ້າງອານາຈັກລານນາອົງທຳອິດ ທີ່ມາສ້າງນະ ຄອນຊຽງລາວ ຫລື ນະຄອນທີ່ຣັນເງີນຍາງ ( ເມືອງຊຽງລາວ ) ນັ້ນແມ່ນ ລາວຈົກເທວະຣາດ ແລະ ເປັນຕົ້ນສະກຸນລາວລານນາ ເປັນຣາຊະວົງລາວ ຈົກ ສືບຕໍ່ກັນມາດັ່ງນີ້ :

## ສະໄໝເມືອງທີ່ຣັນເງີນຍັງ ( ເງີນຍາງ ) ຫລື ນະຄອນຊຽງລາວເປັນຣາຊະທານີ ເມື່ອປີ ພ.ສ 1181 ຈ.ສ 1

1. ລາວຈົກ ເທວະຣາດ ( ລາວຈົກຫລືລາວຈັກ ) ພ.ສ 1181 ເຖິງ 1301
2. ລາວເກົ້າແກ້ວມາເມືອງ ແຕ່ປີ ພ.ສ 1301 - 1346
3. ລາວເສົາ " 1346 - 1385
4. ລາວຕັງ " 1385 - 1411
5. ລາວກົມ " 1411 - 1429
6. ລາວແຫລວ " 1429 - 1448

| | | |
|---|---|---|
| 7. ລາວກັບ | ແຕ່ປີ ພ.ສ | 1448 - 1460 |
| 8. ລາວກີມ | " | 1460 - 1477 |

## ສະໄໝຊຽງແສນ ຫລື ເມືອງຫີຣັນນະຄອນເງີນຍັງຊຽງແສນ

| | | |
|---|---|---|
| 9. ລາວຄຽງຫລືພະຍາລາວຄຽງ ໄດ້ຍ້າຍເມືອງຫລວງມາຕັ້ງທີ ຊຽງແສນ | " | 1477 - 1503 |
| 10. ລາວຄືວ | " | 1503 - 1523 |
| 11. ລາວເທີງ ( ຂຸນເທືອງ ) | " | 1523 - 1538 |
| 12. ລາວທືງ ( ຂຸນທືງ ) | " | 1538 - 1558 |
| 13. ລາວຕົນ | " | 1558 - 1575 |
| 14. ລາວສົມ | " | 1575 - 1596 |
| 15. ລາວກອກ | " | 1596 - 1623 |
| 16. ລາວກິວ | " | 1623 - 1638 |
| 17. ລາວຈິກ | " | 1638 - 1652 |
| 18. ລາວຜາເຮືອງ(ຈອມຜາເຮືອງ) | " | 1652 - 1672 |
| 19. ລາວເຈືອງ ( ຂຸນເຈືອງ ) | " | 1672 - 1696 |
| 20. ລາວເງີນເຮືອງ | " | 1696 - 1722 |
| 21. ລາວຊີນ ( ຂຸນຊີນ ) | " | 1722 - 1733 |
| 22. ລາວມີງ ( ຂຸນມີງ) | " | 1733 - 1754 |
| 23. ລາວເມືອງ (ຂຸນເມືອງ) | " | 1754 - 1769 |
| 24. ລາວເມັງ (ຂຸນເມັງ) | " | 1769 - 1801 |

ສິ້ນສຸດຣາຊະວົງລາວຈົກພຽງແຕ່ຣາຊະການຂອງຂຸນເມັງ ຫລື ຂຸນເມັງເທົ່ານີ້.

# ສະໄໝນະຄອນຊຽງໃໝ່ເປັນຣາຊະທານີ
# ຫລື ກຸງຣັດຕະນະສີວິໄຊຊຽງໃໝ່

| | | |
|---|---|---|
| 25. ພະຍາເມັງຣາຍ | ຕົ້ນຣາຊະວົງເມັງຣາຍ ຜູ້ສ້າງນະຄອນຊຽງໃໝ່ | |
| | ແຕ່ປີ ພ.ສ | 1801 - 1860 |
| 26. ພະຍາໄຊສົງຄາມ | " | 1860 - 1861 |
| 27. ພະຍາແສນພູ ( ຄັ້ງທີ 1) | " | 1861 - 1862 |
| 28. ເຈົ້າຂຸນເຄືອ | " | 1862 - 1863 |
| 29. ພໍ່ທ້າວນໍ້າທ່ວມ | " | 1863 - 1867 |
| 30. ພະຍາແສນພູ ( ຄັ້ງທີ 2) | " | 1867 - 1871 |
| 31. ພະຍາຄໍາຟູ | " | 1871 - 1877 |
| 32, ພໍ່ທ້າວຜາຍູ | " | 1877 - 1910 |
| 33. ພໍ່ທ້າວກືນາ | " | 1910 - 1931 |
| 34. ພະເຈົ້າແສນເມືອງມາ | " | 1931 - 1954 |
| 35. ພະເຈົ້າສາມຝັ່ງແກນ | " | 1954 - 1985 |
| 36. ພະເຈົ້າລົກຕິໂລກຣາດ | " | 1985 - 2030 |
| 37. ພະຍາຣອດຊຽງຣາຍ | " | 2030 - 2038 |
| 38. ພະຍາເມືອງແກ້ວ | " | 2038 - 2068 |
| 39. ພະຍາເມືອງເກດເກົ້າ(1) | " | 2068 - 2081 |
| 40. ທ້າວ ຊາຍຄໍາ | " | 2081 - 2086 |
| 41. ພະຍາເມືອງເກດເກົ້າ (2) | " | 2086 - 2089 |
| 42. ພະເຈົ້າເຊດວົງສາ (ພະເຈົ້າ ໄຊເຊດຖາທິຣາດ ແຫ່ງກຸງລ້ານຊ້າງ ) | " | 2089 - 2094 |

24 / VII
ຮ້ານຈໍາໜ່າຍ

43. ພະເມກຸດ (ຍາດຊິງຣາຊະສົມບັດຈາກພະເຈົ້າໄຊເຊດຖາທິຣາດ ແລະ ເປັນເມືອງຂຶ້ນພະມ້າ) 2094 - 2107

44. ນາງພະຍາຣາດເທວີ (ເປັນເມືອງຂຶ້ນພະມ້າ) 2107 - 2111

ສິ້ນສຸດຣາຊະວົງເມັງຣາຍ ພຽງນາງພະຍາຣາດເທວີເທົ່ານັ້ນ ອານາຈັກລານນາຊຽງໃໝ່ກໍໄດ້ຕົກເປັນເມືອງຂຶ້ນຂອງໄທ.

ຂຸນເຈືອງ ຫລື ພວກລາວເຈືອງນັ້ນ ແມ່ນລາວຈົກເທວະຣາດ ກະສັດຕົ້ນຕະກຸນຂອງອານາຈັກລ້ານນາ ແມ່ນຊົນຊາດອ້າຍລາວພວກໜຶ່ງທີ່ໄດ້ຖອຍລົງມາທາງໃຕ້ ແຕ່ຍັງບໍ່ຍອມຖິ້ມຄຳວ່າ " ລາວ " ດັ່ງປາກົດໃນຕຳນານວ່າ ລາວຈົກເທວະບຸດ ກ່າຍຂັ້ນໄດເງິນລົງມາຈາກຍອດດອຍຕຸງ ລົງມາສ້າງເມືອງທີ່ຕຳບົນຍາງສ່ຽວ ລາວພວກນີ້ຄືພວກອ້າຍລາວທີ່ຖອຍມາແຕ່ເທິງ (ມາຈາກດິນແດນຈີນ)ນັ້ນເອງ ແລະ ໄດ້ມາປະສົມກັບພວກຂອມ ເຊິ່ງເປັນພວກເຈົ້າຂອງຖິ່ນທີ່ມີອຳນາດູໃນຂະນະນັ້ນ ແລະ ໄດ້ສືບໜໍ່ແນວອອກມາເປັນຣາຊະວົງລາວຈົກ ປົກຄອງອານາຈັກລ້ານນາສືບຕໍ່ກັນມາ ເຊັ່ນກັນກັບລາວເຮົາໃນປັດຈຸບັນນີ້ ກໍປະສົມເຂົ້າກັນກັບລາວເທິງ ລາວສູງ ແຕ່ກໍຍັງຄົງຄວາມເປັນລາວຢູ່.

ສະນັ້ນ ພວກລາວເຈືອງ (ຂຸນເຈືອງ) ພວກຂຸນທຶງ ຂຸນເທືອງ ໃນປະຫວັດສາດລ້ານນາ ກໍຄົງຈະເປັນລາວພວກໜຶ່ງ ຊຶ່ງມີເລືອດເປັນລາວຢູ່ນັ້ນເອງ ແມ່ນວ່າ ຈະມີຄວາມເປັນລາວແທ້ບໍ່ຮອດ 100 % ກໍຕາມ ແຕ່ກໍຄົງຈະມີເລືອດຂອງສະກຸນລາວຈົກ ບໍ່ແມ່ນທາງພໍ່ກໍທາງແມ່ ທາງໃດທາງໜຶ່ງຢູ່ນັ້ນເອງ.

# ໄຫຫີນ

## ຫລື

## ໄຫເຫລົ້າເຈືອງ

ໄຫເຫລົ້າເຈືອງ ແມ່ນວັດຖຸທາງໂບຮານ ທີ່ປະຫວັດສາດໄດ້ປະເອີາໄວ້ໃຫ້ເປັນປິດສະໜາມາຈົນຮອດປັດຈຸບັນ ວ່າ ໄຫເຫລົ້າເຈືອງຢູ່ທົ່ງໄຫຫີນແຂວງຊຽງຂວາງນັ້ນ ແມ່ນເກີດຂຶ້ນໃນປີ ພ.ສ ຫລື ປີ ຄ.ສ ໃດກັນແທ້ ? ໃຜເປັນຜູ້ສ້າງໄຫເຫລົ້າເຈືອງນີ້ຂຶ້ນມາ ແລະ ສ້າງຂຶ້ນມາເພື່ອເຮັດຫຍັງ ?

ບາງຄຳເຫັນກ່ວາ : ໄຫຫີນຂຸມນີ້ແມ່ນໄຫເຫລົ້າເຈືອງສະໄໝຂຸນເຈືອງຜາບແພ້ຂ້າເສິກສັດຕູ ແລ້ວພາກັນສະຫລອງໄຊເຖິງ 7 ເດືອນຢູ່ທົ່ງກວ້າງ ແລະ ເພື່ອໃຫ້ສົມກັບວ່າສະຫລອງໄຊຄັ້ງຍິ່ງໃຫຍ່ ຈຶ່ງເຮັດໄຫເຫລົ້າຂະໜາດໃຫຍ່ໃສ່ເຫລົ້າເພື່ອດື່ມກິນໃຫ້ກຸມ 7 ເດືອນ ...

ບາງຄຳເຫັນກ່ວາ : ໄຫຫີນຂຸມນີ້ ຄົນສະໄໝກ່ອນໄດ້ສ້າງຂຶ້ນເພື່ອບັນຈຸສົບຄົນຕາຍ ...

ນີ້ຄືປິດສະໜາເພື່ອທ້າໃຫ້ພິສູດດ້ວຍຫລັກຖານ ແລະ ເຫດຜົນທີ່ຖືກຕ້ອງ ເພື່ອຈະໄດ້ຄາຍຄຳເວົ້າທີ່ກ່າວຂານໄດ້ຖືກຕ້ອງທີ່ແທ້ຈິງ.

ພວກຂ້າພະເຈົ້າຜູ້ຮິບໂຮມ ແລະ ຮຽບຮຽງເອກະສານ ແລະ ຕຳນານໂດຍສະເພາະເຈາະຈົງແຕ່ເລື່ອງຂຸນເຈືອງ ແລະ ໄຫຫີນ ທັງໄດ້ນຳເອົາຂໍ້ຄວາມບາງຕອນຈາກທ່ານຜູ້ລິດຈະນາອະວຸໂສທີ່ລ່ວງລັບໄປແລ້ວ ເຫຼືອໄວ້ພຽງຜົນງານ ແລະ ຄຸນງາມຄວາມດີ ອັນເປັນມໍລະດົກຕົກທອດທາງວັດທະນະທຳປະໄວ້ໃຫ້ຄົນລຸ້ນຫລັງໄດ້ສຶກສາຄົ້ນຄວ້າ ມາພິມລົງໄວ້ໃນປຶ້ມຫົວນີ້ ເພື່ອຈຸດ

ປະສົງຢາກໃຫ້ທ່ານຜູ້ອ່ານທີ່ສົນໃຈໃນການສຶກສາຄົ້ນຄວ້າໄດ້ອ່ານ ແລະ ພິຈາລະນາໄປພ້ອມໆກັນ.

ຕໍ່ໄປນີ້ແມ່ນຄຳຄິດຄຳເຫັນກ່ຽວກັບໄຫຫີນ ຫລື ໄຫເຫລົ້າເຈືອງ ໂດຍອີງຕາມຫລັກຖານຂໍ້ມູນເທົ່າທີ່ເກັບກຳຊອກຫາມາໄດ້ ເພື່ອຢັ້ງຢືນ ແລະ ປຽບທຽບ ວ່າ ແມ່ນຄືແນວນັ້ນແທ້ ຫລືວ່າບໍ່ ? ບົນພື້ນຖານຂອງເຫດ ແລະ ຜົນ.

# ອ້າງອີງເຖິງຄຳເວົ້າຂອງນັກວິທະຍາສາດ

ມີນັກວິທະຍາສາດຂອງໂລກຕາເວັນຕົກ ແລະ ໂລກຕາເວັນອອກຫລາຍປະເທດໄດ້ເດີນທາງມາສຶກສາຄົ້ນຄວ້າເບິ່ງຄວາມເປັນມາທີ່ກຳເນີດຂຶ້ນຂອງໄຫຫີນ ແລະ ຜ່ານການສຶກສາຄົ້ນຄວ້າ ແລະ ວິເຄາະວັດແທກດ້ວຍເຄື່ອງມືທີ່ທັນສະໄໝແລ້ວ.

ນັກວິທະຍາສາດເຫລົ່ານັ້ນໃຫ້ຄຳເຫັນວ່າ : ໄຫຫີນມີອາຍຸມາໄດ້ 2.500ປີ ເຖິງ 3.000ປີແລ້ວ.

ແຕ່ຄວາມເຂົ້າໃຈຂອງຄົນລາວທ້ອງຖິ່ນ ແລະ ແຕ່ໃດໆມາ ແມ່ນເຂົ້າໃຈວ່າ : ໄຫຫີນໄດ້ສ້າງຂຶ້ນສະໄໝຂຸນເຈືອງ.

ບັດນີ້ ພວກເຮົາລອງຕັ້ງຂໍ້ພິສູດຂຶ້ນ 2 ຂໍ້ ຄື :

1. ຕາມການສຶກສາຄົ້ນຄວ້າຂອງນັກວິທະຍາສາດ ທີ່ຖືຫລັກຄຳນວນໄດ້ຜົນດີນັ້ນວ່າ : ໄຫຫີນມີອາຍຸ 2.500 ປີຫາ 3.000 ປີ ແລະ 3.000 ປີກ່ອນນີ້ ເຜົ່າລາວເຮົາຫາກໍ່ຈະປາກົດຕົວຢູ່ທາງພາກເໜືອຂອງພູເຂົາອັນໄຕ ຫລື ພູເຂົາແອນໄຕ ຍັງບໍ່ທັນມີຄົນລາວເຜົ່າໃດມາຢູ່ດິນແດນຕອນນີ້ເທື່ອ.

2. ຕາມຕຳນານ ແລະ ຕາມພົງສາວະດານລາວທີ່ຄົນລາວຮັບຮູ້

ແລະ ກ່າວຂານຕ່ໆກັນມາຫລາຍເຊັ່ນຄືນວ່າ : ໄທຫີນແມ່ນສາງຂື້ນສະໄໝຂຸນເຈືອງໄດ້ຮັບໄຊຊະນະໃຫຍ່ຫລວງ ແລ້ວພາກັນສາງໄທຫີນໃສ່ເຫລົ້າກີນສະຫລອງຕະຫລອດ 7 ເດືອນຈຶ່ງເລີກລາ ແລະ ສະໄໝຂຸນເຈືອງ ກໍແມ່ນປີ ຄ.ສ 1351 ຄືກ່ອນນີ້ 644 ປີ ໂດຍປະມານ.

ຈາກຂໍ້ພິສູດຂອງນັກວິທະຍາສາດ ແລະ ຈາກຕຳນານພົງສາວະດານລາວທຸກເຫຼັ້ມທຸກສະບັບທີ່ຂຽນເອົາໄວ້ເກືອບຈະຄືກັນກ່ຽວກັບເລື່ອງຂອງໄຫຫີນ ເຫັນວ່າຜິດໂຕນກັນຕັ້ງສອງພັນກວ່າປີ.

ນີ້ຄືຂໍ້ພິສູດ ທີ່ຄົນລຸ້ນຕໍ່ໆຈະຕ້ອງສຶກສາຄົ້ນຄວ້າຫາຄວາມເປັນຈິງກ່ຽວກັບໄຫຫີນແຂວງຊຽງຂວາງ.

ຢູ່ປື້ມປະຫວັດສາດເມືອງພວນ ລິດຈະນາໂດຍທ່ານພູມີ ວົງວິຈິດ ຄົນລາວພວນທີ່ເປັນນັກສຶກສາປັນຍາຊົນ ໄດ້ຂຽນເອົາໄວ້ຢູ່ໜ້າ 96 97 98 ແລະ ໜ້າ 99 ໜ້າສຸດທ້າຍຂອງປື້ມວ່າ :

# ເລື່ອງໄຫເຫລົ້າເຈືອງ
## (ບົດຄົ້ນຄວ້າ ເພື່ອອະທິບາຍ ຄວາມເປັນມາຂອງໄຫເຫລົ້າເຈືອງ )

**ກ່ອນ**ຄັ້ງພຸດທະການ ຢູ່ໃນອາຊີອາຄະເນນີ້ ມີຢູ່ 4 ເຜົ່າດ້ວຍກັນ ເຜົ່າທີ່ລວມກັນເປັນເຜົ່າໃຫຍ່ມີເຜົ່າມອນ ຂະແມ ເຜົ່າຈາມ ແລະ ລາວເທີງ.

ເຜົ່າມອນໄດ້ກາຍເປັນພະມ້າ ເຜົ່າຂະແມກໍກາຍເປັນກຳປູເຈຍ ສ່ວນລາວເທີງແບ່ງອອກເປັນຫລາຍກຸ່ມ ເຊັ່ນ ລະເວນ ລະແວ ຍາເຫີນ ຂະມຸ ແລະອື່ນໆ ...

ສ່ວນພວກມອນ ຂະແມ ຈາມກັບລາວເທີງເອີ້ນຊື່ວ່າ ພວກຂອມ ໄດ້

ຄອບຄອງດິນແດນມາແຕ່ທາງທິດໃຕ້ ຈີນມາຮອດເຂດທາດຊາຍຝອງອຽງ ຈີນ ແລະ ເມືອງຊວາ ຄອບຄອງໄປຮອດໂຄລາດ ສຸໂຂໄທ.

ຢູ່ໃນພວກຂອມກໍມີຢູ່ຫລາຍເຜົ່າ ເຊັ່ນ : ຂະມຸ ລະເວນ ລະແວ ແງະ ຍາເຫີນ ກະຕູ້ ຈາມ ຂະແມ ... ພວກເຜົ່າອື່ນໄດ້ຕັ້ງລຳເນົາຢູ່ທາງພາກໃຕ້ ແຫລມອິນດູຈີນ ແລະ ອາຊີອາຄະເນ.

ສ່ວນພວກຂະມຸ ກາຍຂຶ້ນໄປຮອດຊຽງຂວາງ ເມືອງຊວາ ແລະ ເມືອງເງິນຍາງ ( ຊຽງແສນ ).

ຢູ່ຊຽງຂວາງ ມີບ່ອນໜຶ່ງເອີ້ນວ່າ ພູຍອນ ແຕ່ປາງກ່ອນນັ້ນ ມີຄອບ ຄົວໜຶ່ງ ເຊິ່ງເອີ້ນວ່າ ທ້າວບາມົດ ແລະ ນາງອີ່ແກ້ວ ມີລູກຜູ້ໜຶ່ງຊື່ວ່າທ້າວ ບາກວາ ຜູ້ໜຶ່ງຊື່ ທ້າວບາຍີ່ ແລ້ວສືບຕໍ່ເຮັດໄຮ່ຢູ່ຫັ້ນ.

ບາຍີ່ໃຫຍ່ຂຶ້ນມາ ມີຄວາມສະຫລາດສະຫລຽວ ມີສິລະປະປາກເວົ້າ ມີ ຜູ້ເຄົາຣົບນັບຖື ຈຶ່ງໄປຂຸດເອົາເຫລັກອອກມາສ້າງອາວຸດ ສ້າງກອງທະຫານ ຕີຂະຫຍາຍພວກທີ່ຢູ່ອ້ອມແອ້ມນັ້ນແລ້ວຕັ້ງຕົວເອງເປັນທ້າວຮຸ່ງ ຫລື ທ້າວ ເຈືອງ.

ຕີເຂົ້າໄປທາງດິນທວຽດນາມ ຕີພວກມ້ອຍ ຕີຊະນະແລ້ວກໍສືບຕໍ່ບຸກ ຕີຂຶ້ນໄປເລື້ອຍໆ...

ເວລານັ້ນ ເມືອງລາວບໍ່ມີພົນລະເມືອງຫລາຍ ມີຊົນເຜົ່າຕ່າງໆ ເຊັ່ນ ພວກລາວສູງ ແລະ ພວກລາວເທິງ ເມື່ອບາຍີ່ຕີຊະນະບ່ອນໃດ ກໍປະລູກນ້ອງ ປົກຄອງຢູ່ຫັ້ນ ເດີນທາງຂຶ້ນເມືອທາງເໜືອເທົ່າໃດກໍແຮ່ງໄດ້ບຸກຕີ ເພາະມີ ຊົນເຜົ່າລາວພວນລົງມາແຕ່ນະຄອນນ່ານເຈົ້າ ອັນເປັນດິນແຂວງຢູນານ ດຽວນີ້ ຕີໄປຮອດຫ້ວຍຊາຍ ຕົ້ນເຜິ້ງ ແລ້ວຂ້າມໄປເມືອງຊຽງແສນ ບ່ອນ ຫັ້ນເອີ້ນວ່າ " ເມືອງເງິນຍາງ " ຕີໄປຊຽງລາຍ ຕີລົງມາພະເຢົາ.

ເມື່ອມາຮອດພະເຢົາ ມາເຫັນນາງງ້ອມ ລູກສາວເຈົ້າເມືອງພະເຢົາ

ເປັນຄົນຈຳນວນຫລາຍ ກໍຍົກທັບມາອ້ອມຕົວເມືອງ ເຈົ້າເມືອງພະເຢົາກໍຍົກລູກສາວໃຫ້ ໄດ້ນາງງອນແລ້ວກໍກັບຄືນມາບ້ານ ມາຮອດແລ້ວຕັ້ງຕົວເປັນທ້າວເຈືອງ ປະຊາຊົນເຄົາລົບນັບຖື ແລະ ສືບຕໍ່ເຮັດໄຮ່ກິນຢູ່ທີ່ນັ້ນ ທ້າວເຈືອງປົກຄອງເຂດນັ້ນຢ່າງສະດວກສະບາຍ.

ຕາມຮີດຄອງປະເພນີຂະມຸໃນຄາວນັ້ນ ຄົນແມ່ນລາດສະດອນຂະມຸຕາຍ ແມ່ນເອົາຊາກສົບຝັງດິນ ຄົນແມ່ນຄອບຄົວເຈົ້າເຈືອງຕາຍ ແມ່ນໃຫ້ເອົາໄປຈູດ ເພື່ອໃຫ້ລອັນຂຶ້ນເມືອເທິງຟ້າ.

ຕາມເຖົ້າແກ່ເລົ່າເລື່ອງນີ້ໃຫ້ຟັງ ສະໄຫມຝຣັ່ງປົກຄອງ ຝຣັ່ງສົນໃຈຫລາຍ ຈຶ່ງແຕ່ງໃຫ້ດ້ອກເຕີສອງເອື້ອຍນ້ອງມາຊຽງຂວາງ ຊື່ວ່ານາງສາວໂກລານີ ດ້ອກເຕີຂຸດຄົ້ນປູສະນີຍະສະຖານ ອາຍຸກໍແກ່ແລ້ວ ຜູ້ເອື້ອຍອາຍຸ 70 ປີ ຜູ້ນ້ອງອາຍຸ 65 ປີ.

ຜູ້ເອື້ອຍກຳກັບການຂຸດຄົ້ນ ຜູ້ນ້ອງກຳກັບການສືບສວນຮີດຄອງປະເພນີ ເອີ້ນເອົາເຖົ້າແກ່ມາສືບຖາມ ສືບຫາວ່າ : ພວກເຈືອງຢູ່ແນວໃດ ? ເປັນແນວໃດ ? ເປັນຫຍັງພວກເຈືອງຈຶ່ງເສຍບ້ານເສຍເມືອງ ?

ຜູ້ເອື້ອຍຂຸດຄົ້ນໄດ້ 16 ໄຫ ມີທັງໄຫໃຫຍ່ ໄຫປານກາງ ແລະ ໄຫນ້ອຍ ຢູ່ກ້ອງໄຫນັ້ນ ໄດ້ພົບເຫັນຫມໍ້ດິນ ບັນຈຸຂີ້ເຖົ່າ ແລະ ກະດູກຄົນຕາຍ ບາງອັນມີກອກຢາດິນ ກອກຢາທອງ ບອກປູນ ຊອງພູ ບາງຫມໍ້ກໍມີໄມ້ປັກເກົ້າທີ່ເຮັດດ້ວຍທອງ.

ເມື່ອຂຸດແລ້ວກໍຖົມຄືນ ເອົາໄຫຕັ້ງໄວ້ບ່ອນເກົ່າ ນາງຈຶ່ງໄດ້ຂໍ້ສະຫລຸບວ່າ "ແມ່ນປ່າຊ້າ" ບາງອັນມີຮູບຫມູ ຮູບນົກ ແລະ ກະຕາຍ ບາງອັນມີຮູບເສືອ ຮູບຊ້າງ ແລະ ຫມີ.

ອັນມີຮູບກອກຢາ ນາງວ່າແມ່ນຜູ້ຊາຍ ອັນມີຮູບຊອງພູໄມ້ປັກເກົ້າຜົມ ນາງວ່າແມ່ນຜູ້ຍິງ ອັນມີຮູບສັດບໍ່ຮ້າຍ ນາງວ່າແມ່ນແມ່ຍິງນ້ອຍ ອັນມີ

ສັດຮ້າຍ ນາງວ່າແມ່ນຜູ້ຊາຍ ເຊິ່ງສະຫລຸບວ່າແມ່ນຄົນໃນຄອບຄົວເຈົ້າເຈືອງ.

ຜູ້ນ້ອງສາວເອີ້ນຜູ້ເຖົ້າມາຖາມວ່າ : ເປັນຫຍັງຈຶ່ງມີປ່າຊ້າຢູ່ນີ້ ? ເປັນຫຍັງຈຶ່ງເອີ້ນໄຫເຫລົ້າເຈືອງ ?

ປະຊາຊົນກໍຢາກຕອບຄືກັນວ່າ ເຈືອງແມ່ນພວກຂະມຸ ເກີດຈາກອີ່ແກ້ວ ແລະ ບາມົດຢູ່ພູຍອນ ໃຫຍ່ຂື້ນມາແລ້ວ ຕັ້ງບ້ານຢູ່ເມືອງກັດ ( ໂພນສະຫວັນດຽວນີ້ ) ເຊິ່ງເປັນເຂດປ່າໄມ້ ທົ່ງພຽງ ແລະ ມີນ້ຳແດ່ ມີພວກຂະມຸມາເຮັດຊ່ອຍ ມີອຳນາດຫລາຍ ເອົາຄົນມາຕັ້ງກອງທະຫານຂຶ້ນ ຂຸດເຫລັກມາເຜົາຕີ້ມ ຕີພ້າມີດ ຫອກ ງ້າວ ເມື່ອຕີເສິກໄປ ຜູ້ໃດຕາຍ ກໍໄປເລືອກເອົາຄົວໄຫເຫລົ້າເຈືອງເປັນປ່າຊ້າ.

ອັນຕ່າງກັບລາດສະດອນ ແມ່ນ ເມື່ອພີ່ນ້ອງເຈົ້າເຈືອງຕາຍແລ້ວເອົາໄປຈູດ ໃຫ້ວິນຍານໄດ້ຂື້ນຟ້າ.

ເມື່ອໃດຕາຍແລ້ວ ກໍໄປນຳເອົາມາຄົບງັນຢູ່ທົ່ງໄຫຫີນຫັ້ນ ປະຊາຊົນກໍຮູ້ເຮັດເຫລົ້າສາໂທກິນກັນຢູ່ຫັ້ນ ພາກັນຕັດເອົາຟືນມາກອງກັນຂື້ນເພື່ອເປັນບ່ອນຈູດສົບ ເອົາສາດຮ່ຳຄົນຕາຍແລ້ວເອົາມາວາງໃສ່ກອງຟອນແລ້ວຈູດຢູ່ໃນຖ້ຳ ເວລາຈູດນັ້ນ ຄົນອອກມາຢູ່ນອກ ພາກັນນົບຂໍໃຫ້ວິນຍານໄດ້ຂື້ນຟ້າ.

ວິທີເຮັດໄຫຫີນນັ້ນ ແມ່ນເຈົ້າເຈືອງໄດ້ແຕ່ງຄົນໄປເຮັດຢູ່ແຄມເສັ້ນທາງໄປເມືອງພານ ໄກຈາກຕົວເມືອງຊຽງຂວາງປະມານ 10 ກິໂລແມັດ ເພາະເຂດນັ້ນມີຫີນບໍ່ແຂງປານໃດ ສິ່ວໄດ້ ສິ່ວເປັນກ້ອນຫີນໃຫຍ່ອອກມາແລ້ວຈຶ່ງເຈາະ ແລະ ແປງໃຫ້ກົມຄືໄຫ ແລ້ວເອົານ້ຳມາຖອກໃສ່ລອງເບິ່ງ 15 ມື້ ໄຫໃດບໍ່ຮົ່ວຈຶ່ງເອົາ.

ເວລາເອົາມາ ແມ່ນເອົາໄຫມາວາງໃສ່ໄມ້ສອງອັນ ເອົາເຊືອກເຊີອກມັດຫາມກັນມາ 8 ຄົນ ຫາມ 16 ຄົນ ຕາມຂະໜາດໄຫໃຫຍ່ນ້ອຍ.

ເມື່ອຂຸດກົບ່ອນໄດ້ແລ້ວຈຶ່ງຕັ້ງໄຫໃສ່ ເອົາເຂົ້າໜຽວມາລ້າງນໍ້າ ເອົາແປ້ງມາປົນໃສ່ ເອົາຝາອັດໄວ້ ຮອດ 15 ມື້ແລ້ວເປັນເຫຼົ້າ.

ແລ້ວພີ່ນ້ອງຄອບຄົວພາກັນໄປຕັ້ງບຸນ ຕີຄ້ອງຕີກອງ ນົບໄຫວ້ຕາມປະເພນີສົ່ງລາ ໝາຍຄວາມວ່າ ພິທີສົ່ງສະການກໍສິ້ນສຸດລົງ.

ຈາກນັ້ນ ແມ່ນທາວເຈືອງຈະຢູ່ຫຼືບໍ່ຢູ່ກໍຕາມ ເມື່ອມີຜູ້ຕາຍກໍເຮັດແບບນີ້.

ດັ່ງນັ້ນ ເພິ່ນຈຶ່ງອີ້ນໄຫເຫຼົ້າເຈືອງ ຕັ້ງຢູ່ບ່ອນດີມີພູຢູ່ເບື້ອງຕາເວັນອອກ ແລະ ເບື້ອງໃຕ້ ມີຄັງຫຍ້າຢູ່ເບື້ອງທິດເໜືອ ມີໜອງນໍ້າບໍ່ຮູ້ແຫ້ງຢູ່ເບື້ອງທິດຕາເວັນຕົກ ຄົນທັງຫຼາຍ ຈຶ່ງເອີ້ນວ່າ : ຄັງໄຫເຫຼົ້າເຈືອງມາເທົ້າຮອດດຽວນີ້ ແລະ ໝົດເທົ່ານີ້.

## ຢູ່ໃນປື້ມ "ປະຫວັດສາດ ສິລະປະ ແລະ ສະຖາປັດຕະຍະກຳ ສິນລາວ ລິດຈະນາໂດຍ ບຸນເຮັງ ບົວສີແສງປະເສີດ ພິມປີ 1991

**ຢູ່** ໜ້າ 40 41 ແລະ 42 ເວົ້າເຖິງໄຫຫີນເມືອງພວນຊຽງຂວາງ ແມ່ນໄຫຫີນທີ່ຜະລິດມາຈາກຫີນກ້ອນໃຫຍ່ ມີຈຳນວນຫຼາຍ ຢັ້ງຢາຍຢູ່ທົ່ວໄປ ເຂດພູພຽງຊຽງຂວາງ ນັກປາດຈຶ່ງໄດ້ຂະໜານນາມວ່າທົ່ງໄຫຫີນ

ໜ່ວຍທີ່ໃຫຍ່ສຸດ ສູງ $3,^{\text{ມ}}25$ ແລະ ປາກກວ້າງ $3,^{\text{ມ}}00$ ນັກຄົ້ນຄວ້າບາງທ່ານສັນນິດຖານວ່າ ຜະລິດຂຶ້ນສຳລັບໃສ່ຄົນຕາຍ ຫຼື ສິ່ງທີ່ພົວພັນກັບຄົນຕາຍ ເພື່ອເກັບໄວ້ທີ່ສຸສານຕາມຄວາມເຊື່ອຖືຂອງຄົນບູຮານ.

ສັນນິດຖານເຊັ່ນນີ້ກໍເພາະວ່າ ບໍລິເວນບ່ອນໄຫຫີນຢູ່ນັ້ນໄດ້ພົບກະດູກຄົນ ເຄື່ອງໃຊ້ໄມ້ສອຍ ເຄື່ອງປະດັບ ເຄື່ອງເອ້ທີ່ເຮັດດ້ວຍດິນເຜົາ ໂລຫະ

ຕ່າງໆ ... ເຂົ້າໃຈວ່າແມ່ນຍາດພີ້ນອງຂອງຜູ້ຕາຍເອົາມອບໃຫ້ຕາມປະເພນີຄວາມເຊື່ອຖືຂອງຄົນສະໄໝນັ້ນ.

ໄຫຫີນທີ່ທົ່ງໄຫຫີນນີ້ ນັກຄົ້ນຄວ້າທັງຫລາຍສັນນິດຖານວ່າ ມີອາຍຸຢ່າງນ້ອຍກໍໄດ້ 2500-3000ປີມາແລ້ວ ໄດ້ຜະລິດຂຶ້ນໃນຍຸກສະໄໝໂລຫະປະກົດຕົວ ແລະ ຫີນໄດ້ຖືກຕັດເອົາມາເຮັດດ້ວຍເຄື່ອງມືທີ່ເຮັດດ້ວຍໂລຫະ.

ວັນນະຄະດີລາວເລື່ອງທ້າວຮຸ່ງທ້າວເຈືອງ ກ່າວເຖິງໄຫຫີນຊຽງຂວາງວ່າ : ຂຸນເຈືອງສັ່ງໃຫ້ປະຊາຊົນສາງຂຶ້ນເພື່ອແຊ່ເຫລົ້າ ( ໃສ່ເຫລົ້າ ) ກິນເພື່ອສະຫລອງໄຊໃຫຍ່ ທີ່ເມືອງປະກັນ ( ຊຽງຂວາງ ) ພາຍຫລັງທີ່ໄດ້ໄຊຊະນະສົງຄາມແລ້ວ.

ທ້າວຮຸ່ງທ້າວເຈືອງນີ້ເປັນຄົນໃນຍຸກໃດ ສະໄໝໃດນັ້ນ ຍັງບໍ່ທັນແຈ່ມແຈ້ງເທື່ອ ແຕ່ວັນນະຄະດີເລື່ອງທ້າວຮຸ່ງທ້າວເຈືອງສະບັບມະຫາສີລາວີຣະວົງສຳລະນັ້ນກ່າວວ່າ ທ້າວເຈືອງເກີດປີຈໍ ເດືອນຍີ່ ຈຸນລະສັງກາດ 480 ( ຄ.ສ 1118 ).

ແຕ່ພົງສາວະດານໂຍນົກກ່າວວ່າ ທ້າວຮຸ່ງຫລືທ້າວເຈືອງ ເກີດປີເຖາະ ເດືອນ 5 ຈຸລະສັງກາດ 436 ( ຄ.ສ 1074 ).

ພົງສາວະດານລາວ ຂຽນໂດຍ ມະຫາສີລາ ວີຣະວົງ ແລະ ອູໄທເທບສິດທາ ກ່າວວ່າ ຂຸນເຈືອງລູກຄົນທີ 7 ຂອງຂຸນບໍຣົມຣາຊາທິຣາດ ໄດ້ຖືກສົ່ງລົງມາສ້າງເມືອງພວນຊຽງຂວາງ ໃນໄລຍະດຽວກັບຂຸນລໍລົງມາສ້າງເມືອງຊວາ ( ຫລວງພະບາງ ) ມີຄຳໂຄງຕອນໜຶ່ງກ່າວວ່າ :

ປູ່ເຍີ້ນອງພີ່ພອມ ທັງຫລາຍ
ຈັກຈາກໄປສະຫາຍ ເພື່ອນພຸ້ນ

ພະອວນອອນປີປາຍ ເຖິງເລົ່າ

ຢ່າໄດ້ປະຝ່າຍພຸ້ນ ອິງເຈົ້າເມືອງພວນ (ຊຽງຂວາງ)

ພົງສາວະດານເມືອງພວນຂຽນໂດຍ ເຈົ້າຄຳໜັ້ນອົງກິດລັດຕະນະກາວວ່າ ນັບແຕ່ຂຸນເຈືອງລົງມາສ້າງເມືອງພວນຊຽງຂວາງໃນກາງສະຕະວັດທີ 8 ແຫ່ງຄຼິສຕະສັງກາດ ແຕ່ນັ້ນມາເຖິງປີ ຄ.ສ 1289 ໄດ້ມີກະສັດປົກຄອງເມືອງພວນຊຽງຂວາງເຖິງ 23 ອົງ.

ເມືອງພວນຊຽງຂວາງ ຫລັກຖານໃໝ່ຂອງຈີນ ( ສິລະປະວັດທະນະທຳປີທີ 8 ສະບັບທີ 9 ພາສາໄທ ) ນັກຄົ້ນຄວ້າປະຫວັດສາດຂອງຈີນສ່ວນຫລາຍ ມີຄວາມເຫັນວ່າ ດິນແດນເມືອງພວນຊຽງຂວາງເປັນທີ່ຕັ້ງຂອງອານາຈັກຖາງນີ່ງແຕ່ສະຕະວັດທີ 1-2 ແຫ່ງຄຼິສຕະສັງກາດ ແລະ ເປັນອານາຈັກເກົ່າແກ່ຢູ່ເທິງແຜ່ນດິນລາວ ແລະ ຕໍ່ມາເມື່ອສະຕະວັດທີ 8 ສະໄໝຣາຊະວົງຖັງຂອງຈີນ ອານາຈັກຖັງນີ່ງນີ້ ໄດ້ປະກົດຊື່ໃນເອກະສານຈີນບູຮານວ່າເຕົ້ານີ່ງອານາຈັກນີ້ໄດ້ສົ່ງທູດໄປຜູກສຳພັນທະໄມຕີກັບຈີນເມື່ອປີ ຄ.ສ. 227

ເມືອງພວນຊຽງຂວາງ ໃນທັດສະນະຂອງຂ້າພະເຈົ້າຄິດວ່າ ເປັນດິນແດນເກົ່າແກ່ ໄດ້ຂະຫຍາຍຕົວຂຶ້ນເປັນສັງຄົມເມືອງຢ່າງນ້ອຍກໍ 2500-3000ປີຜ່ານມາແລ້ວ ອາດເປັນຖິ່ນກຳເນີດຂອງລາວ ເຊິ່ງປະກົດໃນເອກະສານຈີນວ່າເຜົ່າ " ເຢ່ສາງ " ແລະ ຄຳວ່າ " ເຢ່ສາງ " ໃນພາສາຈີນບູຮານ ອາດກາຍມາເປັນ " ລານຊາງ " ຫລື " ລ້ານຊ້າງ " ກໍເປັນໄດ້.

## ຂຸນເຈືອງໂດຍສະຫລຸບ

**ພະ** ເຈົ້າອະນຸຣຸດທະຣາຊແຫ່ງເມືອງພຸກາມ ຫລື ພູກາມຍາວ ( ພະມ່າ ) ໄດ້ເຊີນບັນດາພະຍາທີ່ປົກຄອງຫົວເມືອງຕ່າງໆ ... ມາປະຊຸມ ເພື່ອ

ຈັດຕັ້ງສັກກະຣາດຂຶ້ນໃໝ່ ແທນພຸທະສັກກະຣາດໃນປີ ພ.ສ 1181 ປີ ຄ.ສ 638.

ໃນເວລານັ້ນ ນະຄອນໂຍນົກ ນະຄອນລານນາ ແລະ ນະຄອນສຸໂຂໄທ ບໍ່ມີກະສັດ ພະເຈົ້າອະນຸຣຸດທະຣາຊ ຈຶ່ງໄດ້ກາບທູນພະອະມະຣິນທະຣາທິຣາດ ໃຫ້ສົ່ງເທວະບຸດລົງມາເກີດຈາກເມືອງຟ້າດາວວະດຶງ ໂດຍຈຸຕິລົງເກີດມາໃຫຍ່ໂລດໄດ້ 16 ປີ [1].

ປະຊາຊົນໃນນະຄອນຊຽງລາວ ເຫັນເປັນມະຫັດສະຈັນກໍອົງເຊີນພະອົງຄອງເມືອງ ແລະ ເປັນໃຫຍ່ແຫ່ງລານນາເຖິງ 57 ຫົວເມືອງ ແລ້ວຈຶ່ງນີພະນາມວ່າ "ລາວຈົກເທວະຣາດ" ຈຸນລະສັກກະຣາດທີ 1 ກໍໄດ້ຕັ້ງຂຶ້ນປີ ພ.ສ 1181 ( ຄ.ສ 638 ) ແຕ່ນັ້ນມາ ລ່ວງໄດ້ 1357 ປີແລ້ວ.

ລາວຈົກ ເປັນປະຖົມກະສັດແຫ່ງເມືອງເງິນຍາງຕໍ່ມາ ແຕ່ລາວຈົກເທວະຣາດນັ້ນ ໄດ້ຂຶ້ນຄອງເມືອງຊຽງລາວ ຂຸນຈອມທັມ ເຊິ່ງເປັນອົງກະສັດລາວຈົກ ກໍໄດ້ຕັ້ງເມືອງຂຶ້ນຊື່ວ່າເມືອງພະເຢົາ (ພູຍາວ ຫລື ພູກາມຍາວ ) ໃນຈຸນລະສັກກະຣາດ 459 ຫລື ຈະນັບວ່າ ເປັນກະສັດອົງທີ 42 ແຫ່ງຫິຣັນນະຄອນກໍວ່າໄດ້ ແຕ່ທໍ່ວ່າ ພະອົງບໍ່ໄດ້ສືບຣາຊະສົມບັດເມືອງນີ້ ເພາະເປັນໂອຣົດຄົນທີສອງ ພະບິດາຈຶ່ງໃຫ້ໄປຕັ້ງເມືອງໃໝ່ຂຶ້ນດັ່ງທີ່ໄດ້ກ່າວມາແລ້ວ.

ຂຸນຊຶນ ຫລື ຂຸນຊື່ນ ຫລື ຂຸນຊື່ນ ອ້າຍຂອງຂຸນຈອມທັມເປັນຜູ້ແທນອົງພະບິດາ ແລະ ເປັນອົງສຸດທ້າຍແຫ່ງຫິຣັນນະຄອນ.

ຂຸນເງິນມີໂອຣົດຢູ່ສອງພະອົງຄື ຂຸນຊຶນ ແລະ ຂຸນຈອມທັມ ຂຸນເງິນໄດ້ໃຫ້ຂຸນຈອມທັມໄປຕັ້ງເມືອງໃໝ່ ເມື່ອມີອາຍຸໄດ້ 25 ພັນສາ ເຊິ່ງເປັນ

---

(1) ສັນນິຖານວ່າ ຕອນນີ້ອາດຈະແມ່ນນິເທບນິຍາຍເຂົ້າມາກ່ຽວຂ້ອງ ( ກ່າວຢູ່ໜ້າ 117 ລິດຈະນາໂດຍ ສ. ເດຊວົງສາ )

ເມືອງໃຕ້ ທິດຕາເວັນອອກຕິດກັບຊຽງຂອງ.

ຂຸນຈອມທັມມີໂອຣົດສອງອົງຄື ຂຸນເຈືອງ ແລະ ຂຸນເຈືອງ ແລະ ປະຫວັດສາດໄດ້ຈາລຶກຊື່ຂອງຂຸນເຈືອງ ຫລື ທ້າວຮຸ່ງຜູ້ທີ່ເກັ່ງກ້າສາມາດໃນການທຳເສິກສົງຄາມ ແລະ ມີມະເຫສີຫລາຍອົງ ຄື :

1 - ນາງຈັນເທວີ ທິດາພະຍາເມືອງນ່ານ
2 - ນາງແກ້ວກະສັດ ທິດາພະຍາເມືອງແພ່
3 - ນາງງ້ອມ ທິດາພະຍາເມືອງຊຽງເຄືອ
4 - ນາງອົ້ວຄຳ ຫລື ນາງອົ້ວຄຳຄອນ ທິດາເມືອງເງິນຍາງ
5 - ນາງອຳຄາ ຫລື ນາງອາມຄາຍ ທິດາເມືອງເງິນຍາງ
6 - ນາງເກີດ ທິດາເມືອງປະກັນແຫ່ງແກວ
7 - ນາງວຽນ "
8 - ນາງພິມ "
9 - ນາງອູ່ແກ້ວ "
10 - ນາງແພງມາດ ທິດາເຈົ້າເມືອງຊຽງເຊີຍ

ຂຸນຈອມທັມໄດ້ສະວັນນະຄົດໂດຍຄອງຣາດຢູ່ເປັນເວລາ 24 ປີ [1]

ຂຸນເຈືອງເຊິ່ງມີພະຊົນມາຍຸໄດ້ 21 ປີ ( ອາຍຂອງທ້າວຮຸ່ງຫລືຂຸນເຈືອງ ) ຂຸນເຈືອງແຕ່ງຕັ້ງເປັນອະປຸຣາດ ( ຜູ້ຮອງ ).

ຫົກປີຕໍ່ມາກໍເກີດເສິກຢູ່ເມືອງເງິນຍາງ ເມືອງຂອງຂຸນຊິນຫລືຂຸນຊິ່ນລຸງຂອງຂຸນເຈືອງ ເຊິ່ງທະຫານພວກເມືອງປະກັນ [2] ຍົກມາຕີດ້ອຍເຫດຜົນຍາດຊິງເອົາພະທິດາຂອງຂຸນຊິ່ນໄປເປັນມະເຫສີ.

---

1. ຕາມພົງສາວະດານຊາດໄທ ເຫລັ້ມ 2
2. ເມືອງປະກັນປົກຄອງດ້ວຍພວກແກວໃນເວລານັ້ນ

ຂຸນຊຶ່ມຊ້ວງຂໍຄວາມຊ່ວຍເຫລືອຈາກຂຸນເຈືອງ ແລະ ເມື່ອພາບແພ້ຂ້າເສິກສັດຕູແລ້ວ ຂຸນເຈືອງກໍໄດ້ເອົາທິດາຂອງລຸງມາເປັນເມຍ ແລະ ປົກຄອງເມືອງຂອງລຸງຢູ່ໄດ້ 24ປີ ແລະ ປົກຄອງເມືອງລ້ານຊ້າງ 3 ປີ [1] ແລ້ວກໍຣົບກັບແກວຕັງເກຍພາບແພ້ສັດຕູແລ້ວກໍໄດ້ຮັບຍົດເປັນ "ອອງ" ຈາກພະເຈົ້າຈັກກະພັດຈີນ [2] ແລະ ຂໍກາບທູນແຕ່ງຕັ້ງ ໂອຣົດຂຸນເຈືອງຊື່ວ່າ "ຂຸນລາວເງີນເຮືອງ" ຄອງເມືອງເງີນຍາງ.

ຂຸນເຈືອງຄອງເມືອງແກວໄດ້ 17 ປີ ມີຣາຊະບຸດກັບນາງອູ່ແກ້ວ ລູກກະສັດແກວ 3ອົງຄື : ອາຍຜາເຮືອງ ຍີ່ຄຳຫາວ ແລະ ສາມຂຸມແສງແລ້ວກໍຍົກເມືອງໃຫ້ລູກປົກຄອງດັ່ງນີ້ :

| | | |
|---|---|---|
| ອ້າຍຄຳເຮືອງ | ປົກຄອງ | ເມືອງປະກັນ ( ຊຽງຂວາງ ) |
| ຍີ່ຄຳຫາວ | " | ເມືອງລ້ານຊ້າງ |
| ສາມຂຸມແສງ | " | ເມືອງນ່ານ ( ນັນທະບູຣີ ) |

ຂຸນເຈືອງມະຫາຣາດ ກະສັດທີ່ລືຊື່ ໄດ້ສະວັນະຄົດຢູ່ເທິງຄໍຊ້າງເສິກເຊິ່ງສະຫລຸບໄດ້ດັ່ງນີ້ :

| | |
|---|---|
| ຂຶ້ນສະເວີຍຣາດ ພະຊົນມາຍຸໄດ້ | 26 ປີ |
| ຄອງລ້ານນາ | 24 ປີ |
| ຄອງເມືອງແກວ (ເມືອງປະກັນ) | 17 ປີ |
| ພະຊົນມາຍຸໄດ້ | 77 ປີ |

ດັ່ງນັ້ນ ເຊື້ອງລາວຈົກ ຫລື ລະວາຈັກກະຣາດ ຈຶ່ງຖືວ່າເກີດແລ້ວໃຫຍ່ທັນທີທັນໃດ 16 ປີ ໂລດນັ້ນ ກໍບໍ່ເປັນຫນ້າແປກປະຫລາດ ເພາະຄົນສະໄຫມ

1. ພ.ສ. 1763 ຕາມພົງສາວະດານຊາວໄທເຫລັ້ມ 2 ຫນ້າ 46
2. ພະຍາຫໍ ເຈົ້າຣົ້ມຟ້າແກ້ວພິມານ

ນັ້ນ ກໍເຊື່ອເລື່ອງເທວະດາຟ້າແຖນຢູ່ແລ້ວ ແລະ ເຊື່ອວ່າ ຜູ້ທີ່ເປັນກະສັດລ້ວນ ແຕ່ແມ່ນເທວະບຸດເທວະດາຈຸຕິລົງມາເກີດທັງນັ້ນ.

ຄຳທີ່ວ່າ " ລາວຈົກ " ເຫັນຈະແມ່ນມາຈາກເຊື້ອອາຍລາວນັ້ນເອງ ທີ່ມາຈາກເມືອງແຖງ ຫລື ເມືອງແຖນ ແລ້ວກໍ່ເຕີມໃຫ້ຜິດສະດານເພີ່ມ ຄວາມເຊື່ອຖືຕື່ມອີກວ່າມາຈາກເມືອງຟ້າເມືອງແຖນ ທຽບກັບພາສາຝຣັ່ງ ເສດແລ້ວກໍແມ່ນ " Empire célerte "

ເຫັນຈະແມ່ນ ຜູ້ເປັນກະສັດອາຍລາວສະໄໝນັ້ນຈະສົ່ງເຊື້ອວົງອົງ ກະສັດ ຊື່ວ່າ " ລາວຈົກ " ລົງມາປົກຄອງຊຽງລາວ ຈຶ່ງເປັນກະສັດທີ່ລືຊາ ປາກົດ ຄືວ່າມີລິດມີເດດ ແລະ ເປັນທີ່ນັບຖືລືຊາໃນແຄວ້ນລ້ານນາ ທີ່ກຳລັງ ອາດກະສັດປົກຄອງຢູ່ຜີດີໃນສະໄໝນັ້ນ.

ອ້າຍລາວໃນສະໄໝກ່ອນໆພຸນ ກໍໄດ້ລົງມາຊອກຫາບ່ອນທີ່ຕັ້ງຖິ່ນ ຖານໃໝ່ທາງພາກໃຕ້ປົນຢູ່ກັບ ພວກທີ່ຢູ່ກ່ອນເຊັ່ນພວມຂອມ ມອນ ທີ່ຢູ່ກ່ອນ ແລ້ວ.

ໃນລະຫວ່າງປີ 493 ແລະ ໃນ ພ.ສ 50[1] ລືປະມານ 2467 ປີ ລ່ວງມາແລ້ວ ພວກອ້າຍລາວໃນນະຄອນປາ ( ໃນຖິ່ນຈຸງກິງຂອງຈີນ ) ໄດ້ ເຄື່ອນຍ້າຍຖອຍລົງມາຢູ່ຍຸນນານ ຕັ້ງເມືອງເລັ້ມ ແລະ ຊຽງຮຸ່ງ ຊຽງລາວ ດ້ວຍການຕັ້ງຊຽງລາວ ອາດກ່ອນ ທີ່ລາວຈົກເທວະບຸດມາສືບຄອງ ເພາະສະ ໄໝ ພ.ສ 1181 ເຊິ່ງເປັນສະໄໝປຽນ ພ.ສ ເພື່ອຈັດຕັ້ງ ຈ.ສ (ຈຸນລະສັກກະຣາດ )ນັ້ນ ແຕບນີ້ບໍ່ມີຣາຊະທາຍາດ

ການເຄື່ອນຖອຍລົງມາທາງພາກໃຕ້ຂອງພວກອ້າຍລາວນັ້ນເນື່ອງ ມາຈາກການບີບເຕັງຂອງພວກເຈັກ.

---

1- ພ.ສ 50 ຕາມພົງສາວະດານຊາດໄທເຫລັ້ມ 2

ສະໄໝຕໍ່ມາ ຂຸນບໍຣົມຣາຊາທິຣາດກໍມາຕັ້ງເມືອງໃໝ່ໃນແຄວ້ນສິບສອງຈຸໄທ.

ເມື່ອຂຸນບໍຣົມສະວັນນະຄົດທີ່ເມືອງຕາຫໍ່ແລ້ວ [1] ຂຸນໄສພົງ ຜູ້ເປັນຫລານຊາຍກໍມາສ້າງເມືອງໃໝ່ໃນບໍລິເວນ ສຸວັນນະໂຄມຄໍາ ເຊິ່ງເປັນເມືອງຂອມຮ້າງ ໄສພົງກໍສະເດັດສະວັນນະຄົດ ເລີຍບໍ່ມີຣາຊະທາຍາດ.

ພະເຈົ້າເມືອງກາຫລົງ ( ບ້ານເດີມຂອງຂຸນບໍຣົມ ) ຈຶ່ງຈັດສົ່ງພະເຈົ້າ ສິງຫະນະວັດ ຜູ້ເປັນໂອຣົດອົງນ້ອຍ [2] ລົງມາແທນ ໃນປີ ພ.ສ 1317 [3].

ໃນສະໄໝນັ້ນ ພວກອ້າຍລາວກໍໄດ້ພາກັນລົງມາລຶ້ງແກ່ວນກັບແຜ່ນດິນແຖບນີ້ພໍແຮງແລ້ວ ໂດຍປູ່ເຈົ້າລາວຈົກເປັນໃຫຍ່ ຄອບຄອງທັງພາກເໜືອຕະຫລອດໃຕ້ ( ແຕ່ຫນອງແສຮອດດິນແດນໃຕ້ທີ່ມາຢູ່ໃໝ່ ).

ຈຶ່ງພໍສະຫລຸບໄດ້ວ່າ ຂຸນເຈືອງ ບໍ່ແມ່ນອື່ນໄກ ເປັນເຊື້ອສາຍຂອງອ້າຍລາວນີ້ເອງ ທີ່ເປັນເຊື້ອກະສັດທີຣົມມະຄອນ ຈາກ ລາວຈົກເທວະບຸດ ເຊິ່ງກາຍເປັນຣາຊະວົງໃໝ່ ...

## ພື້ຂຸນເຈືອງ

**ມີ**ຫລາຍຕໍາລາເອກະສານ ແລະ ຕໍານານໄດ້ຂຽນເພີ່ມເຕີມລົດຊາດຂຶ້ນຕື່ມ ເມື່ອຂຸນເຈືອງສະວັນນະຄົດແລ້ວກໍຍັງເວົ້າໄປຕື່ມວ່າ :

---

1- ຕາມພົງສາວະດານຊາດໄທເຫລັ້ມ 2

2- ສິງຫະນະວັດ ເປັນຫລານປູ່ຂອງຂຸນບໍຣົມ

3- ພົງສາວະດານຊາດໄທ ໜ້າ 89 ເຫລັ້ມ 2 ແຖວ 14

ພໍແຕ່ຂຸນເຈືອງສວັນນະຄົດແລ້ວ ກໍພາກິດເປັນຜູ້ມີລິດມີເດຊານຸພາບ ອີກຢູ່ໃນເມືອງຜີ ແລະ ໄດ້ຍົກທັບຂຶ້ນໄປຣົບກັບພະຍາແຖນອີກ ໂດຍໄດ້ຜ່ານໄປທາງເມືອງ " ຄາຂຽວ " ກ່າຍຂັ້ນໄດເມືອເທິງຟ້າ ໃຊ້ໃຫ້ຂຸນຄອນໄປຖາມທາງໄປເມືອງແຖນນຳພວກໄທແອງ ແລ້ວກາຍໄປເຖິງຂັ້ນໄດລີງ ໄປເຖິງແມ່ນ້ຳລີນຄຳ.

ເຈົ້າເມືອງຫລຽນພານແຂງຂໍ່ ບໍ່ອອນນ້ອມ ຈຶ່ງຍົກທັບຜີເຂົ້າຕີເມືອງຫລຽນພານແຕກ.

ພະຍາຫລຽນພານຢ້ານຫລາຍຈຶ່ງຍົກເມືອງໃຫ້ຂຸນເຈືອງປົກຄອງ ແຕ່ ກໍຍັງບໍ່ທັນສິ້ນສຸດຢູ່ທີ່ນັ້ນ ຂຸນເຈືອງໄດ້ແຕ່ງໃຫ້ຂຸນຄອນໄປແຈ້ງຄວາມຈຳນົງຂອງຕົນຕໍ່ພະຍາອິນໃນຊັ້ນດາວອະດຶງສາ.

ພະຍາອິນຢ້ານກົວ ເພາະພະອົງມັກແຕ່ຄວາມສະຫງົບ ຈຶ່ງຊົງມອບເມືອງ " ສວາງ " ໃຫ້ຂຸນເຈືອງປົກຄອງ ແລະ ໄດ້ມອບແຖນທັງຫລາຍໃຫ້ເປັນເສນາບໍຣິວານ ເຊັ່ນ ແຖນໂກໄກ ແຖນຖາວ ແຖນເຟືອງ ແຖນໜອກ ແຖນຕາກາບິນ ແຖນສິງ ແຖນເນງ ແຖນນິ່ງ ແຖນລົມ ແຖນສອງ ແຖນຕື້ ແລະ ແຖນງວງ ເປັນຕົ້ນ...

ໃນວັນທີ **20** ເດືອນ **11** ປີ **1994** ຄະນະຄົ້ນຄວ້າເມືອງ "ຟູກຸໂອກະ" ຍີ່ປຸ່ນ ໄດ້ມາເມືອງລາວ ເພື່ອສຳຫລວດສະຖານທີ່ວັດຖຸໂບຮານຢູ່ແຂວງຊຽງຂວາງ ໂດຍສະເພາະແມ່ນໄຫຫີນແຂວງຊຽງຂວາງ.

ຜ່ານຈາກການປຶກສາຫາລື ແລະ ຕົກລົງກັບລັດຖະບານລາວ ຢ່າງເປັນທາງການແລ້ວ ຄະນະສຳຫລວດໄດ້ແຕ່ງຕັ້ງຂຶ້ນເປັນ 2 ຄະນະໂດຍແມ່ນທ່ານອາຈານເບດຕະອິຈິ ແລະ ທ່ານອາຈານ ຢາມາຊາກິ ຊຸມິໂອ ຮັບຜິດຊອບປະກອບນິພະນັກງານທີ່ກ່ຽວຂ້ອງທາງໂບຮານວັດຖຸຂອງກະຊວງຖະແຫລງຂ່າວ ແລະ ວັດທະນະທຳ.



ຜ່ານຈາກການສຳຫລວດໄຫຫີນຊຽງຂວາງຢູ່ບ້ານອ່າງ ເດີ່ນຍົນທົ່ງໄຫຫີນ ນັບຈຳນວນໄຫຫີນໄດ້ 297 ໜ່ວຍ ໜ່ວຍທີ່ໃຫຍ່ທີ່ສຸດມີຄວາມສູງ 3,25 ແມັດ ແລະ ປາກກວ້າງ 3,00 ແມັດ ແລະ ມີອັນພິເສດຢູ່ຈຸດທີໜຶ່ງນີ້ ຄະນະສຳຫລວດໄດ້ເຫັນຮູບແກະສະລັກໃສ່ຂ້າງໄຫຫີນໜ່ວຍທີ່ຂຶ້ນທະບຽນເລກທີ 217ເຊິ່ງຍັງບໍ່ທັນມີໃຜພົບເຫັນຮູບສະລັກນີ້ມາກ່ອນ( ເບິ່ງຕາມຮູບ ) ແລະ ຍັງໄດ້ພົບເຫັນກະດູກຄົນຕາຍ ເຄື່ອງໄຫແຕກ ເຄື່ອງເອ້ທີ່ຜະລິດດ້ວຍດິນເຜົາ ແລະ ມີດທີ່ຜະລິດດ້ວຍເຫລັກ ( ພົບຮູບສະລັກວັນທີ 20/11/ 1994).

ຄະນະຍັງໄດ້ສືບຕໍ່ສຳຫລວດເບິ່ງໄຫຫີນ ຈຸດທີ 2 ຢູ່ໂນນພູສາລະໂຕະທົ່ງບ້ານລາດຄາຍ ແລະ ຈຸດທີ 3 ກໍຢູ່ທົ່ງບ້ານລາດຄາຍ ( ທັງສອງຈຸດນີ້ຍັງບໍ່ທັນໄດ້ຂຶ້ນທະບຽນເທື່ອ ).

# ເລົ່າສູ່ກັນຟັງ

## ເລື່ອງການສ້າງໄຫຫີນ

**ປີ**1965 ລຸງຄຳຊາວມີອາຍຸ 72 ປີ ເປັນຄົນອາວຸໂສຢູ່ເມືອງຄູນແຂວງຊຽງຂວາງ ເປັນຜູ້ມັກຄົ້ນຄວ້າ ແລະ ຊອກຮູ້ເລື່ອງລາວຕ່າງໆທາງປະຫວັດສາດຂອງຊາດລາວ.

ລຸງໄດ້ເລົ່າສູ່ຂ້າພະເຈົ້າຟັງວ່າ :

... ອັນເລື່ອງການສ້າງໜ່ວຍໄຫຫີນນັ້ນ ບໍ່ມີເອກະສານ ຫລື ຕຳນານສະບັບໃດຂຽນໄວ້ຢ່າງຈັດແຈ້ງ ທີ່ຜ່ານມາກໍພຽງແຕ່ກ່າວຂານກັນສືບຕໍ່ມາ ຊະນິດທີ່ວ່າ " ເຖົ້າໆເອົາວ່າຊຸ້ມເທາະ ... " ຕັ້ງແຕ່ຄົນຝຣັ່ງເສດເອງ ທີ່

ລຸງນີ້ແລ້ວພາໄປຄົ້ນຄວ້າ ໄປພິສູດເບິ່ງຄວາມເປັນມາຂອງໄຫຫີນ ພວກເພິ່ນກໍຍັງເປັນສອງຈິດສອງໃຈວ່າ : ແມ່ນສະກັດເອົາມາຈາກຫີນແທ້ບໍ ຫລື ວ່າປັ້ນຂຶ້ນເອົາເອງ ... ?

ຜູ້ເຖົ້າຜູ້ແກ່ພໍ່ແມ່ເລົ່າຕໍ່ກັນມາວ່າ : ໄຫຫີນແມ່ນປັ້ນຂຶ້ນດ້ວຍມືສະໄຫມຂຸນເຈືອງມາຮົບຊະນະທ້າວກວ່າກັບທ້າວແອງກາຢູ່ເມືອງປະກັນແລ້ວຂຸນເຈືອງກໍສັ່ງໃຫ້ໄພ່ພົນປັ້ນໄຫຫີນ ດ້ວຍການນຳເອົາຫນັງມ້າຫນັງຊ້າງ ຫນັງງົວ ຫນັງຄວາຍທີ່ຕາຍຫລວງຫລາຍເວລາສູ້ຮົບກັນນັ້ນມາຕົ້ມເພື່ອໃຊ້ແທນ " ຊີມັງ " ດຽວນີ້ເຮົາໃຊ້ຊີມັງ ຫນັງຈຳພວກສັດເຫລົ່ານັ້ນ ເວລາຕົ້ມແລ້ວກໍຫນຽວຫີນຫານພິລຶກ ການຕົ້ມຫນັງສັດນັ້ນແມ່ນຕົ້ມປະສົມໃສ່ກັບໃບສະແລ ( ໃບສະແລເປັນໃບໄມ້ຊະນິດນຶ່ງ ແລະ ຫນຽວ ທີ່ປະຊາຊົນເອົາເຮັດຄັນຮົ່ມ ແລະ ເອົາຕົ້ມປົນກັບເຂົ້າເພື່ອເກືອຫມູ ຫມູກິນແລ້ວກໍຈະອ້ວນພີ )

ຕົ້ມຫນັງງົວຫນັງຄວາຍ ແລະ ຫນັງສັດຕ່າງໆໃສ່ກັບໄມ້ບົງໃບສະແລ ແລະ ນ້ຳອ້ອຍມີຄຸນນະພາບທາງຫນຽວ ແລະ ທົນທານລື່ນຊີມັງໃນຍຸກນີ້ອີກຊ້ຳ.

ພວກເພິ່ນເອົາດິນຊາຍ ດິນແຮ່ ດິນແລນ ແລະ ປູນຜາມາຄົນເຂົ້າໃສ່ກັນແລ້ວກໍເອົານ້ຳຕົ້ມຫນັງສັດນັ້ນແລ້ວຄົນເຂົ້າໃສ່ກັນເພື່ອປັ້ນໄຫຫີນຈຳນວນ 300 ຫນ່ວຍ ທັງຫນ່ວຍໃຫຍ່ກໍມີ ຫນ່ວຍນ້ອຍກໍມີ.

ປັ້ນແລ້ວກໍເອົາເຂົ້າໄປເຜົາຢູ່ໃນຖ້ຳເທື່ອລະ 15 ຫນ່ວຍເພື່ອເອົາມາເປັນໄຫເຫລົ້າຂອງຂຸນເຈືອງກິນສະຫລອງໄຊເປັນເວລາ 210 ມື້ (7ເດືອນ) ແລະ ຂຸນເຈືອງປົກຄອງຢູ່ເມືອງປະກັນໄດ້ 17 ປີ ຈົນເຖິງອາຍຸໄດ້ 77 ປີກໍຕາຍຢູ່ເທິງຄໍຊ້າງຕອນໄປສູ້ກັບພະຍາຟ້າຮ່ວານ ຫລື ຂຸນລໍ ...

ເມື່ອອ່ານເບິ່ງປະຫວັດສາດຫລືພົງສາວະດານແລ້ວເຫັນວ່າມີອັນສັບສົນປົນເປກັນຫລາຍ ດີແທ້ໆນັ້ນ... ຄວນຈະສຶກສາຄົ້ນຄວ້າລິດຈະນາໃຫ້ລະ

ຂຽດຕື່ມ ເພື່ອໃຫ້ເປັນບັ້ນເປັນຕອນຕໍ່ເນື່ອງກັນ ແລະ ບໍ່ສັບສົນ.

ທີ່ເລົ່າມານີ້ບໍ່ມີເອກະສານຢັ້ງຢືນເປັນຫລັກຖານອັນໃດດອກ ມີແຕ່ພໍ່ແມ່ເຖົ້າແກ່ເລົ່າປາກຕໍ່ປາກກັນມາ ຈະຈິງຫລືບໍ່ຈິງຄືແນວໃດກໍຄວນຄົ້ນຄິດລອງເບິ່ງ ບາງເທື່ອກໍອາດຈະເຮັດໃຫ້ເຮົາແປກປະຫລາດກໍເປັນໄດ້... ເມື່ອພໍ່ແມ່ຂອງໄທພວນເຮົາໃຜໆກໍເລົ່າວ່າ " ໄຫຫີນໄດ້ປັ້ນຂຶ້ນດ້ວຍມືແທ້ໆ ..."

# ວິເຄາະ

## ກ່ຽວກັບເລື່ອງຂຸນເຈືອງ

ກ່ອນອື່ນຂໍສະແດງຄວາມຮູ້ບຸນຄຸນຕໍ່ບັນດາທ່ານ ອາຈານ ແລະ ນັກປາດຜູ້ອາວຸໂສ ທີ່ໄດ້ສຶກສາຄົ້ນຄວ້າ ແລະ ລິດຈະນາພື້ນແຜ່ນປະຫວັດສາດຫລືພົງສາວະດານລາວ ຈັດພິມອອກເຜີຍແຜ່ເປັນມໍລະດົກອັນປະເສີດ ແລະ ລ້ຳຄ່າທີ່ສຸດຂອງແຜ່ນດິນລາວ ແລະ ຂອງປະຊາຊົນລາວ ເພື່ອໃຫ້ລູກຫລານ ແລະ ຄົນຮຸ່ນຕໍ່ໄປມີເອກະສານຢັ້ງຢືນ ມີຂໍ້ມູນພື້ນຖານເພື່ອສຶກສາຄົ້ນຄວ້າຕໍ່ໆໄປ ...

ແນ່ນອນ ການຮັບໂຮມເອົາປະຫວັດສາດຫລືພົງສາວະດານທັງໝົດ ແລະ ທັງຫລາຍນັບເປັນຫລາຍພັນປີມາບັນຈຸເຂົ້າໃສ່ໃນປຶ້ມຫົວໜຶ່ງຫົວດຽວ ເພື່ອໃຫ້ຄົບຖ້ວນ ແລະ ສົມບູນແບບໂລດນັ້ນ ແມ່ນເປັນໄປບໍ່ໄດ້.

ເຊັ່ນເລື່ອງທ້າວເຈືອງ ຫລື ເລື່ອງຂຸນເຈືອງນີ້ເປັນຕົ້ນ ມີຫລາຍຕຳນານ ມີຫລາຍເອກະສານທີ່ພິມອອກ ໄດ້ກ່າວເຖິງຂຸນເຈືອງບໍ່ຄືກັນ ເມື່ອສຶກ

ສາຄົ້ນຄວ້າຢ່າງລະອຽດແລ້ວ ເຫັນວ່າ ມີບາງຕອນ ມີບາງບ່ອນສັບສົນປົນເປກັນຢູ່ ບໍ່ແມ່ນຂອງຄ່ອຍເລີຍ ເຊັ່ນ :

1 - ວັນເດືອນປີເກີດຂອງທ້າວເຈືອງຫລືຂຸນເຈືອງ ຫລື ທ້າວຮຸ່ງ ແລະ ຫລືທ້າວຢີ່ ບາງຕຳນານຂຽນວ່າ " ທ້າວເຈືອງ ຫລື ທ້າວຮຸ່ງ ແລະ ຫລື ທ້າວຢີ່ ເກີດເດືອນຍີ່ ( ເດືອນສອງ ) ວັນອັງຄານ ມື້ເພິງ ປີຂານ ( ປີເສືອ ) ກົນຣືກຫນ່ວຍວິສາຂະ ກົງກັບປີ ຄ.ສ 1.099 ພ.ສ1642 ຈ.ສ 480 " .

ບາງຕຳລາກໍຂຽນວ່າ " ທ້າວເຈືອງຫລືທ້າວຮຸ່ງຫລືທ້າວຢີ່ ເກີດເດືອນ 5 ປີເຖາະ ( ປີກະຕ່າຍ ) ...

2 - ກ່າວເຖິງຂຸນບໍຣົມຣາຊາທິຣາດໄດ້ສົ່ງລູກຊາຍທັງ 7 ຫລື ໂອຣົດທັງ 7 ໄປປົກຄອງເມືອງຢູ່ 7 ບ່ອນນັ້ນ ຕຳລາ 4 ສະບັບໄດ້ກ່າວເອົາໄວ້ບໍ່ຄືກັນ ( ໃຫ້ເບິ່ງລາຍລະອຽດຢູ່ພາກທີຫນຶ່ງ " ການອົບພະຍົບຂອງເຜົ່າຄົນລາວ " ໂດຍສັງເຂບ.

3 - ເມື່ອກ່າວເຖິງໂອຣົດແຕ່ລະຄົນໄປແຕ່ລະບ່ອນ ເຫັນວ່າ "ຂຸນລໍ" ທີ່ຍົກທັບລົງມາຕີເອົາເມືອງຊວາ ( ຫລວງພະບາງ ) ນັ້ນ ມີຂໍ້ມູນລະອຽດພໍສົມຄວນ ແຕ່ ເມື່ອກ່າວເຖິງທ້າວເຈືອງທີ່ຖືກສົ່ງໄປເມືອງປະກັນ ຫລື ເມືອງປະຄັນ( ແຂວງຊຽງຂວາງ ) ນັ້ນ ເຫັນວ່າບໍ່ມີພົງສາວະດານສະບັບໃດກ່າວໄດ້ຢ່າງລະອຽດ ມີແຕ່ໄດ້ກ່າວເຖິງທ້າວເຈືອງ ຫລື ທ້າວຮຸ່ງ ຫລື ທ້າວຢີ່ ລູກຂອງຂຸນຈອມທັມ ທີ່ນະຄອນທີຣົນເງີນຍາງຍົກທັບໄປຊ່ວຍລຸງຊື່ຂຸນຊຶ່ມ ຫລື ຂຸນຊີນຣົບກັບທັບທ້າວກວ່າ ແລະ ທ້າວແອງກາ ທີ່ຍົກທັບຈາກເມືອງປະກັນ(ຊຽງຂວາງ ) ໄປຍາດຊິງເອົານາງອົວຄາມາເປັນມະເຫສີແລ້ວກໍເກີດເສິກໃຫຍ່ກັນຂື້ນ ຈົນຊື່ສຽງຂອງທ້າວເຈືອງລືຊາປາກົດໄປທົ່ວສາລະທິດ ເພາະຣົບຊະ ນະທັບທ້າວກວ່າ ແລະ ທ້າວແອງກາແຕກແກວ.

ມີບາງຕຳລາໄດ້ກ່າວພຽງສັ້ນໆວ່າ "ທ້າວເຈືອງ" ໂອຣົດຂຸນບໍຣົມ

ຣາຊາທິຣາດຍົກທັບມາຕີ " ທ້າວເຈືອງ " ເຊັ່ນດຽວກັນ ທີ່ປົກຄອງເມືອງປະກັນ ເຊິ່ງທຳອິດນັ້ນຣົບບໍ່ຊະນະ ຈຶ່ງຖອຍໄປປັບປຸງກຳລັງເພື່ອໃໝ່ແລ້ວກັບຄືນມາຣົບເທື່ອທີສອງຈຶ່ງຊະນະ ທ້າວເຈືອງຜູ້ປົກຄອງເມືອງປະກັນ ຜູ້ເກົ່ານັ້ນແລ້ວກໍບໍ່ໄດ້ກ່າວຕໍ່ໄປອີກເລີຍ ...

4 - ຕຳນານ ຫລື ເອກະສານເກືອບທຸກສະບັບໄດ້ເວົ້າເຖິງລະຫວ່າງປີ ຄ.ສ 657 (ພ.ສ 1200) ວ່າ : " ສະໄໝນັ້ນ ພວກຂອມເຮືອງອຳນາດຫລາຍ ຫລື ຈະເລີນຮຸ່ງເຮືອງຫລາຍ ແລະ ມີການແຜ່ອຳນາດອອກຢ່າງກວ້າງຂວາງ ເຊິ່ງມີ 2 ອານາຈັກ ຄື ຢູ່ທາງທິດໃຕ້ເບື້ອງຊ້າຍແມ່ນ້ຳຂອງແມ່ນອານາຈັກສີໂຄດຕະປູຣະ ຫລື ໂຄຕະບູນ ແລະ ຢູ່ທາງຝັ່ງຂວາແມ່ນ້ຳຂອງ ແມ່ນອານາຈັກທະວາຣະວະດີ ຫລື ອານາຈັກສີວິໄຊ ... "

ເມື່ອເບິ່ງລະອຽດໃນປີ ຄ.ສ ຫລື ພ.ສ ທີ່ວ່າດັ່ງກ່າວນັ້ນ ແລ້ວເບິ່ງໃສ່ປີ ຄ.ສ ຫລື ປີ ພ.ສ ທີ່ອານາຈັກໜອງແສຮຸ່ງເຮືອງສຸດຂີດກໍແມ່ນປີ ຄ.ສ 754 ພ.ສ 1297 ເຊິ່ງໄລຍະເວລາບໍ່ຫ່າງໄກກັນພໍປານໃດ.

ຈຶ່ງພໍສະຫລຸບໄດ້ລາຍລະອຽດຕື່ມວ່າ : ໃນເວລາດຽວກັນນີ້ ແຜ່ນດິນແຫລມທອງຕອນນີ້ໄດ້ມີ 3 ອານາຈັກຮຸ່ງເຮືອງສຸດຂີດຄື : ໜຶ່ງອານາຈັກໜອງແສແຫ່ງອ້າຍລາວ ສອງ ອານາຈັກທະວາຣະວະດີ ຫລື ອານາຈັກ ສີວິໄຊ ແລະ ສາມ ອານາຈັກສີໂຄຕະປູຣະ ຫລື ໂຄຕະບູນ.

ດັ່ງນັ້ນ ຈຶ່ງເປັນໄປໄດ້ວ່າ ຕອນທີ່ ຂຸນບໍຣົມຣາຊາທິຣາດໄດ້ສົ່ງລູກທັງ 7 ໄປປົກຄອງ 7 ເມືອງ ແລະ ຂຸນລໍກັບທ້າວເຈືອງ ( ລູກຄົນທີໜຶ່ງ ແລະ ລູກຄົນທີເຈັດ ) ທີ່ສົ່ງໃຫ້ລົງມາເອົາເມືອງຊວາ ແລະ ເມືອງປະກັນນັ້ນ ໄດ້ພ້ອມກັນຕີຂັບໄລ່ພວກປົກຄອງເກົ່າ ຢູ່ເມືອງຊວາ ( ຫລວງພະບາງ ) ກໍແມ່ນຕີຂັບໄລ່ຂຸນຊວາແຕກໜີໄປ ແລ້ວຂຸນລໍກໍຂຶ້ນປົກຄອງເມືອງຊວາ ສ່ວນທ້າວເຈືອງກໍໄປຕີກັບທ້າວເຈືອງຜູ້ປົກຄອງເມືອງປະກັນເກົ່າແລ້ວກໍຂຶ້ນປົກຄອງ

ເມືອງປະກັນ.

ສ່ວນວ່າ ຂຸນເຈືອງລູກຂອງຈອມທັມໄປຕີເອົາເມືອງປະກັນນັ້ນ ແມ່ນປີ ຄ.ສ 1.134 ( ພ.ສ 1.677 ) ເພາະທ້າວເຈືອງເກີດປີ ຄ.ສ 1099 ຈົນຮອດ 35 ປີ ຈຶ່ງຍົກທັບໄປຕີເມືອງປະກັນ ຈຶ່ງບວກ 35 ປີເຂົ້າໃສ່ເປັນ ຄ.ສ 1146 ( ພ.ສ 1677 ) ແລະ ຂຸນບໍຣົມຣາຊາທິຣາດໄດ້ແຕ່ງລູກທັງ 7 ໄປປົກຄອງເມືອງທັງ 7 ເມື່ອປີ ຄ.ສ 740 ( ພ.ສ 1283 ) ເປັນເວລາຫ່າງໄກກັນເຖິງ 400 ປີ.

ຈຶ່ງເຫັນວ່າ " ເລື່ອງຂຸນເຈືອງ " ຄົງຈະແມ່ນນິຍາຍອີງປະຫວັດສາດທີ່ນັກຂຽນໄດ້ຂຽນຂຶ້ນໂດຍອີງໃສ່ປະຫວັດຄວາມເກ່ງກ້າຂອງຂຸນເຈືອງໃນອະດີດແລ້ວຜູກຮ້ອຍເລື່ອງລາວ ຂຽນຂຶ້ນເຊິ່ງເປັນວັນນະກຳທີ່ມີຄຸນຄ່າຍິ່ງໜັກຂອງລາວເຮົາ.

# ວິເຄາະ

## ກ່ຽວກັບເລື່ອງໄຫຫີນ

**ມາ** ເຖິງຍຸກນີ້ສະໄໝນີ້ ປິດສະໜາກ່ຽວກັບໄຫຫີນມີການກຳເນີດເກີດຂຶ້ນມາຄືແນວໃດນັ້ນ ? ຍັງເປັນສິ່ງທີ່ຈະຕ້ອງສຶກສາຄົ້ນຄວ້າຕໍ່ໄປ...

ຕາມຄວາມເຊື່ອ ແລະ ຕາມເລົ່າຂານກັນສືບຕໍ່ກັນມາແຕ່ຄັ້ງໂບຮານນະການ ຫລື ແຕ່ຄັ້ງດຶກດຳບັນກໍວ່າ " ໄຫຫີນແມ່ນໄຫເຫລົ້າເຈືອງ ສະໄໝຂຸນເຈືອງມີໄຊຊະນະພາບແພ້ຂ້າເສິກສັດຕູຢູ່ເມືອງປະກັນ ແລ້ວກໍສ້າງໄຫຫີນຂຶ້ນເພື່ອເປັນໄຫເຫລົ້າຄົບງັນສະຫລອງໄຊດົນນານເຖິງ 7 ເດືອນ... "

ຕາມການສຶກສາຄົ້ນຄວ້າຂອງນັກວິທະຍາສາດຫລາຍປະເທດ ທັງໃກ້ ແລະ ໄກ ໄດ້ມີຄຳເຫັນເປັນເອກະພາບນຳກັນວ່າ " ໄທທືນມີອາຍຸມາໄດ້ 2500 ເຖິງ 3000ປີ ... "

ບັດນີ້ເຮົາມານັບຍ້ອນຫລັງຄືນແຕ່ນີ້ໄປ 3.000 ປີ ນັບອ່ານປີ ຄ.ສ ບວກລົບປຽບທຽບໃສ່ກັນແລ້ວ ກໍແມ່ນກ່ອນການມີ ຄ.ສ ແລະ ກ່ອນການມີ ພ.ສ ອີກຊ້ຳ.

ນັ້ນກໍຫມາຍຄວາມວ່າ ໄທທືນໄດ້ກຳເນີດເກີດຂຶ້ນສະໄຫມຄົນເຜົ່າລາວທາກໍຈະປາກົດຕົວໃຫ້ນັກວິທະຍາສາດຍຸກນີ້ຂຸດຄົ້ນຮ່ອງຮອຍປະຫວັດສາດເຫັນວ່າ ເປັນຄົນເຜົ່າຫນຶ່ງທີ່ຢູ່ຮ່ວມກັນເປັນກຸ່ມກ້ອນທີ່ຕີນພູເຂົາອັນໄຕ ຫລື ພູເຂົາແອນໄຕ.

ສ່ວນເລື່ອງລາວກ່ຽວກັບຂຸນເຈືອງລູກຊາຍຄົນທີສອງຂອງຂຸນຈອມທັມແຫ່ງນະຄອນທີຮົນເງິນຍາງນັ້ນ ຂຸນເຈືອງເກີດປີ ຄ.ສ 1099 ພໍອາຍຸໄດ້ 35 ປີກໍໄປຕີເອົາເມືອງປະກັນ ເມື່ອໄດ້ໄຊຊະນະແລ້ວກໍສ້າງໄທທືນສະຫລອງໄຊ 7 ເດືອນ ແລະ ເມື່ອບວກອາຍຸຂອງຂຸນເຈືອງກັບ ຄ.ສ ກໍຈະເປັນ ຄ.ສ 1134.

ບັດນີ້ ລອງມາອ່ານເບິ່ງພົງສາວະດານລາວ ເພື່ອຢາກຮູ້ວ່າ ປີ ຄ.ສ 1134 ແມ່ນຕົກຢູ່ໃນສະໄຫມໃດ ?

ຈຶ່ງເຫັນວ່າ ລະຫວ່າງປີ ຄ.ສ 1.100 ເຖິງ 1.200 ແມ່ນປີທີ່ອານາຈັກຫນອງແສແຫ່ງເຜົ່າພັນອ້າຍລາວປົກຄອງອານາຈັກຫນອງແສຮຸ່ງເຮືອງສຸດຂີດ ແລະ ເປັນສະໄຫມທີ່ຂຸນບໍຣົມຣາຊາທິຣາດໄດ້ສົ່ງລູກຊາຍທັງ 7 ໄປປົກຄອງເມືອງຢູ່ 7 ບ່ອນຕາມປະຫວັດສາດ ແລະ ພົງສາວະດານລາວໄດ້ຂຽນເອົາໄວ້ຄືແນວນັ້ນ.

ເຫັນໄດ້ວ່າ ການກຳເນີດເກີດຂຶ້ນຂອງໄທທືນຫລືໄທເຫລົ້າເຈືອງຍັງ

ບໍ່ທັນແຈ່ມແຈ້ງເທື່ອ ເມື່ອອີງໃສ່ການວິເຄາະຂອງນັກວິທະຍາສາດທີ່ວ່ານັ້ນ ກໍຈະເກີດມີຄຳຖາມຂຶ້ນວ່າ " ກ່ອນນີ້ 3.000 ປີ ມີມະນຸດເຜົ່າພັນໃດໄດ້ສາງໄຫຫີນຂຸມນີ້ຂຶ້ນມາ ? ".

ຖ້າອີງໃສ່ພົງສາວະດານລາວວ່າ " ໄຫຫີນແມ່ນໄດ້ສາງຂຶ້ນສະໄໝຂຸນເຈືອງ " ອາດພໍຈະເປັນໄປໄດ້ ເພາະຫຍັງ? ເພາະສະໄໝຂຸນເຈືອງກໍຄືສະໄໝຂອມ ຮ່ອງຮອຍແຕ່ງອະລິຍະທັມທີ່ສະໄໝຂອມຮຸ່ງເຮືອງຢູ່ແຖບດິນແຫລມທອງແຕ່ງນີ້ກໍໄດ້ຢັ້ງຢືນເປັນສັກຂີພະຍານໃຫ້ຄົນຮຸ່ນເຮົາດຽວນີ້ເຫັນແລ້ວວ່າ ພວກຂອມນີ້ມີຄວາມເກັ່ງກ້າສາມາດ ສ້າງວັດວາອາຮາມຕາມແບບສະບັບຂອມຂຶ້ນຢູ່ຫລາຍທີ່ຫລາຍແຫ່ງຢ່າງວິຈິດພິດສະດານ. ໝາຍຄວາມວ່າ " ເໜືອຄວາມສາມາດຂອງຄົນຍຸກນັ້ນແທ້ໆ ... " ແຕ່ຂອມເຮັດໄດ້ ເຊັ່ນຢູ່ລາວມີວັດພູຈຳປາສັກ ມີຢູ່ໄທ.. ຢູ່ກຳປູເຈຍມີອົງກໍວັດ ແລະ ທີ່ອື່ນໆ...

ດັ່ງນັ້ນ ຈຶ່ງພໍສະຫລຸບໄດ້ວ່າ " ໄຫຫີນ ຫລື ໄຫເຫລົ້າເຈືອງນັ້ນ ແມ່ນໄດ້ສາງຂຶ້ນສະໄໝເຈືອງຢ່າງແນ່ນອນ ! ".

ເລື່ອງທີ່ວ່າ ມີວິທີສາງຄືແນວໃດ ? ສາງເພື່ອເຮັດຫຍັງນັ້ນ ແມ່ນໄດ້ກ່າວຢູ່ພາກ 4 ນັ້ນແລ້ວ.

## ລຳດັບເຊື້ອເຈົ້າວົງກະສັດ
### ທ້າວເທົ້າ ຂຸນຫລວງ ກອນມີແຂ ແລະ
### ເຈົ້າແຂວງທີ່ປົກຄອງ ເມືອງພວນແຂວງຊຽງຂວາງ

**ເທົ່າ**ທີ່ໄດ້ສຶກສາຄົ້ນຄວ້າຂອກຫາຕຳນານເອກະສານທີ່ບັນທຶກ

ເອົາໄວ້ແຕ່ລະຍຸກແຕ່ລະສະໄໝ ແລ້ວນຳເອົາມາຮຽບຮຽງໃຫ້ຕໍ່ເນື່ອງຕາມຂັ້ນຕອນ ເຫັນວ່າ ເອກະສານແຕ່ລະຍຸກແຕ່ລະສະໄໝ ມີບາງອັນບໍ່ຄືກັນ ທັງຂາດບັ້ນຂາດຕອນ ທັງນີ້ ກໍເພາະວ່າ ພື້ນແຜ່ນເລື່ອງລາວທີ່ຂຽນ ແລະ ກ່າວກ່ຽວກັບເມືອງປະກັນ ຫລື ເມືອງພວນ ຫລື ເມືອງແຫ່ງເຈືອງ ຫລື ເມືອງພວນແຂວງຊຽງຂວາງນັ້ນ ມີທັງຄວາມເປັນຈິງ ມີທັງເທບນິຍາຍ ແລະ ມີທັງເປັນແບບນິທານປະຣຳປະຣາ ເຊິ່ງຕ້ອງໃຊ້ເວລາແຍກແຍະ ເພື່ອລຳດັບເຫດການເລື່ອງລາວທີ່ຜ່ານມາໃຫ້ເປັນຂັ້ນເປັນຕອນ.

ພວກຂ້າພະເຈົ້າໄດ້ລຳດັບເຊື້ອເຈົ້າວົງກະສັດ ທ້າວເຫີ ຂ້າຫລວງໃຫຍ່ ກອມມີແຊ ເລຊີດັງ ແລະ ເຈົ້າແຂວງທີ່ປົກຄອງແຂວງຊຽງຂວາງເປັນແຕ່ລະຍຸກແຕ່ລະສະໄໝ ເພື່ອງ່າຍແກ່ການອ່ານ ແລະ ການສຶກສາຄົ້ນຄວ້າໃນຂັ້ນຕໍ່ໄປດັ່ງນີ້.

## ກ. ສະໄໝການປົກຄອງດ້ວຍເຊື້ອພະຍາຣາຊາ

ປີ ຄ.ສ 729 (ພ.ສ 1272) 1- ທ້າວເຈືອງ ຫລື ຂຸນເຈືອງ

ປີ ຄ.ສ 1.239 (ພ.ສ 1782) 2- ເຈົ້າຄຳພົງ

ປີ ຄ.ສ 1.300 (ພ.ສ 1843) 3- ເຈົ້າຄຳຍົກ ຫລື ເຈົ້າຂຽວຄຳຍໍ

ປີ ຄ.ສ 1.322 (ພ.ສ 1865) 4- ເຈົ້າລານຄຳກອງ ຫລື ພະເຈົ້າອິດສະຫລະເຊດຖາ (1)

ປີ ຄ.ສ 1.351 (ພ.ສ 1894) 5- ຂຸນເຈັດເຈືອງ

ບໍ່ປາກົດປີ ຄ.ສ ແລະ ພ.ສ 6- ເຈົ້າເຈັດຈອນ

" 7- ເຈົ້າເຈັດຈອດ

" 8- ເຈົ້າເຈັດຈິວ

" 9- ເຈົ້າເຈັດຈັນ

" 10- ເຈົ້າຍອດຍໍຄຳ

| | |
|---|---|
| ບໍ່ປາກົດປີ ຄ.ສ ແລະ ພ.ສ | 11- ເຈົ້າຍີ່ ຫລື ພະຍິຫີນ |
| " | 12- ເຈົ້າພະຄື |
| " | 13- ເຈົ້າຄຳລຸນ |
| " | 14- ເຈົ້າຄຳເຜີງ |
| " | 15- ເຈົ້າຄຳຂອດ |
| " | 16- ເຈົ້າຄຳຮອງ |
| " | 17- ເຈົ້າຄຳແຈດ |
| " | 18- ເຈົ້າຄຳຝັ້ນ |
| " | 19- ເຈົ້າຄຳຜົມ |
| " | 20- ເຈົ້າຄຳຫີນ |
| " | 21- ເຈົ້າຄຳຕິດສະ |
| " | 22- ເຈົ້າຄຳຄອນ |
| " | 23- ເຈົ້າຄຳລ້ອນ |
| " | 24- ເຈົ້າຄຳໜ້າ |
| " | 25- ເຈົ້າຄຳທ້າວ |
| " | 26- ເຈົ້າຄຳເຄົ້າ |
| ປີ ຄ.ສ 1372 (ພ.ສ 1915) | 27- ເຈົ້າຄຳອຸ່ນເມືອງ |
| ບໍ່ປາກົດປີ ຄ.ສ ແລະ ພ.ສ | 28- ເຈົ້າຄຳອ່ອນ |
| ປີ ຄ.ສ 1561 (ພ.ສ 2104) | 29- ເຈົ້າຄຳດ່ອນ ຫລື ຄຳຄອນ |
| ປີ ຄ.ສ 1563 (ພ.ສ 2106) | 30- ພະຍາຜ້າຂາວ |
| ປີ ຄ.ສ 1600 (ພ.ສ 2143) | 31- ເຈົ້າຄຳສັ້ນ |
| ບໍ່ປາກົດປີ ຄ.ສ ແລະ ພ.ສ | 32- ເຈົ້າຄຳຫີງ |
| " | 33- ເຈົ້າຄຳກິວົງ |

| | |
|---|---|
| ປີ ຄ.ສ 1637 (ພ.ສ 2180) | 34 - ເຈົ້າຄຳລ້ອນ |
| ບໍ່ປາກົດປີ ຄ.ສ ແລະ ພ.ສ | 35 - ເຈົ້າຄຳເຄືອງ |
| " | 36 - ເຈົ້າຄຳພຸດທາ |
| " | 37 - ເຈົ້າຄຳສັດທາ |
| " | 38 - ເຈົ້າບຸນລັງໄທ |
| " | 39 - ເຈົ້າບຸນລອດ |
| " | 40 - ເຈົ້າບຸນຄົງ |
| " | 41 - ເຈົ້າຄຳມະເທໂວ |
| " | 42 - ເຈົ້າບຸນຈັນ |
| " | 43 - ເຈົ້າຄຳອຸ່ນເມືອງ |
| ປີ ຄ.ສ 1701 (ພ.ສ 2244) | 44 - ເຈົ້າອົງຫລໍ່ |
| ປີ ຄ.ສ 1729 (ພ.ສ 2272) | 45 - ເຈົ້າອົງສີພົມ |
| ປີ ຄ.ສ 1731 (ພ.ສ 2274) | 46 - ເຈົ້າໜໍ່ເມືອງ |
| ປີ ຄ.ສ 1732 (ພ.ສ 2275) | 47 - ເຈົ້າອິນພູ |
| ປີ ຄ.ສ 1752 (ພ.ສ 2295) | 48 - ເຈົ້າຊຽງ |
| ປີ ຄ.ສ 1753 (ພ.ສ 2296) | 49 - ເຈົ້າອິ່ງ |
| ປີ ຄ.ສ 1778 (ພ.ສ 2321) | 50 - ເຈົ້າສານ |
| ປີ ຄ.ສ 1798 (ພ.ສ 2341) | 51 - ເຈົ້າໂປ້ ຫລື ພະເຈົ້າອິດສະຫລະ ຂຸດຖາ ( 2 ) |
| ປີ ຄ.ສ 1816 (ພ.ສ 2359) | 52 - ເຈົ້າສຸທະກະສຸວັນນະກຸມານ ຫລື ເຈົ້ານອຍ |
| ປີ ຄ.ສ 1833 (ພ.ສ 2376) | 53 - ເຈົ້າອັນຕິ |

## ໒. ສະໄໝຝຣັ່ງເສດປົກຄອງລາວ

ປີ ຄ.ສ 1893(ພສ 2436)54 -DELINAUD ຂ້າຫຼວງໃຫຍ່ປະຈໍາເມືອງພວນ

ປີ ຄ.ສ 1902(ພສ 2445)55 -GRAND "

ປີ ຄ.ສ 1904(ພສ 2447)56 -LE JEUNE "

ປີ ຄ.ສ 1906(ພສ 2449)57 -MORIN "

ປີ ຄ.ສ 1909(ພສ 2452)58 -ELMERICH ຜູ້ຕາງໜ້າລັດຖະບານຝຣັ່ງ

ປີ ຄ.ສ 1910(ພສ 2453) 59 -SALABELLE "

ປີ ຄ.ສ 1912(ພສ 2455)60 -MEROUD "

ປີ ຄ.ສ 1914(ພສ 2457) 61 -NIEWENKLUSKI "

ປີ ຄ.ສ 1916(ພສ 2459) 62 -BARTHELEMY ກອມມີແຊຝຣັ່ງ

ປີ ຄ.ສ 1920(ພສ 2463) 63 -DEMASH "

ປີ ຄ.ສ 1922(ພສ 2465) 64 -SHILONG "

ປີ ຄ.ສ 1924(ພສ 2467) 65 -DAUGEARD "

ປີ ຄ.ສ 1930(ພສ 2473) 66 -ADRIENROQUES ເຣຊີດັງຝຣັ່ງ

ປີ ຄ.ສ 1932 (ພສ 2475)67 -FORTUNRE (ຝຣັ່ງດໍາ) "

ປີ ຄ.ສ 1933 (ພສ 2476)68 -LOUPY "

ປີ ຄ.ສ 1934 (ພສ 2477) 69 -DE MAISTRE "

ປີ ຄ.ສ 1935 (ພສ 2478)70 -EMMANUELLY "

ປີ ຄ.ສ 1936 (ພສ 2479)71 -PARIS "

ປີ ຄ.ສ 1937 (ພສ 2480)72 -DAVID BEAULIEU "

ປີ ຄ.ສ 1944 (ພສ 2487)73 -SALAMON "

## ໓. ສະໄໝຝຣັ່ງ-ອາເມລິກາປົກຄອງລາວ

ປີ ຄ.ສ 1945(ພ.ສ 2488) 74- ເຈົ້າແຂວງຄໍາເຫລັກ ແຕ່ງຕັ້ງເປັນ

ເຈົ້າແຂວງ ໂດຍແນວລາວອິດສະຫຼະ ຖືເອົາໂອກາດຍຶດອຳນາດ ຢູ່ແຂວງ ຊຽງຂວາງ.

ປີ ຄ.ສ 1946 (ພ.ສ) 2489) 75- ເຈົ້າແຂວງສາຍຄຳ ຝຣັ່ງກັບມາຍຶດເອົາລາວເປັນເທື່ອທີ 2 ແລ້ວແຕ່ງຕັ້ງເຈົ້າສາຍຄຳ ເປັນເຈົ້າແຂວງຊຽງຂວາງເປັນເວລາດົນເຖິງ 10 ກວ່າປີ

## ໑. ສະໄໝຊຽງຂວາງເປັນເຂດປົດປ່ອຍ

ຕອນເຊົ້າວັນທີ 01.1.1961 ຂະບວນການຕໍ່ສູ້ກູ້ຊາດ (ແນວລາວຮັກຊາດ) ໄດ້ຮ່ວມສຳພັນກັບຂະບວນການ ລັດຖະປະຫານທີ່ຮັກຊາດ ຢູ່ນະຄອນຫລວງວຽງຈັນ ໃນເມື່ອບໍ່ສາມາດຈະຕັ້ງຢູ່ນະຄອນຫລວງວຽງຈັນໄດ້ແລ້ວ ໄດ້ເຄື່ອນທັບຈາກວຽງຈັນມຸ່ງໜ້າຂຶ້ນສູ່ແຂວງຊຽງຂວາງ ເພື່ອຮ່ວມສຳພັນກັບກຳລັງແນວລາວຮັກຊາດ ປົດປ່ອຍເອົາທົ່ງໄຫຫີນ ແລະ ປົດປ່ອຍທົ່ວແຂວງຊຽງຂວາງ ຈາກນັ້ນ ແຂວງຊຽງຂວາງໄດ້ກາຍເປັນເຂດປົດປ່ອຍ ແລະ ສ້າງເປັນບ່ອນທີ່ຕັ້ງຂອງລັດຖະບານປະສົມຊົ່ວຄາວ ຫລັງຈາກນັ້ນທັງ 2 ກຳລັງຮ່ວມກັນປົກປັກຮັກສາ ແລະ ພັດທະນາ.

ການນຳພາ ແລະ ການປົກຄອງຕົວຈິງ ແມ່ນເປັນ 2 ລະບົບຄື: ລະບົບການນຳພາ ແມ່ນທ່ານ ດາເຫດທານີ ເປັນເລຂາພັກ ເປັນຮອງປະທານແນວແຂວງ ທ່ານ ເຢຍວີເລົາເບຼຍຢາວ ເປັນປະທານແນວ ເປັນຮອງເລຂາພັກ.

ລະບົບການປົກຄອງແມ່ນ ເປັນອຳນາດການປົກຄອງປະສົມ ລະຫວ່າງ ກຳລັງຂອງແນວລາວຮັກຊາດ ກັບກຳລັງເປັນກາງຂອງສະເດັດເຈົ້າສຸວັນນະພູມມາ.

ປີ ຄ.ສ 1961(ພ.ສ 2504)76 - ເຈົ້າແຂວງຈັນປາວ ວັນທານຸວົງ (ເປັນເຈົ້າແຂວງ ) ສັງກັດກຳລັງເປັນກາງ ທ່ານລໍຟູງ ເປັນຮອງເຈົ້າແຂວງສັງກັດກຳລັງແນວລາວຮັກຊາດ.

ປີ ຄ.ສ 1965(ພ.ສ 2508)77 - ເຈົ້າແຂວງສິມຫວົງ ແສນສະຖິດ ເປັນເຈົ້າແຂວງ ແລະ ນິພະນັກງານຂອງແນວຈຳນວນຫລາຍເຂົ້າປະສົມ.

ປີ ຄ.ສ 1974(ພ.ສ2517)78 - ທ່ານ ຢົງເຢຍຢາ ເປັນເຈົ້າແຂວງຄົນຂອງແນວລາວຮັກຊາດ ພ້ອມກັນນີ້ ທ່ານ ດາເທດທານີ ເປັນເລຂາພັກ ທັງເປັນປະທານແນວ.

## ຈ. ສະໄໝລະບອບໃໝ່ສາທາລະນະລັດ

ປີ ຄ.ສ 1976(ພ.ສ)2519)79 -ທ່ານອຸດົມ ອັດຕິຍະ ເປັນທັງເຈົ້າແຂວງ ແລະ ເລຂາພັກແຂວງ ຊຽງຂວາງ.

ປີ ຄ.ສ 1979 ( ພ.ສ 2522)80- ທ່ານຢົງເຢຍຢ່າ ເປັນເຈົ້າແຂວງອີກ

ປີ ຄ.ສ 1981 ( ພ.ສ 2524 )81 ທ່ານ ອຸດົມອັດຕິຍະ ທັງເປັນເລຂາ ທັງເປັນເຈົ້າແຂວງ.

ປີ ຄ.ສ 1988(ພ.ສ)2531)82 - ເຈົ້າແຂວງຄຳປານ ພິລາວົງ ( ເປັນທັງເຈົ້າແຂວງ ແລະ ເປັນທັງເລຂາພັກແຂວງ )

ປີ ຄ.ສ 1991(ພ.ສ)2534)83 - ເຈົ້າແຂວງພູມີ ທິບພະວອນ ( ເປັນທັງເຈົ້າແຂວງ ແລະ ເລຂາພັກແຂວງ ) ຄົນປັດຈຸບັນ.

ໝາຍເຫດ : ປັດຈຸບັນເຈົ້າແຂວງຈັນປາວັນທານຸວົງ ເຈົ້າແຂວງສົມຫວັງ ແສນສະຖິດ ແລະ ທ່ານ ດາເທບທານີ ໄດ້ເສຍຊີວິດດ້ວຍໂຣກຊະຣາ ເຈົ້າແຂວງປົງເປຍ ພັກຜ່ອນກິນເບ້ຍບຳນານ ສ່ວນທ່ານ ອຸດົມ ຂັດຕິຍະໄດ້ຂຶ້ນເປັນກຳມະການກົມການເມືອງສູນກາງພັກ ທັງເປັນປະທານສູນກາງແນວລາວສ້າງຊາດຊີ້ນຳວຽກງານມະຫາຊົນຂັ້ນສູນກາງ ທ່ານ ຄຳປານ ພິລາວົງ ເປັນກຳມະການສູນກາງພັກ ເປັນເຈົ້າຄອງກຳແພງນະຄອນຫລວງວຽງຈັນ.

# ໜັງສືພາກທີໜຶ່ງ

# ອະທິບາຍແຜນວາດ ແລະ ຊື່ເມືອງນະຄອນ

## ກ. <u>ແຜນວາດທີ່ໄດ້ເອົາປະກອບໃສ່ປື້ມ</u> :

1. ແຜນວາດທີໜຶ່ງ ຢູ່ຕໍ່ໜ້າ 5 ໄດ້ມາຈາກຕຳນານເກົ່າແກ່

2. ແຜນວາດທີສອງ ຢູ່ຕໍ່ໜ້າ12 ອີງໃສ່ຕຳນານເກົ່າແກ່ ແລະ ການອ່ານຕຳນານ ແລ້ວວາດຕາມການຄາດຄິດ ເພື່ອໃຫ້ຜູ້ອ່ານເຂົ້າໃຈງ່າຍຂຶ້ນ.

3. ແຜນວາດສາມ ຢູ່ຕໍ່ໜ້າ 21 ກໍເຊັ່ນດຽວກັບແຜນວາດທີ 2

4. ແຜນວາດທີສີ່ ຢູ່ຕໍ່ໜ້າ42 ກໍເຊັ່ນດຽວກັບແຜນວາດທີ 3

5. ແຜນວາດທີຫ້າ ຢູ່ຕໍ່ໜ້າ 8 7 ເປັນແຜນວາດອອກມາຈາກແຜນທີ່ສະໄໝໃນປັດຈຸບັນ.

## ຂ. <u>ຊື່ເມືອງນະຄອນ</u> :

| <u>ຊື່ແຕ່ກ່ອນ</u> | <u>ຊື່ປັດຈຸບັນ</u> | ຢູ່ |
|---|---|---|
| 1. ຊຽງຂວັນ, ປະກັນ, ເມືອງພວນ,ຕຮັນນິງ | ຂ. ຊຽງຂວາງ | ຢູ່ລາວ |

| ຊື່ແຕ່ກ່ອນ | ຊື່ປັດຈຸບັນ | ຢູ່ |
|---|---|---|
| 2. ຊວາ,ຊຽງທອງ | ຂ. ຫລວງພະບາງ | ຢູ່ລາວ |
| 3. ຄ່າວຽງ | ມ.ຄ່າບ້ານບານ | ຢູ່ລາວ |
| | | ຂ.ຊຽງຂວາງ |
| 4. ວຽງທອງ,ເມືອງ ຈັນທະບູລີ | ນະຄອນວຽງຈັນ | ນະຄອນຫຼວງຂອງລາວ. |
| 5. ລະໂວ້ | ລົບບູລີ | ຢູ່ໄທ |
| 6. ສວນຕານ,ນາຄອງ,ຂາລາຍ ຂາຊາຍ,ໄຊຍະນະຄອນ, ຊີຣາຍັງ, | ຊຽງຣາຍ | ຢູ່ໄທ |
| 7. ລ່າປາງ | ເຂລາງ | ຢູ່ໄທ |
| 8. ທະຣິພູນໄຊ | ລ່າພູນ | ຢູ່ໄທ |
| 9. ພຸກາມຍາວ,ພຸກົງກາມ | ພະເຢົາ | ຢູ່ໄທ |
| 10.ລາວຈົກ, ໂຍນົກ,ລານນາ | ຊຽງໃຫມ່ | ຢູ່ໄທ |
| 11.ເງິນຍາງ | ຊຽງແສນ | ຢູ່ໄທ |
| 12. ກາຫລົງ,ເມືອງແຖນ ( ຢູ່ລາວ ) | ເມືອງແຖງ | ຢູ່ຫວຽດນາມ |

# ເອກະສານອ້າງອີງ


❶ ປື້ມພົງສາວະດານລາວ ລິດຈະນາໂດຍ ມະຫາສີລາ ວີຣະວົງ............................. 1957

❷ ປື້ມເລົ່າເລື່ອງ ລາວ - ໄທ ລິດຈະນາໂດຍ ອູ່ຄຳ ພົມວົງສາ ..................................1967

❸ ປື້ມພົງສາວະດານລາວ ລິດຈະນາໂດຍ ມະຫາສີລາ ວີຣະວົງ ..............................1973

❹ ປື້ມພາສາວັນນະຄະດີ ແລະ ວັດທະນະທຳ ຕາເວັນອອກ(**Langue Litterature Culture Orientale**) ລິດຈະນາໂດຍ ສ. ເດຊວົງສາ 1974

❺ ປື້ມປະຫວັດສາດ ສິລະປະ ແລະ ສະຖາປັດຕະຍະກຳສິນລາວ ລິດຈະນາໂດຍ ບຸນເຮງ ບົວສີແສງປະເສີດ 1991

❻ ປະຫວັດສາດເມືອງພວນ ລິດຈະນາໂດຍ ພູມີ ວົງວິຈິດ .......................................1994




ແຂວງຊຽງຂວາງມີ 6 ເມືອງ 538 ບ້ານ 27.106 ຄອບຄົວ ພົນລະເມືອງ 186.000 ຄົນ (ຍິງ 91.000 ຄົນ ) ລາວລຸ່ມ 60% ລາວສູງ 30% ລາວກາງ 10 %

ມີເນື້ອທີ່ 17.315 ກິໂລຕາແມັດ ສູງກວ່ານ້ຳທະເລ 1.200 ແມັດ ມີໄຫຫີນເທັນປູຮິຍະສະຖານບູຮານ ວັດຖຸທີ່ເກົ່າແກ່ ມີອາຍຸກວ່າ 3.000 ປີ.

ສະໄໝທຳການຕໍ່ສູ້ກູ້ຊາດ ແຂວງຊຽງຂວາງແມ່ນແຂວງທີ່ມີ ການສູ້ຮົບດຸເດືອດຂ້ຽວຂາດທີ່ສຸດ ໂດຍສະເພາະ ປີ 1969-1970 ທົ່ວແຂວງຊຽງຂວາງ ບໍ່ມີເຮືອນປະຊາຊົນພຽງແຕ່ຫລັງດຽວ...

- ພິມທີ່ໂຮງພິມຊາວໜຸ່ມ ຖະໜົນຫລວງພະບາງ ໂທ : 216338 - 215721 ຕູ້ ປ.ນ 2536